ສະຖາບັນຄົ້ນຄວ້າວິໄຈການພັດທະນາ
DRI
Development Research Institute

# ສະພາບການຄ້າຊາຍແດນ ຂອງ ສປປ ລາວ

## ກໍລະນີສຶກສາແຂວງບໍ່ແກ້ວ, ໄຊຍະບູລີ, ສະຫວັນນະເຂດ ແລະ ຈໍາປາສັກ



+856 21254826
https://dri.gov.la/
5th Floor MPI Building

2024

## ຄຳເຫັນ

ການສຶກສາສະພາບການຄ້າຊາຍແດນຖືເປັນວຽກບູລິມະສິດໜຶ່ງຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງປະເທດ, ໂດຍມູນຄ່າການຄ້າຂອງ ສປປ ລາວ ກວມປະມານ 105% ຂອງອັດຕາການຂະຫຍາຍຕົວໃນປີ 2022 ແລະ ສ່ວນໃຫຍ່ແມ່ນການຄ້າກັບບັນດາປະເທດໃນກຸ່ມອາຊຽນທີ່ກວມຫຼາຍກວ່າເຄິ່ງໜຶ່ງຂອງການຄ້າທັງໝົດ, ໃນນັ້ນ ການຄ້າທີ່ກວມຫຼາຍກ່ອນໝູ່ແມ່ນກັບປະເທດໄທ ກວມປະມານ 40% ຂອງການສົ່ງອອກທັງໝົດໃນປີ 2022 ເນື່ອງຈາກ ສປປ ລາວ ແລະ ໄທ ມີຊາຍແດນທີ່ເຊື່ອມຕໍ່ກັນຍາວກວ່າໝູ່ ແລະ ມີຫຼາຍດ່ານທີ່ເປີດໃຫ້ມີການໄປມາຫາສູ່ກັນ ທັງດ່ານສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີ; ນອກນັ້ນ ຍັງມີວັດທະນະທຳ ແລະ ພາສາທີ່ຄ້າຍຄືກັນ ຈຶ່ງສົ່ງຜົນໃຫ້ການຊື້ຂາຍແລກປ່ຽນສະດວກ ແລະ ງ່າຍ. ພ້ອມດຽວກັນນັ້ນ, ລັດຖະບານລາວກໍ່ໄດ້ສຸມໃສ່ການສົ່ງເສີມທາງກົງ ແລະ ທາງອ້ອມໃນການພັດທະນາການຄ້າຊາຍແດນລາວ-ໄທ ໂດຍການສ້າງພື້ນຖານໂຄງລ່າງ ແລະ ນະໂຍບາຍຕ່າງໆເພື່ອອຳນວຍຄວາມສະດວກໃຫ້ແກ່ການຄ້າຊາຍແດນ. ໃນທາງກົງກັນຂ້າມ, ເຖິງວ່າລັດຖະບານຈະມີນະໂຍບາຍສົ່ງເສີມການຄ້າຊາຍແດນກໍ່ຕາມ ແຕ່ຍັງມີປະກົດການການຄ້າຊາຍແດນທີ່ບໍ່ເປັນທາງການເກີດຂຶ້ນແຕ່ຍັງຂາດຂໍ້ມູນທີ່ຊັດເຈນເຖິງສັດສ່ວນ ແລະ ມູນຄ່າທີ່ສູນເສຍ ຈຶ່ງເປັນອຸປະສັກໜຶ່ງໃນການວາງນະໂຍບາຍທາງການຄ້າທີ່ແນ່ນອນ ແລະ ກ້າວໄປສູ່ການພັດທະນາເສດຖະກິດຂອງປະເທດ ກໍຄືຂອງບັນດາແຂວງທີ່ມີຊາຍແດນຕິດຈອດກັບປະເທດເພື່ອນບ້ານ. ດັ່ງນັ້ນ, ບົດຄົ້ນຄວ້າສະບັບນີ້ຈຶ່ງມີຈຸດປະສົງສຶກສາຜົນກະທົບທັງດ້ານບວກ ແລະ ຂໍ້ຄົງຄ້າງທີ່ເກີດຂຶ້ນໂດຍນຳໃຊ້ວິທີການວິໄຈແບບຄຸນນະພາບ (Qualitative research) ແລະ ແບບປະລິມານ (Quantitative research). ເນື້ອໃນຂອງບົດຄົ້ນຄວ້າສະບັບນີ້ ມີທັງໝົດ 06 ຈຸດປະສົງຕົ້ນຕໍຄື: 1) ສຶກສາຄຸນລັກສະນະຄົວເຮືອນ ແລະ ການດຳເນີນທຸລະກິດຂອງຄົວເຮືອນຕົວຢ່າງໃນຂອບເຂດຊາຍແດນຂອງແຂວງທີ່ສຶກສາ; 2) ສຶກສາບັນດາລາຍການສິນຄ້າຜ່ານແດນ; 3) ສຶກສາສິ່ງກີດຂວາງທາງການຄ້າທີ່ບໍ່ແມ່ນພາສີ-ອາກອນ; 4) ສຶກສາລະດັບການພົວພັນລະຫວ່າງການຄ້າຊາຍແດນຕໍ່ກັບຊີວິດການເປັນຢູ່ຂອງຄົວເຮືອນທີ່ອາໄສຢູ່ເຂດຊາຍແດນ; 5) ສຶກສາການພົວພັນລະຫວ່າງລາຍຮັບຈາກເງິນໂອນຕໍ່ກັບຊີວິດການເປັນຢູ່ຂອງຄົວເຮືອນທີ່ອາໄສຢູ່ເຂດຊາຍແດນ ແລະ 6) ສະຫຼຸບ ແລະ ຂໍ້ສະເໜີແນະທາງດ້ານນະໂຍບາຍເພື່ອອຳນວຍຄວາມສະດວກໃຫ້ແກ່ການຄ້າ ແລະ ການຫັນເຂົ້າສູ່ລະບົບ.

**ຫົວໜ້າສະຖາບັນ**

**ຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ**

**ປອ. ສິດທິຣິດ ຣາຊະພົນ**

# ຄຳຂອບໃຈ

ສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ (ສຄອ) ຂໍສະແດງຄວາມຂອບໃຈເປັນຢ່າງສູງມາຍັງ ກະຊວງແຜນການ ແລະ ການລົງທຶນ ທີ່ໃຫ້ໂອກາດ ແລະ ສະໜັບສະໜູນ, ຕົກລົງເຫັນດີໃຫ້ ສຄອ ລົງເລິກສຶກສາບົດຄົ້ນຄວ້າພາຍໃຕ້ຫົວຂໍ້ "ສະພາບການຄ້າຊາຍແດນ" ກໍລະນີສຶກສາແຂວງບໍ່ແກ້ວ, ໄຊຍະບູລີ, ສະຫວັນນະເຂດ ແລະ ຈຳປາສັກ.

ສຄອ ຂໍສະແດງຄວາມຂອບໃຈຢ່າງຍິ່ງມາຍັງອົງການສະຫະປະຊາຊາດເພື່ອການພັດທະນາ ທີ່ສະໜອງທຶນຮອນ ແລະ ສະໜັບສະໜູນໃນການສຶກສາບົດຄົ້ນຄວ້າສະບັບນີ້, ພ້ອມທັງສະແດງຄວາມຂອບໃຈ ທ່ານ ນ. ປອ ທິບໄຕຍາ ສີດາວົງ, ຊ່ຽວຊານການຄົ້ນຄວ້າ ຈາກອົງການສະຫະປະຊາຊາດເພື່ອການພັດທະນາ ທີ່ເປັນນັກຄົ້ນຄວ້າຮ່ວມຕະຫຼອດການຄົ້ນຄວ້າຫົວຂໍ້ດັ່ງກ່າວຈົນສຳເລັດ.

ສຄອ ຂໍສະແດງຄວາມຂອບໃຈພະແນກແຜນການ ແລະ ການລົງທຶນ ແຂວງບໍ່ແກ້ວ, ໄຊຍະບູລີ, ສະຫວັນນະເຂດ ແລະ ຈຳປາສັກ ທີ່ສະໜອງຂໍ້ມູນຕ່າງໆທີ່ຕິດພັນກັບຫົວຂໍ້ການຄົ້ນຄວ້າດັ່ງກ່າວ ແລະ ອຳນວຍຄວາມສະດວກໃນການປະສານງານກັບພາກສ່ວນທີ່ກ່ຽວຂ້ອງໃນຂັ້ນແຂວງ, ເມືອງ ແລະ ບ້ານ ໃນການລົງເກັບກຳຂໍ້ມູນຄັ້ງນີ້ຈົນສຳເລັດ.

ສຸດທ້າຍນີ້, ຂໍສະແດງຄວາມຂອບໃຈມາຍັງຜູ້ປະກອບການ ແລະ ຄົວເຮືອນຕົວຢ່າງ ເຊິ່ງບົດຄົ້ນຄວ້າສະບັບນີ້ຈະບໍ່ສຳເລັດຕາມເປົ້າໝາຍທີ່ວາງໄວ້ໄດ້ ຖ້າຫາກປາດສະຈາກການຮ່ວມມືຈາກຄອບຄົວຕົວຢ່າງ ແລະ ບັນດາບໍລິສັດຕ່າງໆພາຍໃນ 04 ແຂວງກໍລະນີສຶກສາ ທີ່ສະຫຼະເວລາອັນມີຄ່າໃນການໃຫ້ສຳພາດ ແລະ ສະໜອງຂໍ້ມູນໃຫ້ບົດຄົ້ນຄວ້າສະບັບນີ້ມີເນື້ອໃນຄົບຖ້ວນ ແລະ ສົມບູນ, ລວມທັງບັນດາພະນັກງານໃນ ສຄອ ທີ່ໃຫ້ການຮ່ວມມື ແລະ ສະຫຼະເວລາໃນການລົງເລິກຄົ້ນຄວ້າບົດດັ່ງກ່າວຈົນສຳເລັດ.

**ທີມງານຄົ້ນຄວ້າ**

**ຜູ້ຊີ້ນຳ**

| | |
|---|---|
| ທ່ານ ປອ ສິດທິຣົດ ຣາຊະພົນ | ຫົວໜ້າສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ |
| ທ່ານ ນາງ ສີສະຫວັນ ດີດາຣາວົງ | ຮອງຫົວໜ້າສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ |

**ຄະນະບັນນາທິການ ແລະ ຮຽບຮຽງ**

| | |
|---|---|
| ທ່ານ ປອ ສິດທິຣົດ ຣາຊະພົນ | ຫົວໜ້າສະຖາບັນຄົ້ນຄວ້າ ວິໄຈການພັດທະນາ ແລະ ສູນຝຶກອົບຮົມ |
| ທ່ານ ນາງ ສີສະຫວັນ ດີດາຣາວົງ | ຮອງຫົວໜ້າສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ |

**ຜູ້ຊ່ວຍຂຽນ ແລະ ນັກຄົ້ນຄວ້າ**

| | |
|---|---|
| ທ່ານ ນາງ ອຸລາພອນ ເຜືອງສະຫວັນ | ຫົວໜ້າພະແນກຄົ້ນຄວ້ານະໂຍບາຍເສດຖະກິດ |
| ທ່ານ ລັດຕະພົງ ເມກດາລາ | ຮອງຫົວໜ້າພະແນກຄົ້ນຄວ້ານະໂຍບາຍເສດຖະກິດ |
| ທ່ານ ນິລັງກອນ ນາມໂພໄຊ | ຮອງຫົວໜ້າພະແນກຄົ້ນຄວ້ານະໂຍບາຍເສດຖະກິດ |
| ທ່ານ ນາງ ສຸກສັນ ວິໄລລັດ | ວິຊາການພະແນກຄົ້ນຄວ້ານະໂຍບາຍເສດຖະກິດ |

**ທີມງານອອກແບບ**

| | |
|---|---|
| ທ່ານ ນິລັງກອນ ນາມໂພໄຊ | ຮອງຫົວໜ້າພະແນກຄົ້ນຄວ້ານະໂຍບາຍເສດຖະກິດ |
| ທ່ານ ໄພນິດ ຄຳວິລາ | ວິຊາການພະແນກຄົ້ນຄວ້ານະໂຍບາຍເສດຖະກິດ |
| ທ່ານ ນາງ ພອນລາວັນ ເທບສີເມືອງ | ວິຊາການພະແນກຄົ້ນຄວ້ານະໂຍບາຍເສດຖະກິດ |

**ກະກຽມໂດຍ:**

ສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ
ກະຊວງແຜນການ ແລະ ການລົງທຶນ
ທີ່ຢູ່ ນະຄອນຫຼວງວຽງຈັນ
ໂທລະສັບ: +856 21254826
ປີຈັດພິມ: 2024

## ສາລະບານ


**I. ພາກສະເໜີ ........ 1**

1.1. ຄວາມເປັນມາ ........ 1

1.2. ຈຸດປະສົງການຄົ້ນຄວ້າ ........ 2

**II. ພາກທົບທວນເອກະສານ ........ 2**

2.1. ຄວາມໝາຍ ........ 2

2.2. ການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການຄ້າຊາຍແດນທີ່ບໍ່ເປັນທາງການ ........ 3

2.3. ຂະໜາດ ແລະ ປັດໄຈກຳນົດໃຫ້ມີການຂະຫຍາຍຕົວຂອງການຄ້າທີ່ບໍ່ເປັນທາງການ ........ 4

2.4. ຄຸນລັກສະນະການຄ້າຂອງ ສປປ ລາວ ........ 4

2.4.1. ສົມທຽບຄວາມໄດ້ປຽບດ້ານການຄ້າຂອງ ສປປ ລາວ ........ 4

2.4.2. ການຄ້າຊາຍແດນ ລາວ-ໄທ ........ 5

2.4.3. ສະພາບການຄ້າຂອງແຂວງ (4 ແຂວງທີ່ສຶກສາ) ........ 8

**III. ວິທີວິທະຍາ ........ 11**

3.1. ການອອກແບບການສຶກສາ ........ 11

3.2. ການຄັດເລືອກພື້ນທີ່ສຶກສາ ........ 11

3.3. ໄລຍະເວລາການຄົ້ນຄວ້າ ........ 13

3.4. ປະຊາກອນ ແລະ ການຄັດເລືອກກຸ່ມຕົວຢ່າງ ........ 13

3.5. ເຄື່ອງມືທີ່ໃຊ້ເກັບກຳຂໍ້ມູນ ........ 15

3.6. ເຄື່ອງມືທີ່ໃຊ້ໃນການວິເຄາະທາງເສດຖາມິຕິ ........ 15

**IV. ຜົນຂອງການຄົ້ນຄວ້າ ........ 16**

4.1. ຈຸດປະສົງ 1 ແລະ 2: ສຶກສາຄຸນລັກສະນະຄົວເຮືອນ ແລະ ການດຳເນີນທຸລະກິດຂອງຄົວເຮືອນຕົວຢ່າງໃນຂອບເຂດຊາຍແດນ ຂອງແຂວງກໍລະນີສຶກສາ ແລະ ບັນດາສິນຄ້າຜ່ານແດນຕົ້ນຕໍ. ........ 16

4.2. ຈຸດປະສົງ 3: ເພື່ອສຶກສາເບິ່ງສິ່ງກີດຂວາງທາງການຄ້າທີ່ບໍ່ແມ່ນພາສີ-ອາກອນ. ........ 21

4.3. ຈຸດປະສົງ 4 ແລະ 5: ເພື່ອສຶກສາເບິ່ງການພົວພັນລະຫວ່າງການຄ້າຊາຍແດນ ແລະ ການໂອນເງິນກັບບ້ານ ກັບສະພາບເສດຖະກິດຂອງຄົວເຮືອນ ຢູ່ບັນດາແຂວງເປົ້າໝາຍ. ........ 22

4.3.1. ຄ່າສະເລ່ຍ, ຄ່າຜັນປ່ຽນ, ຄ່າຕ່ຳສຸດ ແລະ ຄ່າສູງສຸດຂອງບັນດາຕົວປ່ຽນ ........ 22

4.3.2. ຜົນການຄາດປະມານຈາກແບບຈຳລອງ (OLS regression) ........ 25

4.4. ຈຸດປະສົງ 6: ສະເໜີແນະນະໂຍບາຍເພື່ອອຳນວຍຄວາມສະດວກທາງການຄ້າຊາຍແດນ ແລະ ຫັນການຄ້າຊາຍແດນເຂົ້າສູ່ລະບົບ. ........ 29

**V. ສະຫຼຸບ ........ 31**

## ສາລະບານຮູບສະແດງ


ຮູບສະແດງ 01: ສົມທຽບຄວາມໄດ້ປຽບດ້ານການຄ້າຂອງ ສປປ ລາວ 2010 ແລະ 2022 (RCA) .................... 5

ຮູບສະແດງ 02: ມູນຄ່າການຄ້າ ຂອງ ສປປ ລາວ .................................................. 6

ຮູບສະແດງ 03: ມູນຄ່າການຄ້າລະຫວ່າງ ສປປ ລາວ ແລະ ປະເທດໄທ .................................... 7

ຮູບສະແດງ 04: ຊ່ອງຫວ່າງຄວາມແຕກຕ່າງການບັນທຶກຂໍ້ມູນມູນຄ່າການຄ້າຈາກ ສປປ ລາວ ແລະ ປະເທດໄທ 2019 ຫາ 6 ເດືອນຕົ້ນປີ 2023 (ລ້ານໂດລາສະຫະລັດ) .................................... 7

ຮູບສະແດງ 05: ຄົວເຮືອນທີ່ເຮັດການຄ້າ, ປະເພດການຄ້າ ແລະ ແຫຼ່ງທຶນ .................................. 16

ຮູບສະແດງ 06: ຈຸດປະສົງ ແລະ ສະພາບຂອງຄົວເຮືອນທີ່ຂ້າມໄປປະເທດໄທ ............................ 17

ຮູບສະແດງ 07: : ສະພາບການຂ້າມໄປຊື້-ຂາຍຢູ່ປະເທດໄທ................................................ 20

ຮູບສະແດງ 08: ອັດຕາສ່ວນຄົວເຮືອນທີ່ໄປເຮັດວຽກຢູ່ໄທ .................................................. 21

ຮູບສະແດງ 09: ປະເພດທຸລະກິດຂອງຕົວຢ່າງຜູ້ປະກອບການ ............................................ 22

## ສາລະບານຕາຕະລາງ


ຕາຕະລາງ 01: ຊ່ອງຫວ່າງການເກັບກຳຂໍ້ມູນການຄ້າຈາກເບື້ອງ ສປປ ລາວ ແລະ ໄທ......8

ຕາຕະລາງ 02: ຂໍ້ມູນການຄ້າຂອງບັນດາແຂວງທີ່ສຶກສາ ......10

ຕາຕະລາງ 03: ຊ່ອງທາງການຄ້າຂ້າມແດນລາວ-ໄທ......12

ຕາຕະລາງ 04: ຈຳນວນສະແດງຈຳນວນກຸ່ມຕົວຢ່າງ......14

ຕາຕະລາງ 05: ລາຍຮັບສະເລ່ຍແບ່ງຕາມປະເພດທຸລະກິດ (ກີບຕໍ່ປີ)......18

ຕາຕະລາງ 06: ລາຍຮັບສະເລ່ຍແບ່ງຕາມໄລຍະທາງຂອງບ້ານ (ກີບຕໍ່ປີ)......19

ຕາຕະລາງ 07: ຈຳນວນ ແລະ ອັດຕາສ່ວນຄົວເຮືອນທີ່ໄປເຮັດວຽກຢູ່ໄທ......21

ຕາຕະລາງ 08: ມູນຄ່າລວມ ແລະ ມູນຄ່າສະເລ່ຍການໂອນເງິນກັບບ້ານຂອງຄົວເຮືອນທີ່ໄປເຮັດວຽກຢູ່ໄທແຍກຕາມແຂວງ......21

ຕາຕະລາງ 09: ຄ່າສະຖິຕິພັນລະນາຂອງຕົວປ່ຽນທີ່ນຳໃຊ້ເຂົ້າໃນການສຶກສາ (ແບບຈຳລອງ ທີ 1) ......23

ຕາຕະລາງ 10: ຄ່າສະຖິຕິພັນລະນາຂອງຕົວປ່ຽນທີ່ນຳໃຊ້ເຂົ້າໃນການສຶກສາ (ແບບຈຳລອງ ທີ 2). ......24

ຕາຕະລາງ 11: ຜົນຂອງການຄາດປະມານຈາກແບບຈຳລອງ 1......25

ຕາຕະລາງ 12: ຜົນຂອງການຄາດປະມານຈາກແບບຈຳລອງ 2......27

# I. ພາກສະເໜີ

## 1.1. ຄວາມເປັນມາ

ສປປ ລາວ ເປັນປະເທດກຳລັງພັດທະນາທີ່ບໍ່ມີທາງອອກສູ່ທະເລ, ຕັ້ງຢູ່ໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ ແລະ ຢູ່ຈຸດໃຈກາງບັນດາປະເທດລຸ່ມແມ່ນ້ຳຂອງ, ມີຊາຍແດນຕິດຈອດກັບ 5 ປະເທດ (ຈີນ, ໄທ, ຫວຽດນາມ, ກຳປູເຈຍ ແລະ ມຽນມາ), ການພັດທະນາເສດຖະກິດຍັງບໍ່ທັນສາມາດເພິ່ງພາຕົນເອງໄດ້ເຕັມສ່ວນ ຍັງເອື່ອຍອີງການນຳເຂົ້າຈາກປະເທດເພື່ອນບ້ານເປັນສ່ວນໃຫຍ່. ອີງຕາມຄຸນລັກສະນະພູມສັນຖານຂອງ ສປປ ລາວ ເຫັນວ່າຍັງມີຄວາມເສຍປຽບທາງດ້ານການຄ້າບໍ່ໜ້ອຍເມື່ອທຽບກັບບັນດາປະເທດໃນພາກພື້ນ ເນື່ອງຈາກຕົ້ນທຶນໃນການຜະລິດ, ການຂົນສົ່ງ ແລະ ການຄ້າຂາຍຍັງສູງຫຼາຍ ຖ້າທຽບໃສ່ປະເທດເພື່ອນບ້ານ ເພາະປັດໄຈການຜະລິດສ່ວນໃຫຍ່ແມ່ນນຳເຂົ້າຈາກຕ່າງປະເທດ, ໄລຍະເວລາໃນການຂົນສົ່ງແມ່ນດົນ ເສັ້ນທາງບໍ່ອຳນວຍຄວາມສະດວກ ແລະ ມີພູມສັນຖານທີ່ເປັນພູກວມອັດຕາສ່ວນສູງ, ຂອດຂັ້ນໃນການປະກອບເອກະສານຍັງຫຼາຍ. ເຖິງຢ່າງໃດກໍ່ຕາມ, ລັດຖະບານໄດ້ຖືເອົາວຽກງານການເຊື່ອມໂຍງເສດຖະກິດການຄ້າສາກົນ ແລະ ການຄ້າຊາຍແດນກັບບັນດາປະເທດໃກ້ຄຽງເປັນບູລິມະສິດໃນການສົ່ງເສີມທ່າແຮງທາງດ້ານທີ່ຕັ້ງຂອງລາວເພື່ອຂັບເຄື່ອນການຂະຫຍາຍຕົວເສດຖະກິດ ເປັນຕົ້ນແມ່ນການຍົກລະດັບການດຳລົງຊີວິດຂອງປະຊາຊົນທ້ອງຖິ່ນລຽບຕາມເຂດຊາຍແດນໃຫ້ນັບມື້ນັບດີຂຶ້ນ. ໃນນີ້, ເມື່ອເບິ່ງສາຍພົວພັນດ້ານການຄ້າຂອງ ສປປ ລາວ ແຕ່ອາດີດຈົນເຖິງປັດຈຸບັນເຫັນວ່າ ປະເທດໄທເປັນປະເທດທີ່ມີຊາຍແດນຕິດກັບ ສປປ ລາວ ຍາວທີ່ສຸດເມື່ອທຽບກັບບັນດາປະເທດອື່ນໆໃນອາຊີຕາເວັນອອກສ່ຽງໃຕ້. ເຖິງແມ່ນວ່າ, ສປປ ລາວ ແລະ ປະເທດໄທຈະມີລະບອບການເມືອງທີ່ແຕກຕ່າງກັນ ແຕ່ມີວັດທະນະທຳ ແລະ ພາສາທີ່ຄ້າຍຄືກັນ ພ້ອມທັງປະເທດໄທຍັງເປັນປະເທດຄູ່ຄ້າອັນດັບໜຶ່ງຂອງ ສປປ ລາວ ທີ່ມີມູນຄ່າການຄ້າ ກວມເອົາ 40% ຂອງມູນຄ່າການຄ້າທັງໝົດຂອງ ສປປ ລາວ[1]. ຄຽງຄູ່ກັນນັ້ນ, ຈະເຫັນໄດ້ວ່າ ມູນຄ່າການຄ້າລະຫວ່າງລາວ-ໄທ (ໃນການລາຍງານ) ຍັງມີຄວາມແຕກຕ່າງກັນ ທັງມູນຄ່າການສົ່ງອອກ ແລະ ນຳເຂົ້າ (ຕາມການລາຍງານຂອງຂໍ້ມູນທາງໄທ ແລະ ລາວ, ລາຍລະອຽດໃນຂໍ້ຕໍ່ໄປ) ເຮັດໃຫ້ນັກຄົ້ນຄວ້າປະເມີນວ່າ ຄວາມຕ່າງຂອງຕົວເລກມູນຄ່ານັ້ນ ສ່ວນໜຶ່ງແມ່ນມາຈາກການຄ້າຂາຍທີ່ບໍ່ເປັນທາງການ ທີ່ສາມາດຄ້າຂາຍຕາມຊາຍແດນທີ່ຕິດຈອດກັນສະດວກ ອາໄສການຂ້າມໄປມາທີ່ຖືເປັນວິຖີຊີວິດຂອງປະຊາຊົນສອງຝັ່ງ ເຊິ່ງເປັນສິ່ງທີ່ຍາກຕໍ່ການກວດກາ. ເຖິງແມ່ນວ່າໃນໄລຍະຜ່ານມາລັດຖະບານໄດ້ມີນະໂຍບາຍສົ່ງເສີມການຄ້າຊາຍແດນກໍ່ຕາມ ແຕ່ກໍ່ບໍ່ສາມາດຫຼີກລ້ຽງການຄ້າຊາຍແດນທີ່ບໍ່ເປັນທາງການໄດ້ ເນື່ອງຈາກຫຼາຍປັດໄຈທີ່ບໍ່ແມ່ນຈາກການກີດຂວາງດ້ານພາສີ ແຕ່ອາດແມ່ນຄວາມລຶ້ງເຄີຍ, ຄວາມສະດວກໃນການຂົນສົ່ງໄປມາ ແລະ ຍັງມີຫຼາຍຂອດຂັ້ນໃນການປະກອບເອກະສານຂໍອະນຸຍາດການຄ້າ ແລະ ຄວາມບໍ່ເຂົ້າໃຈໃນການປະຕິບັດລະບຽບຕ່າງໆ ແລະ ອື່ນໆ.

ຈາກສະພາບດັ່ງກ່າວຊີ້ໃຫ້ເຫັນເຖິງ ຄວາມທ້າທາຍໃນການຕິດຕາມສະພາບການຄ້າທັງໝົດ ເປັນຕົ້ນ ເຂດຊາຍແດນລາວ-ໄທທີ່ໄປມາຫາສູ່ກັນຕະຫຼອດ, ມີພາສາປາກເວົ້າ ແລະ ຮີດຄອງປະເພນີທີ່ຄ້າຍກັນ, ມີເຂດແດນທີ່ຕິດຈອດກັນ, ຍ່າງຂ້າມໄປມາໄດ້ສະດວກ ສິ່ງຜົນໃຫ້ການຕິດຕໍ່ຊື້ຂາຍແລກປ່ຽນແມ່ນງ່າຍ; ດັ່ງນັ້ນ ຜ່ານການທົບທວນບັນດາເອກະສານ ແລະ ການລົງໄປພົບປະກັບປະຊາຊົນ ເຫັນວ່າສິ່ງທ້າທາຍໜຶ່ງແມ່ນການເກັບກຳຂໍ້ມູນການຄ້າຊາຍແດນລາວ-ໄທຍັງບໍ່ເປັນລະບົບ ທັງມູນຄ່າການຄ້າ ແລະ ຈຳນວນກິດຈະກຳການຄ້າຊາຍແດນ ເນື່ອງຈາກການຄ້າຊາຍແດນທີ່ບໍ່ເປັນທາງການເກີດຈາກຫຼາຍປັດໄຈຕາມທີ່ໄດ້ກ່າວມາແລ້ວ ບອກທັງລະບົບການເກັບກຳຂໍ້ມູນທາງການຍັງບໍ່ສາມາດເກັບໄດ້ໝົດ ແລະ ບໍ່ມີຂໍ້ມູນລາຍງານປົກກະຕິ ຈຶ່ງເວົ້າໄດ້ວ່າຂໍ້ມູນທີ່ມີຢູ່ນັ້ນບໍ່ສາມາດສະແດງໃຫ້ເຫັນເຖິງຂໍ້ມູນການຄ້າຊາຍແດນຕົວຈິງ ຍ້ອນການລັກລອບຂົນສົ່ງສິນຄ້າຊົມໃຊ້ຜ່ານແດນຍັງມີຫຼາຍ ໂດຍສະເພາະໃນຮູບແບບຜ່ານບຸກຄົນໃນຂອບເຂດຊາຍແດນທີ່ເຂົ້າ-ອອກປະເທດໄທ ໂດຍຜ່ານຈຸດຜ່ານແດນ ຫຼື ດ່ານປະເພນີ

[1] ແຫຼ່ງຂໍ້ມູນ: ຂໍ້ມູນສະຫຼຸບໝົດປີ 2023, ກະຊວງອຸດສາຫະກຳ ແລະ ການຄ້າ, ຄິດໄລ່ໂດຍ ສຄອ

ແລະ ດ່ານທ້ອງຖິ່ນ ເຊິ່ງຂໍ້ມູນການຄ້າເຫຼົ່ານີ້ບໍ່ສາມາດຈົດບັນທຶກເຂົ້າໃນລະບົບຢ່າງເປັນທາງການ ເຮັດໃຫ້ເກີດມີຊ່ອງຫວ່າງໃນການບັນທຶກການເກັບກຳຂໍ້ມູນມູນຄ່າການຄ້າ ລະຫວ່າງ ສປປ ລາວ ແລະ ໄທ ທີ່ຍັງບໍ່ເປັນເອກະພາບກັນ. ສະນັ້ນ, ບົດຄົ້ນຄວ້າສະບັບນີ້ຈຶ່ງໄດ້ສຶກສາສະພາບການຄ້າຊາຍແດນລາວ-ໄທ ລວມທັງການຄ້າທີ່ບໍ່ເປັນທາງການ ພາຍໃນ 4 ແຂວງກໍລະນີສຶກສາ (ແຂວງບໍ່ແກ້ວ, ໄຊຍະບູລີ, ສະຫວັນນະເຂດ ແລະ ຈຳປາສັກ) ເພື່ອໃຫ້ຂໍ້ສະເໜີແນະດ້ານນະໂຍບາຍປະກອບສ່ວນເຂົ້າໃນການສະຫຼຸບແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 9 ໄລຍະກາງ-ທ້າຍສະໄໝ ແລະ ແຜນການ 5 ປີຄັ້ງຕໍ່ໄປ.

### 1.2. ຈຸດປະສົງການຄົ້ນຄວ້າ

ບົດຄົ້ນຄວ້າສະບັບນີ້ລວມມີ 6 ຈຸດປະສົງຄື:

- ຈຸດປະສົງທີ 1: ສຶກສາຄຸນລັກສະນະຄົວເຮືອນ ແລະ ການດຳເນີນທຸລະກິດຂອງຄົວເຮືອນຕົວຢ່າງໃນຂອບເຂດຊາຍແດນ ຂອງແຂວງກໍລະນີສຶກສາ;
- ຈຸດປະສົງທີ 2: ສຶກສາບັນດາລາຍການສິນຄ້າຜ່ານແດນຕົ້ນຕໍ;
- ຈຸດປະສົງທີ 3: ສຶກສາສິ່ງກີດຂວາງທາງການຄ້າທີ່ບໍ່ແມ່ນພາສີ ເຊິ່ງອາດເປັນສາເຫດເຮັດໃຫ້ເກີດມີການຄ້າຊາຍແດນທີ່ບໍ່ເປັນທາງການ;
- ຈຸດປະສົງທີ 4: ສຶກສາລະດັບການພົວພັນ ລະຫວ່າງ ການຄ້າຊາຍແດນຕໍ່ກັບຊີວິດການເປັນຢູ່ຂອງຄົວເຮືອນທີ່ອາໄສຢູ່ເຂດຊາຍແດນ;
- ຈຸດປະສົງທີ 5: ສຶກສາການພົວພັນລະຫວ່າງ ລາຍຮັບຈາກເງິນໂອນຕໍ່ກັບຊີວິດການເປັນຢູ່ຂອງຄົວເຮືອນທີ່ອາໄສຢູ່ເຂດຊາຍແດນ;
- ຈຸດປະສົງທີ 6: ສະເໜີແນະທາງດ້ານນະໂຍບາຍ ເພື່ອປັບປຸງການອຳນວຍຄວາມສະດວກໃຫ້ແກ່ການຄ້າ ແລະ ການຫັນເຂົ້າສູ່ລະບົບ.

## II. ພາກທົບທວນເອກະສານ

### 2.1. ຄວາມໝາຍ

ການຄ້າຊາຍແດນແມ່ນການເຮັດການຄ້າກັບບັນດາປະເທດໃກ້ຄຽງທີ່ມີຊາຍແດນຕິດຈອດກັນໂດຍການສົ່ງອອກ ແລະ ນຳເຂົ້າຜ່ານຈຸດຜ່ານແດນລະຫວ່າງປະເທດ ປະກອບມີ: ດ່ານສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີ ລວມທັງຈຸດຜ່ານແດນທີ່ບໍ່ເປັນທາງການ ເຊັ່ນ ລະຫວ່າງບ້ານຕໍ່ບ້ານ (NESDC, 2016). ໃນນີ້, ການຄ້າຊາຍແດນປະກອບມີການຄ້າທີ່ເປັນທາງການ ແລະ ບໍ່ເປັນທາງການໂດຍສະເພາະການຄ້າຂອງປະຊາຊົນທີ່ອາໄສຢູ່ລຽບຕາມເຂດຊາຍແດນໃນຂອບເຂດທົ່ວປະເທດ. DFT (2020) ໄດ້ນິຍາມວ່າ ການຄ້າຊາຍແດນແມ່ນຮູບແບບການຄ້າຂອງປະຊາຊົນທີ່ມີຖິ່ນຖານຢູ່ພາຍໃນແຂວງທີ່ມີຊາຍແດນຕິດກັບປະເທດໃກ້ຄຽງ. ການຄ້າຊາຍແດນແມ່ນເກີດຈາກການຂາດແຄນສິນຄ້າທີ່ຈຳເປັນຂອງປະຊາຊົນທີ່ອາໄສຢູ່ຕາມຊາຍແດນ ເປັນຕົ້ນແມ່ນການແລກປ່ຽນສິນຄ້າອຸປະໂພກ ແລະ ບໍລິໂພກທີ່ຈຳເປັນຕໍ່ການດຳລົງຊີວິດປະຈຳວັນ ທັງໃນຮູບແບບການແລກປ່ຽນລະຫວ່າງ ສິນຄ້າກັບສິນຄ້າ ແລະ ສິນຄ້າກັບເງິນຕາ. ໃນໄລຍະມໍ່ໆມານີ້, ພື້ນຖານໂຄງລ່າງດ້ານໂລຈິສຕິກໄດ້ຮັບການພັດທະນາຂຶ້ນ ເຮັດໃຫ້ເກີດມີການຂົນສົ່ງຮູບແບບທີ່ບໍ່ມີຊາຍແດນ ໂດຍສະເພາະແມ່ນການຄ້າໃນຮູບແບບອອນລາຍ ເຊິ່ງສົ່ງຜົນກະທົບໃຫ້ການຄ້າຊາຍແດນເລີ່ມປ່ຽນໄປເປັນໃນຮູບແບບທຸລະກິດຫຼາຍຂຶ້ນກວ່າເກົ່າ. OECD[2] ໄດ້ຊີ້ໃຫ້ເຫັນວ່າການຄ້າຂາຍສ່ວນໃຫຍ່ແມ່ນການແລກປ່ຽນສິນຄ້າ ແລະ ການບໍລິການ ລະຫວ່າງຜູ້ທີ່ຢູ່ອາໄສຖາວອນ ຫຼື ຜູ້ດຳເນີນທຸລະກິດນຳເຂົ້າ-

[2] ແຫຼ່ງຂໍ້ມູນ: https://www.kantox.com/en/glossary/cross-border-trade-cbt/ ເຂົ້າເຖິງ: 16 ພະຈິກ 2023

ສົ່ງອອກ ໂດຍຊໍາລະໃນຮູບແບບເງິນຕາທີ່ຄູ່ການຄ້າຕົກລົງກັນ ແຕ່ສ່ວນໃຫຍ່ຍັງອີງໃສ່ການວັດແທກຈາກເງິນໂດລາສະຫະລັດ ເພື່ອປະກອບສ່ວນເຂົ້າໃນການຄິດໄລ່ GDP (ມູນຄ່າການສົ່ງອອກ-ມູນຄ່າການນໍາເຂົ້າ). ໃນທົດສະວັດທີ່ຜ່ານມາໄດ້ມີການຄ້າຊາຍແດນດ້ານບໍລິການເກີດຂຶ້ນ ເຊິ່ງປະກອບມີການຂົນສົ່ງ, ການທ່ອງທ່ຽວ, ຄົມມະນາຄົມ, ການກໍ່ສ້າງ, ການເງິນ, ປະກັນໄພ ແລະ ອື່ນໆ. Aung (2009) ຄົ້ນພົບວ່າການຄ້າຊາຍແດນມີຄວາມສໍາຄັນຫຼາຍໃນການປະກອບສ່ວນຕໍ່ການພັດທະນາເສດຖະກິດ, ການຫຼຸດຜ່ອນຄວາມທຸກຍາກ ແລະ ສ້າງລາຍຮັບໃຫ້ແກ່ປະຊາຊົນທີ່ອາໄສຢູ່ລຽບຕາມຊາຍແດນ ແລະ ສາມາດສ້າງກາລະໂອກາດໃນການຜະລິດສິນຄ້າທີ່ຫຼາກຫຼາຍເພື່ອສົ່ງອອກ.

ສະຫຼຸບລວມແລ້ວ ໃນການຄົ້ນຄວ້ານີ້ແມ່ນໃຫ້ຄໍານິຍາມການຄ້າຊາຍແດນ ແມ່ນການຄ້າຂາຍໂດຍກົງ, ການຄ້າຂາຍຜ່ານຜູ້ຄ້າຄົນກາງ, ການຄ້າຂາຍຕໍ່ ແລະ ການຜ່ານບໍລິສັດນໍາເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ ຖືເປັນການຄ້າຂາຍຊາຍແດນ ໂດຍລົງເລິກ ປະຊາຊົນທີ່ຢູ່ລຽບຕາມຊາຍແດນເປັນຫລັກ.

## 2.2. ການອໍານວຍຄວາມສະດວກທາງດ້ານການຄ້າ ແລະ ການຄ້າຊາຍແດນທີ່ບໍ່ເປັນທາງການ

ຄວາມໝາຍແຄບການອໍານວຍຄວາມສະດວກດ້ານການຄ້າແມ່ນການສຸມໃສ່ແກ້ໄຂ ແລະ ປັບປຸງບັນຫາໂລຈິສຕິກ ເພື່ອເຄື່ອນຍ້າຍສິນຄ້າຜ່ານດ່ານ ຫຼື ຄວາມວ່ອງໄວ ແລະ ຄວາມສະດວກໃນຂັ້ນຕອນການດໍາເນີນເອກະສານຕ່າງໆທີ່ຕິດພັນກັບການຄ້າຊາຍແດນ. ມາເຖິງປັດຈຸບັນການອໍານວຍຄວາມສະດວກດ້ານການຄ້າໄດ້ ນິຍາມກວ້າງຂຶ້ນ ໂດຍແມ່ນການປັບປຸງປະສິດທິພາບດ້ານການບໍລິຫານ, ການຄຸ້ມຄອງ, ຂັ້ນຕອນຕ່າງໆ ແລະ ໂລຈິສຕິກຢູ່ດ່ານເຂົ້າ-ອອກສິນຄ້າ ແລະ ດ່ານພາສີ, ລວມທັງສະພາບແວດລ້ອມຕ່າງໆທີ່ຕິດພັນກັບການຄ້າ ຕະຫຼອດຮອດຄວາມໂປ່ງໃສຂອງການເກັບພັນທະພາສີ (Wilson & Mann, 2003). Wilson et al. (2005) ການອໍານວຍຄວາມສະດວກດ້ານການຄ້າແມ່ນມີຄວາມສໍາຄັນຫຼາຍສໍາລັບພາກທຸລະກິດການຄ້ານໍາເຂົ້າ-ສົ່ງອອກ ເຊິ່ງປະກອບມີຕົວຊີ້ວັດຕ່າງໆທີ່ແຕກຕ່າງກັນ. ໃນນັ້ນ, ປະກອບມີ 4 ມາດຕະການອໍານວຍຄວາມສະດວກດ້ານການຄ້າຕົ້ນຕໍ: 1) ພື້ນຖານໂຄງລ່າງຈຸດ ຫຼື ດ່ານເຂົ້າ-ອອກຂອງສິນຄ້າ ໂດຍປັບປຸງຄັງສິນຄ້າ ແລະ ຫຼຸດຜ່ອນຂອດຂັ້ນການປະກອບເອກະສານຕ່າງໆ; 2) ສະພາບແວດລ້ອມພາສີ ໂດຍການກໍານົດອັດຕາພາສີທີ່ຕໍ່າ ຫຼື ຍົກເວັ້ນພາສີ; 3) ສະພາບແວດລ້ອມດ້ານກົດລະບຽບ ແລະ 4) ພື້ນຖານໂຄງລ່າງທຸລະກິດແບບເອເລັກໂທຣນິກ ເຊິ່ງບັນດາມາດຕະການເຫຼົ່ານີ້ໄດ້ກໍານົດມາເພື່ອສະໜັບສະໜູນໃຫ້ແກ່ທຸລະກິດການຄ້າສະເພາະ ເພື່ອເຮັດໃຫ້ການນໍາເຂົ້າ-ສົ່ງອອກມີການຂະຫຍາຍຕົວດີຂຶ້ນເປັນກ້າວໆ. ເຖິງແມ່ນວ່າລັດຖະບານແຕ່ລະປະເທດໄດ້ມີນະໂຍບາຍໃນການອໍານວຍຄວາມສະດວກທາງດ້ານການຄ້າຫຼາຍປານໃດກໍ່ຕາມບໍ່ວ່າຈະເປັນການຫຼຸດຜ່ອນພາສີ, ຍຸບເລີກບາງຂອດຂັ້ນການປະກອບເອກະສານ ແລະ ອື່ນໆ ແຕ່ກໍ່ບໍ່ສາມາດຫຼີກລ້ຽງການຄ້າຊາຍແດນທີ່ບໍ່ເປັນທາງການໄດ້ ເຊິ່ງຫຼາຍບົດຄົ້ນຄວ້າກໍ່ໄດ້ຊີ້ໃຫ້ເຫັນເຖິງປະກົດການການຄ້າຊາຍແດນທີ່ຜິດກົດໝາຍທີ່ພົບເຫັນໃນບັນດາປະເທດຕ່າງໆ. ອີງຕາມ Aung (2009); Bouet et al. (2018); Morrissey et al. (2015) ໄດ້ນິຍາມວ່າການຄ້າຊາຍແດນທີ່ບໍ່ເປັນທາງການແມ່ນການລັກລອບຂົນສິນຄ້າຂ້າມແດນ. ການຄ້າຊາຍແດນບໍ່ເປັນທາງການມີ 2 ປະເພດຄື ການຄ້າຢາເສບຕິດຜ່ານແດນ ແລະ ການຂົນສົ່ງສິນຄ້າທີ່ບໍ່ປະຕິບັດຕາມລະບຽບກົດໝາຍທີ່ຕິດພັນກັບການຄ້າຂາອອກ-ຂາເຂົ້າ ເປັນຕົ້ນ ແມ່ນການຫຼີກລ້ຽງຂັ້ນຕອນການປະກອບເອກະສານອະນຸຍາດການຄ້າ ແລະ ການຊໍາລະຄ່າທໍານຽມຕ່າງໆໃຫ້ພາກລັດທີ່ຕິດພັນກັບການເພີ່ມຕົ້ນທຶນ ໂດຍສະເພາະແມ່ນການຫຼີກລ້ຽງການຊໍາລະພາສີ-ອາກອນ ແລະ ຄ່າທໍານຽມຕ່າງໆ ເຊິ່ງພົບເຫັນຢູ່ໃນທຸລະກິດທີ່ຂຶ້ນທະບຽນວິສາຫະກິດ ແລະ ທຸລະກິດທີ່ບໍ່ຂຶ້ນທະບຽນວິສາຫະກິດ. ແຕ່ເຖິງຢ່າງໃດກໍ່ຕາມ, Aung (2009) ໄດ້ສະແດງໃຫ້ເຫັນວ່າການຄ້າຊາຍແດນທີ່ບໍ່ເປັນທາງການໄດ້ສ້າງລາຍຮັບໃຫ້ແກ່ປະຊາຊົນຜູ້ທີ່ອາໄສຢູ່ຂອບເຂດບໍລິເວນຊາຍແດນ ແລະ ຍັງເປັນກາລະໂອກາດໃນການສ້າງລາຍຮັບໃຫ້ແກ່ຊົນເຜົ່າກຸ່ມນ້ອຍ.

## 2.3. ຂະໜາດ ແລະ ປັດໄຈກຳນົດໃຫ້ມີການຂະຫຍາຍຕົວຂອງການຄ້າທີ່ບໍ່ເປັນທາງການ

ໃນສະພາບປັດຈຸບັນເຫັນວ່າແນວໂນ້ມຂອງການຄ້າທີ່ບໍ່ເປັນທາງການແມ່ນເກີດຂຶ້ນຫຼາຍ ແລະ ຂະຫຍາຍຕົວສູງ ເຊິ່ງໜຶ່ງໃນປັດໄຈທີ່ກໍ່ໃຫ້ເກີດມີການຂະຫຍາຍຕົວຂອງການຄ້າທີ່ບໍ່ເປັນທາງການ (informal trade) ເພີ່ມຂຶ້ນໃນຫຼາຍຂົງເຂດທົ່ວໂລກນັ້ນແມ່ນມາຈາກຄວາມບໍ່ສົມດຸນຂອງການພັດທະນາທາງດ້ານເສດຖະກິດ-ສັງຄົມພາຍໃນປະເທດເອງ, ພ້ອມກັນນັ້ນ ຜົນກະທົບຈາກເສດຖະກິດພາຍນອກໃນເງື່ອນໄຂການເຊື່ອມໂຍງ-ເຊື່ອມຈອດດ້ານການຄ້າຊາຍແດນກໍ່ແມ່ນສ່ວນໜຶ່ງໃນການກໍ່ໃຫ້ເກີດມີການຄ້າທີ່ບໍ່ເປັນທາງການ.

ອີງຕາມຜົນຄົ້ນຄວ້າຂອງ Medina et al. (2017) ພົບວ່າປັດໄຈພາຍໃນທີ່ກໍ່ໃຫ້ເກີດມີການຄ້າທີ່ບໍ່ເປັນທາງການໃນຫຼາຍຂົງເຂດທົ່ວໂລກ ແມ່ນມາຈາກຄວາມບໍ່ສົມດຸນຂອງການພັດທະນາດ້ານເສດຖະກິດທີ່ເກີດມີຊ່ອງວ່າງທີ່ແຕກໂຕນກັນລະຫວ່າງຕົວເມືອງ ແລະ ຊົນນະບົດ, ຄວາມບໍ່ເທົ່າທຽມກັນດ້ານລາຍຮັບ ແລະ ອັດຕາການວ່າງງານທີ່ສູງ. ນອກຈາກນັ້ນ, ການຄ້າທີ່ບໍ່ເປັນທາງການຍັງໄດ້ຮັບຜົນກະທົບຈາກການປະຕິບັດນະໂຍບາຍທີ່ບໍ່ເປັນເອກະພາບກັນໃນບັນດາກິດຈະກຳທາງດ້ານເສດຖະກິດ ແລະ ຊ່ອງວ່າງດ້ານກົດໝາຍທີ່ບໍ່ສາມາດຄວບຄຸມທຸກກິດຈະກຳດ້ານເສດຖະກິດ ແລະ ເສດຖະກິດທີ່ເກີດຂຶ້ນໃໝ່ໄດ້ ໂດຍສະເພາະນະໂຍບາຍດ້ານພາສີ-ອາກອນ ແລະ ນະໂຍບາຍໃນການສົ່ງເສີມ-ຊຸກຍູ້ການຜະລິດ, ການຄ້າ ແລະ ການບໍລິການ. Jarreau et al., (2016) ໄດ້ອະທິບາຍໃຫ້ເຫັນເຖິງປັດໄຈພາຍນອກທີ່ມີຜົນກໍ່ໃຫ້ເກີດການຄ້າທີ່ບໍ່ເປັນທາງການນັ້ນ ແມ່ນມາຈາກຄວາມບໍ່ເທົ່າທຽມກັນດ້ານເສດຖະກິດ-ສັງຄົມ ຂອງບັນດາປະເທດທີ່ມີຊາຍແດນຕິດກັນ ແລະ ບັນດາປະເທດຄູ່ຄ້າທີ່ມີການຄ້າເພື່ອສະແຫວງຫາແຕ່ຜົນກຳໄລ ແລະ ສ້າງມູນຄ່າເພີ່ມທີ່ສູງຈາກການຄ້າທີ່ບໍ່ເປັນທາງການ. ອີງໃສ່ຂໍ້ມູນຂອງ OECD ສະແດງໃຫ້ເຫັນວ່າກຸ່ມປະເທດທີ່ກຳລັງພັດທະນາ ການຄ້າທີ່ບໍ່ເປັນທາງການແມ່ນກວມອັດຕາສ່ວນສູງທຽບໃສ່ GDP ກວ່າປະເທດປ່ຽນຜ່ານ ແລະ ປະເທດທີ່ພັດທະນາແລ້ວ ເປັນຕົ້ນ: ບັນດາປະເທດທີ່ກຳລັງພັດທະນາໃນອາຟຣິກາ ກວມເອົາອັດຕາສ່ວນ 42% ຂອງ GDP ໂລກ, ປະເທດໃນລາຕິນອາເມລິກາ ກວມເອົາ 40% ແລະ ປະເທດໃນອາຊີ ກວມເອົາ 35%, ສ່ວນບັນດາປະເທດປ່ຽນຜ່ານ ໄດ້ແກ່: ກຸ່ມປະເທດສະຫະພາບໂຊຫວຽດເກົ່າ ກວມເອົາ 25% ແລະ ກຸ່ມປະເທດຢູໂຣບຕອນກາງ ແລະ ຢູໂຣບຕາເວັນອອກ ກວມເອົາ 20%. ສຳລັບກຸ່ມປະເທດທີ່ມີອັດຕາທີ່ກວມໜ້ອຍກວ່າໝູ່ ແມ່ນກຸ່ມປະເທດທີ່ພັດທະນາແລ້ວໃນ OECD ກວມເອົາພຽງແຕ່ 12% ຂອງ GDP ໂລກ.

## 2.4. ຄຸນລັກສະນະການຄ້າຂອງ ສປປ ລາວ

### 2.4.1. ສົມທຽບຄວາມໄດ້ປຽບດ້ານການຄ້າຂອງ ສປປ ລາວ

ໃນໄລຍະມໍ່ໆມານີ້, ລັດຖະບານ ສປປ ລາວ ໄດ້ສຸມໃສ່ການພັດທະນາພື້ນຖານໂຄງລ່າງ ເພື່ອເຊື່ອມໂຍງ-ເຊື່ອມຈອດກັບເສດຖະກິດພາກພື້ນກໍ່ຄືສາກົນພາຍໃຕ້ນະໂຍບາຍເປີດປະເທດສູ່ສາກົນ (Landlocked to Land linked) ເຊິ່ງເບື້ອງຕົ້ນໄດ້ສຸມໃສ່ການພັດທະນາພື້ນຖານໂຄງລ່າງດ້ານຄົມມະນາຄົມ ແລະ ໂລຈິສຕິກ ເພື່ອອຳນວຍຄວາມສະດວກດ້ານການຄ້າ, ການເຊື່ອມໂຍງ, ການບໍລິການ, ການທ່ອງທ່ຽວ ແລະ ອື່ນໆ ໂດຍສະເພາະການສ້າງເສັ້ນທາງລົດໄຟລາວ-ຈີນ ເປັນຈຸດເຊື່ອມໂຍງທາງບົກທີ່ສະດວກກວ່າເກົ່າ ລະຫວ່າງອາຊຽນ ແລະ ສປ ຈີນ ແລະ ກຳລັງສຸມໃສ່ການພັດທະນາທ່າບົກ ເພື່ອເປັນສູນກາງການຄ່ຽນຖ່າຍສິນຄ້າ. ພາຍຫຼັງທີ່ ສປປ ລາວ ເປີດເສັ້ນທາງລົດໄຟລາວ-ຈີນ ເຮັດໃຫ້ການສົ່ງອອກຂອງ ສປປ ລາວ ໄປ ສປ ຈີນ ມີທ່າອ່ຽງທີ່ດີຂຶ້ນໂດຍສະເພາະແມ່ນສິນຄ້າກະສິກຳ,ຢາງພາລາ, ແຮ່ທາດ ແລະ ອື່ນໆ ແລະ ໄດ້ກາຍເປັນສູນກາງຜ່ານຂອງບັນດາສິນຄ້າຈາກປະເທດເພື່ອນບ້ານສູ່ ສປ ຈີນ.

ແຕ່ເຖິງຢ່າງໃດກໍ່ຕາມ, ເມື່ອສົມທຽບຄວາມໄດ້ປຽບທາງດ້ານການຄ້າຂອງ ສປປ ລາວ (Revealed Comparative Advantage: RCA) ເຫັນວ່າຄວາມອາດສາມາດໃນການແຂ່ງຂັນທາງການຄ້າບໍ່ມີການປ່ຽນແປງຫຼາຍໃນໄລຍະ 10 ກວ່າປີຜ່ານມາ (ລະຫວ່າງປີ 2010 ແລະ 2022) ດັ່ງຮູບສະແດງ 01. ສິນຄ້າສ່ວນໃຫຍ່ຍັງແມ່ນໃນກຸ່ມຊັບພະຍາກອນທຳມະຊາດ: ແຮ່ທາດ, ເຫຍື່ອໄມ້, ໄມ້, ຖ່ານ, ຢາງພາລາທຳມະຊາດ ແລະ ພະລັງງານໄຟຟ້າ. ສຳລັບສິນຄ້າປະເພດອຸດສາຫະກຳປຸງແຕ່ງ, ອາຫານ, ສັດລ້ຽງ ແມ່ນມີໜ້ອຍຫຼາຍ ສິ່ງຜົນໃຫ້ອຳນາດການແຂ່ງຂັນບໍ່ສູງ

ເຊິ່ງສິ່ງທ້າທາຍດັ່ງກ່າວນີ້ແມ່ນມາຈາກຫຼາຍປັດໃຈ ແຕ່ສຳຄັນແມ່ນຂາດແຮງງານທີ່ມີທັກສະສີມືເຂົ້າໃນຂະບວນການຜະລິດ. ນອກຈາກນີ້, ການສົ່ງອອກຂອງ ສປປ ລາວ ສ່ວນໃຫຍ່ແມ່ນສົ່ງອອກໄປບັນດາປະເທດເພື່ອນບ້ານໃນພາກພື້ນ ເຮັດໃຫ້ການມີສ່ວນຮ່ວມໃນຕ່ອງໂສ້ການຜະລິດຍັງຕໍ່າ ແລະ ບໍ່ສ້າງມູນຄ່າເພີ່ມເທົ່າທີ່ຄວນ.

ຮູບສະແດງ 01: ສົມທຽບຄວາມໄດ້ປຽບດ້ານການຄ້າຂອງ ສປປ ລາວ 2010 ແລະ 2022 (RCA)




ແຫຼ່ງຂໍ້ມູນ: https://unctadstat.unctad.org/EN/RcaRadar.html

### 2.4.2. ການຄ້າຊາຍແດນ ລາວ-ໄທ

ສປປ ລາວ ແລະ ລາດຊະອານາຈັກໄທມີມູນເຊື້ອການຄ້າຂາຍລະຫວ່າງປະເທດມາຍາວນານ ເນື່ອງຈາກມີດ່ານພົມແດນຕິດຈອດກັນຢູ່ຫຼາຍຈຸດ ບໍ່ວ່າຈະເປັນດ່ານສາກົນ ແລະ ດ່ານປະເພນີ ກະແຈກກະຈາຍຢູ່ໃນຂອບເຂດທົ່ວປະເທດແຕ່ເໜືອຮອດໃຕ້ ເຊິ່ງລວມມີດ່ານທີ່ມີແຜ່ນດິນຕິດຈອດກັນ, ດ່ານປະເພນີທີ່ສາມາດຂ້າມໄດ້ ໂດຍຜ່ານແມ່ນ້ຳຂອງ ແລະ ຜ່ານທາງຂົວມິດຕະພາບສາກົນລາວ-ໄທ. ໃນນັ້ນ, ອີງຕາມຂໍ້ມູນຈາກ Ngwitulsatit et al. (2017) ສປປ ລາວ ແລະ ໄທ ມີຊາຍແດນຕິດຈອດກັນທັງໝົດ 49 ແຫ່ງ, ເປັນດ່ານຖາວອນຈຳນວນ 20 ແຫ່ງ ແລະ ດ່ານປະເພນີ 29 ແຫ່ງ ເຊິ່ງສາມາດອຳນວຍຄວາມສະດວກ ໃຫ້ທັງສອງປະເທດ ສົ່ງອອກ-ນຳເຂົ້າ ສິນຄ້າລະຫວ່າງປະເທດໄດ້ງ່າຍ, ວ່ອງໄວ ແລະ ສະດວກຫຼາຍຂຶ້ນ. ຍ້ອນສາເຫດດັ່ງກ່າວປະເທດໄທຈຶ່ງເປັນປະເທດຄູ່ຄ້າອັນດັບໜຶ່ງຂອງ ສປປ ລາວ ເມື່ອທຽບກັບຄູ່ຄ້າທັງໝົດທີ່ປະເທດລາວໄດ້ດຳເນີນການຄ້າຮ່ວມກັນ ຮອງລົງມາ ແມ່ນ ສປ.ຈີນ ແລະ ສສ. ຫວຽດນາມ.

ໃນປີ 2023 ນີ້[3] ປະເທດລາວມີມູນຄ່າການຄ້າລວມທັງໝົດ 15.558 ລ້ານໂດລາສະຫະລັດ. ໃນນັ້ນ, ມີມູນຄ່າການສົ່ງອອກ 8.370 ລ້ານໂດລາສະຫະລັດ ເພີ່ມຂຶ້ນ 2,1% ເມື່ອທຽບກັບປີຜ່ານມາ. ມູນຄ່າການນຳເຂົ້າ 7.189 ລ້ານໂດລາສະຫະລັດ ເພີ່ມຂຶ້ນ 5.6%. ສົ່ງຜົນໃຫ້ດຸນການຄ້າລວມໃນປີນີ້ເກີນດຸນ ປະມານ 1.181 ລ້ານໂດລາສະຫະລັດ (ຮູບສະແດງ 02). ເຖິງແມ່ນວ່າດຸນການຄ້າລວມຂອງ ສປປ ລາວ ໃນປີນີ້ຈະເກີນດຸນ ແຕ່ເມື່ອເບິ່ງສະພາບການຄ້າລະຫວ່າງລາວ-ໄທ ເຫັນວ່າດຸນການຄ້າຍັງຂາດດຸນຢ່າງຕໍ່ເນື່ອງນັບແຕ່ປີ 2019 ເປັນຕົ້ນມາ (ຮູບສະແດງ 03). ໃນປີ 2023 ການຄ້າລະຫວ່າງ ລາວ-ໄທ ມີມູນຄ່າການຄ້າລວມທັງໝົດ 6.218 ລ້ານໂດລາສະຫະລັດ ກວມ

[3] ຂໍ້ມູນການສົ່ງອອກ-ນຳເຂົ້າຈາກກະຊວງອຸດສາຫະກຳ ແລະ ການຄ້າ ຮອດເດືອນທັນວາ ປີ 2023

40% ຂອງມູນຄ່າການຄ້າລວມທັງໝົດຂອງ ສປປ ລາວ[4]. ໃນນີ້, ມູນຄ່າການສົ່ງອອກສິນຄ້າໄປປະເທດໄທ ມີມູນຄ່າ 2.884 ລ້ານໂດລາສະຫະລັດ ແລະ ການນໍາເຂົ້າມີມູນຄ່າ 3.334 ລ້ານໂດລາສະຫະລັດ ເຊິ່ງຂາດດຸນ 450 ລ້ານໂດລາສະຫະລັດ ເຊິ່ງເປັນມູນຄ່າການຂາດດຸນທີ່ສູງສົມຄວນ. ແຕ່ເຖິງຢ່າງໃດກໍ່ຕາມ, ເມື່ອສົມທຽບຂໍ້ມູນມູນຄ່າການຄ້າລະຫວ່າງ ລາວ ແລະ ໄທ ເຫັນວ່າ ການບັນທຶກຂໍ້ມູນການຄ້າທັງໝົດລະຫວ່າງສອງປະເທດ ຍັງມີຊ່ອງຫວ່າງຄວາມແຕກໂຕນ ສະເລ່ຍປະມານ 15% ນັບແຕ່ປີ 2019 ຫາ 6 ເດືອນຕົ້ນປີ 2023[5] (ຕາຕະລາງ 01). ໃນນີ້, ມູນຄ່າການສົ່ງອອກຂອງ ສປປ ລາວ ແລະ ມູນຄ່າການນໍາເຂົ້າຂອງປະເທດໄທ ຄ່ອນຂ້າງສອດຄ່ອງກັນໃນແຕ່ລະປີ, ແຕ່ເມື່ອສົມທຽບຂໍ້ມູນການນໍາເຂົ້າສິນຄ້າເຫັນວ່າແຕກຕ່າງກັນ, ໂດຍລາວ ນໍາເຂົ້າ ມູນຄ່າ 1.696 ລ້ານໂດລາສະຫະລັດ ແລະ ຂໍ້ມູນການສົ່ງອອກສິນຄ້າຂອງປະເທດໄທ ມີມູນຄ່າ 2.203 ລ້ານໂດລາສະຫະລັດ ເຊິ່ງແຕກໂຕນກັນໃນປະມານ 30% (6 ເດືອນຕົ້ນປີ 2023) ແຕ່ຖ້າສະເລ່ຍ ແຕ່ປີ 2019 ຫາ 6 ເດືອນຕົ້ນປີ 2023 ຂໍ້ມູນດຸນການຄ້າແຕກໂຕນກັນສະເລ່ຍຫຼາຍກວ່າ 2 ເທົ່າຕົວ (ຮູບສະແດງ 04). ຈາກຂໍ້ມູນດັ່ງກ່າວສາມາດສະແດງໃຫ້ເຫັນເຖິງການຄ້າຊາຍແດນທີ່ບໍ່ເປັນທາງການຈາກ ສປປ ລາວ ຍັງມີຈໍານວນຫຼາຍ ແລະ ເປັນສິ່ງທ້າທາຍໃນການວາງນະໂຍບາຍ ແລະ ການຕິດຕາມການພັດທະນາເສດຖະກິດພາຍໃນປະເທດ.

ຮູບສະແດງ 02: ມູນຄ່າການຄ້າ ຂອງ ສປປ ລາວ




ແຫຼ່ງຂໍ້ມູນ: ກະຊວງອຸດສາຫະກໍາ ແລະ ການຄ້າ

[4] ຂໍ້ມູນການຄ້າລາວ-ໄທ ຈາກກະຊວງອຸດສາຫະກໍາ ແລະການຄ້າ ຮອດເດືອນທັນວາ ປີ 2023

ຮູບສະແດງ 03: ມູນຄ່າການຄ້າລະຫວ່າງ ສປປ ລາວ ແລະ ປະເທດໄທ




ແຫຼ່ງຂໍ້ມູນ: ກະຊວງອຸດສາຫະກຳ ແລະ ການຄ້າ

ຮູບສະແດງ 04: ຊ່ອງຫວ່າງຄວາມແຕກຕ່າງການບັນທຶກຂໍ້ມູນມູນຄ່າການຄ້າຈາກ ສປປ ລາວ ແລະ ປະເທດໄທ 2019 ຫາ 6 ເດືອນຕົ້ນປີ 2023 (ລ້ານໂດລາສະຫະລັດ)




ແຫຼ່ງຂໍ້ມູນ: ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ ແລະ https://data.go.th/, ຄິດໄລ່ໂດຍ ສຄອ

ຕາຕະລາງ 01: ຊ່ອງຫວ່າງການເກັບກຳຂໍ້ມູນການຄ້າຈາກເບື້ອງ ສປປ ລາວ ແລະ ໄທ

| ປີ | 2019 | 2020 | 2021 | 2022 | 6 ເດືອນ ຕົ້ນປີ 2023 |
|---|---|---|---|---|---|
| **ການຄ້າທັງໝົດ** | 15% | 9% | 16% | 17% | 18% |
| **ສົ່ງອອກ** | 6% | 0% | 1% | 0% | 3% |
| **ນຳເຂົ້າ** | 22% | 17% | 30% | 32% | 30% |

ແຫຼ່ງຂໍ້ມູນ: ກະຊວງອຸດສາຫະກຳ ແລະ ການຄ້າ ແຫ່ງ ສປປ ລາວ ແລະ https://data.go.th/, ຄິດໄລ່ໂດຍ ສຄອ

### 2.4.3. ສະພາບການຄ້າຂອງແຂວງ (4 ແຂວງທີ່ສຶກສາ)

ສະພາບການຄ້າພາຍໃນ 4 ແຂວງທີ່ເປັນກໍລະນີສຶກສາມີທ່າແຮງ ແລະ ສິ່ງທ້າທາຍທີ່ແຕກຕ່າງກັນ ເນື່ອງຈາກທີ່ຕັ້ງ ແລະ ພູມສັນຖານຂອງແຕ່ລະແຂວງແມ່ນມີລັກສະນະສະເພາະບໍ່ວ່າຈະເນື້ອທີ່ໃນການເຮັດການຜະລິດ ແລະ ຕະຫຼາດຈຳໜ່າຍ ແຕ່ຖ້າເບິ່ງການນຳເຂົ້າເຫັນວ່າການນຳເຂົ້າຂອງແຕ່ລະແຂວງແມ່ນມີລັກສະນະຄ້າຍຄືກັນ ເປັນຕົ້ນສິນຄ້າເພື່ອອຸປະໂພກ-ບໍລິໂພກທີ່ຮັບໃຊ້ຊີວິດປະຈຳວັນທີ່ກວມອັດຕາສ່ວນສູງ, ຖ້າແມ່ນສິນຄ້າສົ່ງອອກ ກໍແມ່ນສິນຄ້າປະເພດກະສິກຳ. ສຳລັບແຂວງສະຫວັນນະເຂດພັດມີມູນຄ່າການສົ່ງອອກສິນຄ້າກະສິກຳບໍ່ສູງ ເມື່ອທຽບກັບອຸດສາຫະກຳປຸງແຕ່ງ ແລະ ແຮ່ທາດ ເນື່ອງຈາກ ແຂວງສະຫວັນນະເຂດມີທ່າແຮງຈາກແຮ່ທາດ ແລະ ສຸມໃສ່ການພັດ ທະນາເຂດເສດຖະກິດພິເສດ ເຊິ່ງສິນຄ້າທີ່ນຳເຂົ້າສ່ວນໃຫຍ່ແມ່ນສິ້ນສ່ວນວັດຖຸດິບ, ວັດສະດຸ, ອຸປະກອນ ແລະ ເຄື່ອງຈັກທີ່ຮັບໃຊ້ໃນການຜະລິດອຸດສາຫະກຳປຸງແຕ່ງເພື່ອສົ່ງອອກຄືນຂອງບັນດາບໍລິສັດໃຫຍ່ພາຍໃນແຂວງ. (ຕາຕະລາງ 02)

- **ສະພາບການຄ້າແຂວງບໍ່ແກ້ວ**: ແຂວງບໍ່ແກ້ວມີເຂດເສດຖະກິດພິເສດ 1 ເຂດ ແລະ ມີຈຸດຜ່ານແດນກັບປະເທດໄທຈຳນວນ 7 ຈຸດ. ໃນນັ້ນ, ດ່ານສາກົນມີ 2 ດ່ານ, ດ່ານປະເພນີ 3 ດ່ານ ແລະ ດ່ານທ້ອງຖິ່ນ 2 ດ່ານ. ສິນຄ້າທີ່ເປັນທ່າແຮງພາຍໃນແຂວງແມ່ນພືດກະສິກຳ (ໝາກໄມ້ ແລະ ຢາງພາລາ). ໃນປີ 2019 ແຂວງບໍ່ແກ້ວຂາດດຸນການຄ້າ 43,1 ລ້ານໂດລາສະຫະລັດ, ໃນນີ້, ການສົ່ງອອກຂອງແຂວງບໍ່ແກ້ວ ມີມູນຄ່າ 18,6 ລ້ານໂດລາສະຫະລັດ, ລວມມີໝາກກ້ວຍ, ເຂົ້າສານ ແລະ ຢາງພາລາ ແລະ ມູນຄ່າການນຳເຂົ້າ 61,7 ລ້ານໂດລາສະຫະລັດ ລວມມີນ້ຳມັນເຊື້ອໄຟ, ອາຍແກັສ ແລະ ຊີມັງ. ໃນປີ 2023 ຂາດດຸນການຄ້າ 59,6 ລ້ານໂດລາສະຫະລັດ. ສຳລັບການສົ່ງອອກມີມູນຄ່າ 20,4 ລ້ານໂດລາສະຫະລັດ ສ່ວນໃຫຍ່ແມ່ນຢາງພາລາ, ໝາກງາ ແລະ ແກ່ນໝາກນ້ຳມັນ ແລະ ການນຳເຂົ້າມີມູນຄ່າ 80 ລ້ານໂດລາສະຫະລັດ ລວມມີສິນຄ້າປະເພດເຄື່ອງກໍ່ສ້າງ, ສະບຽງອາຫານ ແລະ ເຄື່ອງນຸ່ງຮົ່ມ. ໃນໄລຍະກ່ອນ ແລະ ຫຼັງໂຄວິດ-19 ສິນຄ້າສົ່ງອອກທີ່ເປັນທ່າແຮງຂອງແຂວງ ແມ່ນບໍ່ມີການປ່ຽນແປງຫຼາຍ. ພາຍຫຼັງມີການຢຸດຕິການປູກກ້ວຍ ສິນຄ້າຕົ້ນຕໍກໍ່ຍັງແມ່ນຢາງພາລາ ແລະ ພືດທົດແທນການປູກກ້ວຍກໍ່ກວມເອົາຈຳນວນບໍ່ຫຼາຍ. ນອກຈາກນີ້ການນຳເຂົ້າສ່ວນໃຫຍ່ກໍ່ແມ່ນສິນຄ້າຊົມໃຊ້ພາຍໃນຊີວິດປະຈຳວັນ.
- **ສະພາບການຄ້າແຂວງໄຊຍະບູລີ**: ແຂວງໄຊຍະບູລີເປັນແຂວງທີ່ມີຈຸດຜ່ານແດນກັບປະເທດໄທ 7 ຈຸດ. ໃນນັ້ນ, ມີດ່ານສາກົນ 4 ດ່ານ ແລະ ດ່ານປະເພນີ 3 ດ່ານ. ສະພາບການຄ້າພາຍໃນແຂວງຂາດດຸນ -8,9 ລ້ານໂດລາສະຫະລັດ ໃນປີ 2019 ສາເຫດທີ່ເຮັດໃຫ້ຂາດດຸນການຄ້າຍ້ອນວ່າການຜະລິດພືດກະສິກຳເປັນສິນຄ້າໄດ້ຮັບຜົນກະ

ທີບຈາກພະຍາດສັດຕູພືດ ເປັນຕົ້ນ ແມ່ນສາລີແຂງ, ມັນຕົ້ນແຫ້ງ ແລະ ໝາກເດືອຍ. ໃນນີ້, ການສົ່ງອອກບັນລຸໄດ້ 32,2 ລ້ານໂດລາສະຫະລັດ ແລະ ນຳເຂົ້າ 41,1 ລ້ານໂດລາສະຫະລັດ. ໃນປີ 2023 ດຸນການຄ້າພາຍໃນແຂວງເກີນດຸນ 36 ລ້ານໂດລາສະຫະລັດ. ການສົ່ງອອກສາມາດບັນລຸໄດ້ 89 ລ້ານໂດລາສະຫະລັດ ແລະ ນຳເຂົ້າ 53 ລ້ານໂດລາສະຫະລັດ. ສຳລັບປະເພດສິນຄ້າໄລຍະປີ 2019-2023 ບໍ່ປ່ຽນແປງຫຼາຍ ໂດຍສະເພາະແມ່ນສິນຄ້ານຳເຂົ້າສ່ວນໃຫຍ່ແມ່ນນ້ຳມັນເຊື້ອໄຟ, ອາຍແກັສ ແລະ ສິນຄ້າອຸປະໂພກ-ບໍລິໂພກທີ່ຮັບໃຊ້ໃນຊີວິດປະຈຳວັນ. ສຳລັບສິນຄ້າສົ່ງອອກຕົ້ນຕໍກໍ່ຍັງແມ່ນພືດກະສິກຳ (ແປ້ງມັນຕົ້ນ, ມັນຕົ້ນແຫ້ງ ແລະ ສາລີຫວານ).

- **ສະພາບການຄ້າແຂວງສະຫວັນນະເຂດ:** ແຂວງສະຫວັນນະເຂດມີ 1 ເຂດເສດຖະກິດພິເສດ ແລະ ມີ 7 ຈຸດຜ່ານແດນທີ່ຕິດກັບປະເທດໄທ; 1 ດ່ານສາກົນ, 2 ດ່ານທ້ອງຖິ່ນ ແລະ 4 ດ່ານປະເພນີ. ການຜະລິດພາຍໃນແຂວງແມ່ນສຸມໃສ່ການຜະລິດອຸດສາຫະກຳປຸງແຕ່ງເພື່ອສົ່ງອອກ ໂດຍສະເພາະການຜະລິດພາຍໃນເຂດເສດຖະກິດພິເສດ. ສິນຄ້ານຳເຂົ້າສ່ວນໃຫຍ່ກໍ່ແມ່ນສິ້ນສ່ວນ, ວັດຖຸອຸປະກອນຕ່າງໆ ເພື່ອຮັບໃຊ້ການຜະລິດປຸງແຕ່ງສົ່ງອອກຄືນ. ໃນປີ 2019 ດຸນການຄ້າພາຍໃນແຂວງເກີນດຸນ 491 ລ້ານໂດລາສະຫະລັດ. ໃນນີ້, ການນຳເຂົ້າມູນຄ່າ 1.087 ລ້ານໂດລາສະຫະລັດ ເປັນຕົ້ນແມ່ນເຄື່ອງອີເລັກໂທນິກ ເພື່ອມາປຸງແຕ່ງສົ່ງອອກຄືນ, ເຄື່ອງກົນຈັກຮັບໃຊ້ໃນການຜະລິດຂອງບໍລິສັດນ້ຳຕານມິດລາວ. ສຳລັບການສົ່ງອອກມີມູນຄ່າ 1.577 ລ້ານໂດລາສະຫະລັດ ລວມມີແຜ່ນທອງແດງ, ສິ້ນສ່ວນອີເລັກໂທນິກ, ຢາງພາລາ, ນ້ຳຕານຊາຍ ແລະ ອື່ນໆ. ໃນປີ 2023 ດຸນການຄ້າພາຍໃນແຂວງເກີນດຸນ 638 ລ້ານໂດລາສະຫະລັດ; ການນຳເຂົ້າມີມູນຄ່າ 1.380 ລ້ານໂດລາສະຫະລັດ ລວມມີ ນ້ຳມັນເຊື້ອໄຟ, ສິນຄ້າອຸປະໂພກ ແລະ ບໍລິໂພກ, ເຈ້ຍເສດ ແລະ ໄມ້ບົດ. ສຳລັບການສົ່ງອອກມີມູນຄ່າ 2.018 ລ້ານໂດລາສະຫະລັດ ເປັນຕົ້ນແມ່ນແຮ່ຄຳປະສົມເງິນ, ຜະລິດຕະພັນມັນຕົ້ນ, ເຈ້ຍ ແລະ ຢາງພາລາ.

- **ສະພາບການຄ້າແຂວງຈຳປາສັກ:** ແຂວງຈຳປາສັກມີ 3 ຈຸດຜ່ານແດນທີ່ຕິດກັບປະເທດໄທ; 1 ດ່ານສາກົນ ແລະ 2 ດ່ານປະເພນີ. ທ່າແຮງການຜະລິດເພື່ອສົ່ງອອກພາຍໃນແຂວງແມ່ນພືດກະສິກຳ, ໃນປີ 2019 ດຸນການຄ້າເກີນດຸນ 12 ລ້ານໂດລາສະຫະລັດ. ໃນນີ້, ການນຳເຂົ້າມີມູນຄ່າ 260 ລ້ານໂດລາສະຫະລັດ ເປັນຕົ້ນແມ່ນນຳເຂົ້ານ້ຳມັນເຊື້ອໄຟ, ພາຫະນະ-ອາໄຫຼ່ ແລະ ສິນຄ້າຟຸມເຟືອຍ. ການສົ່ງອອກມີມູນຄ່າ 272 ລ້ານໂດລາສະຫະລັດ ໂດຍສະເພາະສິນຄ້າກະສິກຳຕາມສັນຍາ, ມັນຕົ້ນຊອຍ ແລະ ກາເຟ. ໃນປີ 2023 ດຸນການຄ້າເກີນດຸນ 136 ລ້ານໂດລາສະຫະລັດ; ມີມູນຄ່າການນຳເຂົ້າ 332 ລ້ານໂດລາສະຫະລັດ ເປັນຕົ້ນແມ່ນ ນ້ຳມັນເຊື້ອໄຟ, ພາຫະນະ-ອາໄຫຼ່ ແລະ ເຄື່ອງກໍ່ສ້າງ. ການສົ່ງອອກບັນລຸໄດ້ 468 ລ້ານໂດລາສະຫະລັດ ໂດຍສະເພາະແມ່ນສິນຄ້າກະສິກຳ, ພືດຜັກກະສິກຳຕາມສັນຍາ ແລະ ຜະລິດຕະພັນອຸດສາຫະກຳປຸງແຕ່ງ.[6]

ໂດຍລວມແລ້ວ ການຄ້າຂອງບັນດາແຂວງທີ່ນຳມາສຶກສານັ້ນແມ່ນມີລັກສະນະຄ້າຍຄືກັນຄືອາໄສການນຳເຂົ້າໃນສັດສ່ວນທີ່ສູງ ແລະ ປະເພດສິນຄ້ານຳເຂົ້າກໍ່ຄືກັນ, ສ່ວນການສົ່ງອອກສ່ວນໃຫຍ່ແມ່ນພືດກະສິກຳທີ່ບໍ່ມີມູນຄ່າສູງ ເພາະເປັນວັດຖຸດິບ, ປະລິມານໜ້ອຍ ແລະ ບໍ່ຫຼາກຫຼາຍ ຈຶ່ງສົ່ງຜົນໃຫ້ໂດຍລວມແມ່ນຍັງຂາດດຸນສູງ.

---

[6] ສຳລັບຂໍ້ມູນດ່ານເບິ່ງໃນຕາຕະລາງທີ 2

ຕາຕະລາງ 02: ຂໍ້ມູນການຄ້າຂອງບັນດາແຂວງທີ່ສຶກສາ

| ລ/ດ | ແຂວງ | 2019 | | | | 2023 | | | | ດຸນການຄ້າ (ລ້ານໂດລາ ສະຫະລັດ) | |
|---|---|---|---|---|---|---|---|---|---|---|---|
| | | ນຳເຂົ້າ (ລ້ານໂດລາ ສະຫະລັດ) | ສິນຄ້ານຳເຂົ້າຕົ້ນຕໍ | ສົ່ງອອກ (ລ້ານໂດລາ ສະຫະລັດ) | ສິນຄ້າສົ່ງອອກຕົ້ນຕໍ | ນຳເຂົ້າ (ລ້ານໂດລາ ສະຫະລັດ) | ສິນຄ້ານຳເຂົ້າຕົ້ນຕໍ | ສົ່ງອອກ (ລ້ານໂດລາ ສະຫະລັດ) | ສິນຄ້າສົ່ງອອກຕົ້ນຕໍ | 2019 | 2023 |
| 1 | ບໍ່ແກ້ວ | 61.7 | ນ້ຳມັນເຊື້ອໄຟ, ແກັສ, ຊີມັງ | 18.6 | ໝາກກ້ວຍ ເຂົ້າສານ ຢາງພາລາ | 80 | ເຄື່ອງກໍ່ສ້າງ, ສະບຽງອາຫານ, ເຄື່ອງນຸ່ງຮົ່ມ | 20.4 | ຢາງພາລາ ໝາກງາ ແກ່ນໝາກ ນ້ຳມັນ | -43.1 | -59.6 |
| 2 | ໄຊຍະບູລີ | 41.1 | ນ້ຳມັນເຊື້ອໄຟ,ແກັສ, ເຄື່ອງອຸປະໂພກ, ບໍລິໂພກ | 32.2 | ສາລີແຂງ ມັນຕົ້ນ ໝາກເດືອຍ | 53.1 | ນ້ຳມັນເຊື້ອໄຟ | 89 | ແປ້ງມັນຕົ້ນ ມັນຕົ້ນແຫ້ງ ແລະ ສາລີຫວານ | -8.9 | 36 |
| 3 | ສະຫວັນນະເຂດ | 1087 | ເຄື່ອງອີເລັກໂທນິກ ເຄື່ອງກົນຈັກຮັບໃຊ້ໃນການຜະລິດ | 1577 | ແຜ່ນທອງແດງ, ສິ້ນສ່ວນອີເລັກໂທນິກ, ຢາງພາລາ,ນ້ຳຕານ | 1380 | ໄມ້ບີດ ເຈ້ຍເສດ ເຄື່ອງສິນຄ້າອຸປະໂພກ-ບໍລິໂພກ, ນ້ຳມັນເຊື້ອໄຟ | 2018 | ເຈ້ຍ ແປ້ງມັນຕົ້ນ ແຮ່ຄຳປະສົມເງິນ | 491 | 638 |
| 4 | ຈຳປາສັກ | 260 | ນ້ຳມັນເຊື້ອໄຟ ພາຫະນະ, ອາໄຫຼ່, ສິນຄ້າຟຸມເຟືອຍ | 272 | ສິນຄ້າກະສິກຳຕາມສັນຍາ ມັນຕົ້ນ ຊອຍແຫ້ງ ກາເຟ | 332 | ນ້ຳມັນເຊື້ອໄຟ, ພາຫະນະ-ອາໄຫຼ່, ເຄື່ອງກໍ່ສ້າງ | 468 | ພືດກະສິກຳ ພືດຜັກກະ ສິກຳຕາມສັນຍາ ,ຜະ ລິດຕະພັນ ອຸດສາຫະກຳປຸງແຕ່ງ | 12 | 136 |

**ແຫຼ່ງຂໍ້ມູນ:** ບົດສະຫຼຸບແຜນພັດທະນາເສດຖະກິດ-ສັງຄົມປະຈຳປີ 2019 ແລະ 2023 ຂອງ 4 ແຂວງ, ພະແນກແຜນການ ແລະ ການລົງທຶນແຂວງ

## III. ວິທີວິທະຍາ

### 3.1. ການອອກແບບການສຶກສາ

ການສຶກສາຄັ້ງນີ້ຈະນໍາໃຊ້ວິທີການສຶກສາ 2 ຮູບແບບ ຄື: ວິທີການສຶກສາແບບພັນລະນາ (Descriptive Analysis) ແລະ ວິທີການສຶກສາແບບປະລິມານ (Quantitative Analysis).

- ວິທີສຶກສາແບບພັນລະນາ (Descriptive Analysis): ອະທິບາຍເຖິງສະພາບໂດຍລວມ ແລະ ສະພາບເສດຖະກິດຂອງກຸ່ມຕົວຢ່າງທັງ 4 ແຂວງເປົ້າໝາຍ ໂດຍສະເພາະໄລຍະກ່ອນ Covid-19 ແລະ ປັດຈຸບັນ ເຊິ່ງຈະນໍາເອົາຕົວເລກທີ່ໄດ້ຈາກຜູ້ຕອບແບບສອບຖາມ ເປັນຕົ້ນ: ຄຸນລັກສະນະຂອງຜູ້ຕອບແບບສອບຖາມ, ຄຸນລັກສະນະຂອງຄົວເຮືອນ, ຄຸນລັກສະນະທາງດ້ານເສດຖະກິດຂອງຄົວເຮືອນ, ຄຸນລັກສະນະທາງດ້ານການຄ້າຂາຍກັບປະເທດໄທລວມທັງຄຸນລັກສະນະກ່ຽວກັບການໂອນເງິນກັບບ້ານຂອງສະມາຊິກໃນຄົວເຮືອນ ມາຄິດໄລ່ເປັນຄວາມຖີ່, ສ່ວນຮ້ອຍ ແລະ ສ້າງເປັນຕາຕະລາງ ຫຼື ກຣາຟເພື່ອອະທິບາຍປຽບທຽບສັດສ່ວນຕ່າງໆ.

- ວິທີສຶກສາແບບປະລິມານ (Quantitative Analysis): ແມ່ນໃຊ້ສົມຜົນທາງສະຖິຕິ ເພື່ອໄປວິເຄາະ ແລະ ທົດສອບໃນແບບຈໍາລອງ ເພື່ອເບິ່ງຄວາມສໍາພັນລະຫວ່າງຕົວປ່ຽນອິດສະຫຼະ ແລະ ຕົວປ່ຽນຕາມ.

### 3.2. ການຄັດເລືອກພື້ນທີ່ສຶກສາ

ພື້ນທີ່ການສຶກສາເລັ່ງໃສ່ແຂວງທີ່ມີຊາຍແດນຕິດຈອດກັບປະເທດໄທ ໂດຍກໍານົດເອົາແຂວງຕົວແທນຈາກ 3 ພາກ ໄດ້ແກ່: ພາກເໜືອແມ່ນແຂວງບໍ່ແກ້ວ ແລະ ແຂວງໄຊຍະບູລີ ເຊິ່ງເປັນ 2 ແຂວງພາກເໜືອທີ່ມີຊາຍແດນຕິດຈອດກັບປະເທດໄທ, ມີຈຸດຜ່ານແດນລວມກັນທັງໝົດ 14 ແຫ່ງ; ດ່ານສາກົນ 6 ແຫ່ງ, ດ່ານທ້ອງຖິ່ນ 4 ແຫ່ງ ແລະ ດ່ານປະເພນີ 6 ແຫ່ງ, ພາກໃຕ້ແມ່ນແຂວງຈໍາປາສັກມີຊາຍແດນຕິດຈອດປະເທດໄທທີ່ມີການຄ້າຂາຍໄປມາສະດວກ ມີຈຸດຜ່ານແດນ 3 ແຫ່ງ; 1 ດ່ານສາກົນ ແລະ 2 ດ່ານປະເພນີ[7] (ຕາຕະລາງ 03); ສໍາລັບພາກກາງ ໄດ້ເລືອກເອົາແຂວງສະຫວັນນະເຂດ ເຖິງວ່າຈະມີຈໍານວນດ່ານຜ່ານແດນຖາວອນ ແລະ ດ່ານຜ່ານແດນປະເພດອື່ນໆໜ້ອຍກວ່າແຂວງຄໍາມ່ວນ ແຕ່ເຫດຜົນໃນການເລືອກໄດ້ອີງໃສ່ລັກສະນະທີ່ຕັ້ງພູມສັນຖານເປັນແຂວງໃຫຍ່ກວ່າໝູ່, ຈໍານວນພົນລະເມືອງທີ່ຫຼາຍກວ່າໝູ່, ລັກສະນະຂອງຕົວເມືອງເຊິ່ງເປັນຕົວເມືອງທີ່ມີເສດຖະກິດຂະຫຍາຍຕົວໄວ ມີຕົວເມືອງຕັ້ງຢູ່ລຽບຕາມຝັ່ງແມ່ນໍ້າຂອງ ເປັນຕົ້ນ.

---

[7] ແຫຼ່ງຂໍ້ມູນ: ກົດໝາຍວ່າດ້ວຍ ການເຂົ້າ-ອອກ ແລະ ການຄຸ້ມຄອງຄົນຕ່າງປະເທດຢູ່ ສປປ ລາວ, ສະບັບເລກທີ 59/ສພຊ, ລົງວັນທີ 26 ທັນວາ2014

*** ດ່ານສາກົນ:** ອະນຸຍາດໃຫ້ຄົນຕ່າງປະເທດ, ຕ່າງດ້າວແລະຄົນບໍ່ມີສັນຊາດເຂົ້າ-ອອກໄດ້ໂດຍນໍາໃຊ້ເອກະສານທີ່ຖືກຕ້ອງຕາມກົດໝາຍ.

*** ດ່ານທ້ອງຖິ່ນ:** ອະນຸຍາດໃຫ້ພົນລະເມືອງອາໃສຢູ່ລະຫວ່າງ ແຂວງຕໍ່ແຂວງ ເຂົ້າ-ອອກ ໂດຍນໍາໃຊ້ເອກະສານທີ່ຖືກຕ້ອງຕາມກົດໝາຍ.

*** ດ່ານປະເພນີ:** ອະນຸຍາດໃຫ້ພົນລະເມືອງອາໃສຢູ່ເຂດຊາຍແດນລະຫວ່າງ ເມືອງຕໍ່ເມືອງ ເຂົ້າ-ອອກ ໂດຍນໍາໃຊ້ເອກະສານທີ່ຖືກຕ້ອງຕາມກົດໝາຍ.

ຕາຕະລາງ 03: ຊ່ອງທາງການຄ້າຂ້າມແດນລາວ-ໄທ

| ລຳດັບ | ແຂວງ | ປະເພດດ່ານ | ຊື່ດ່ານ |
|---|---|---|---|
| 1 | ບໍ່ແກ້ວ | ດ່ານສາກົນ | ດ່ານຂົວມິດຕະພາບ IV |
| 2 | | | ດ່ານສາມຫຼ່ຽມຄຳ |
| 3 | | ດ່ານທ້ອງຖິ່ນ | ດ່ານຕົ້ນເຜິ້ງ |
| 4 | | | ດ່ານຫ້ວຍຊາຍ |
| 5 | | ດ່ານປະເພນີ | ດ່ານນ້ຳເກິ່ງ |
| 6 | | | ດ່ານປາກທາ |
| 7 | | | ດ່ານບ້ານດ່ານ |
| 8 | ໄຊຍະບູລີ | ດ່ານສາກົນ | ດ່ານນ້ຳເຫືອງ |
| 9 | | | ດ່ານພູດູ່ |
| 10 | | | ດ່ານນ້ຳເງິນ |
| 11 | | | ດ່ານປາງມອນ |
| 12 | | ດ່ານປະເພນີ | ດ່ານທົ່ງມີໄຊ |
| 13 | | | ດ່ານນາຂ່າ |
| 14 | | | ດ່ານຫ້ວຍຕອງ |
| 15 | ສະຫວັນນະເຂດ | ດ່ານສາກົນ | ດ່ານຂົວມິດຕະພາບ II |
| 16 | | ດ່ານທ້ອງຖິ່ນ | ດ່ານທ່າປະຊຸມ |
| 17 | | | ດ່ານທ່າເຮືອໂດຍສານ |
| 18 | | ດ່ານປະເພນີ | ດ່ານປາກເຊບັ້ງໄຟ |
| 19 | | | ດ່ານດອນຫວາຍ |
| 20 | | | ດ່ານເຫຼົ່າໝາກຫູດ |
| 21 | ຈຳປາສັກ | ດ່ານສາກົນ | ດ່ານວັງເຕົ່າ |
| 22 | | ດ່ານປະເພນີ | ດ່ານຊ່ອງຕາອູ |
| 23 | | | ບ້ານໃໝ່ສິງສຳພັນ |

ແຫຼ່ງຂໍ້ມູນ: ກົມພາສີ, ກະຊວງການເງິນ

### 3.3. ໄລຍະເວລາການຄົ້ນຄວ້າ

ໄລຍະເວລາຂອງການສຶກສາມີລາຍລະອຽດດັ່ງນີ້:

- ເດືອນກໍລະກົດ-ເດືອນກັນຍາ ປີ 2023: ເກັບກຳຂໍ້ມູນທຸຕິຍະພູມ (Secondary data) ຈາກແຫຼ່ງຕ່າງໆ ເພື່ອປະກອບເຂົ້າໃນບົດໂຄງຮ່າງ.
- ເດືອນກັນຍາ-ເດືອນຕຸລາ ປີ 2023: ລົງເກັບກຳຂໍ້ມູນປະຖົມມະພູມ (Primary data) ຈາກກຸ່ມຕົວຢ່າງ.
- ເດືອນພະຈິກ 2023- ເດືອນມີນາ ປີ 2024: ສັງລວມຂໍ້ມູນ, ປ້ອນຂໍ້ມູນ, ວິເຄາະຂໍ້ມູນ ແລະ ສະຫຼຸບຜົນໄດ້ຮັບຂອງການສຶກສາ.

### 3.4. ປະຊາກອນ ແລະ ການຄັດເລືອກກຸ່ມຕົວຢ່າງ

ປະຊາກອນທີ່ໃຊ້ໃນການສຶກສາຄັ້ງນີ້ແມ່ນຄັດເລືອກມາຈາກຈຳນວນຄົວເຮືອນທັງໝົດທີ່ຢູ່ໃນຂົງເຂດ 24 ບ້ານຂອງ 8 ເມືອງ ຈາກ 4 ແຂວງເປົ້າໝາຍ ເຊິ່ງມີຈຳນວນຄົວເຮືອນລວມກັນທັງໝົດ 9.428 ຄົວເຮືອນ. ເນື່ອງຈາກໃນການສຶກສາຄັ້ງນີ້ ມີເວລາ ແລະ ງົບປະມານຂ້ອນຂ້າງຈຳກັດ, ກຸ່ມປະຊາກອນແມ່ນມີຂະໜາດທີ່ໃຫຍ່ຫຼາຍ ເຊິ່ງບໍ່ສາມາດເກັບກຳຂໍ້ມູນຈາກທຸກໆຄົວເຮືອນໃນເຂດ 24 ບ້ານໄດ້ໝົດ. ດັ່ງນັ້ນ, ທີມງານຈຶ່ງໄດ້ຄັດເລືອກເອົາກຸ່ມຕົວຢ່າງ ເພື່ອເປັນຕົວແທນຂອງປະຊາກອນພາຍໃນ 24 ບ້ານເປົ້າໝາຍ ໂດຍນຳໃຊ້ສູດ Taro Yamane ດັ່ງນີ້:

$$n = \frac{N}{1+Ne^2} \quad (1)$$

ໂດຍທີ່: $n$ = ຂະໜາດກຸ່ມຕົວຢ່າງ

$N$ = ປະຊາກອນທັງໝົດ

$e$ = ຄ່າຄວາມຄາດເຄື່ອນຂອງກຸ່ມຕົວຢ່າງ ເທົ່າກັບ 5% (0.05)

ຈາກສູດສາມາດຄິດໄລ່ໄດ້ດັ່ງນີ້:

$$n = \frac{9,428}{1+9,429(0.05)^2} = 384 \text{ ຕົວຢ່າງ} \quad (2)$$

ກຸ່ມຕົວຢ່າງຕາມສັດສ່ວນຂອງແຕ່ລະບ້ານ ທີ່ເກັບກຳສຳລັບການສຶກສາມີດັ່ງນີ້:

ຕາຕະລາງ 04: ຈຳນວນສະແດງຈຳນວນກຸ່ມຕົວຢ່າງ

| ລຳດັບ | ແຂວງ | ເມືອງ | ໄລຍະທາງຫາຊາຍແດນ | ບ້ານ | ຈຳນວນຄົວເຮືອນ ($N$) | ຈຳນວນຕົວຢ່າງ ($n$) |
|---|---|---|---|---|---|---|
| 1 | ບໍ່ແກ້ວ | ຫ້ວຍຊາຍ | ໃກ້ | ໂພນສະຫວ່າງ | 201 | 8 |
| 2 | | | ປານກາງ | ໂພນທອງ | 298 | 12 |
| 3 | | | ໄກ | ພິມົນສິນ | 109 | 4 |
| 4 | | ຕົ້ນເຜິ້ງ | ໃກ້ | ດອນສະຫວັນ | 298 | 12 |
| 5 | | | ປານກາງ | ຊຸນບຶງ | 115 | 5 |
| 6 | | | ໄກ | ສີດອນໄຊ | 688 | 28 |
| 7 | ໄຊຍະບູລີ | ແກ່ນທ້າວ | ໃກ້ | ໝໍ້ | 436 | 18 |
| 8 | | | ປານກາງ | ຫ້ວຍເປັດ | 216 | 9 |
| 9 | | | ໄກ | ດອນເມນ | 240 | 10 |
| 10 | | ປາກລາຍ | ໃກ້ | ຜາແກ້ວ-ບອມເລົ່າ | 920 | 37 |
| 11 | | | ປານກາງ | ສີສະອາດຊົມພູ | 179 | 7 |
| 12 | | | ໄກ | ສຸວັນນະພູມ | 636 | 26 |
| 13 | ສະຫວັນນະເຂດ | ນະຄອນໄກສອນ | ໃກ້ | ນາແກ | 525 | 21 |
| 14 | | | ປານກາງ | ຫົວເມືອງໃຕ້ | 409 | 17 |
| 15 | | | ໄກ | ໂພນສິມ | 723 | 29 |
| 16 | | ໄຊພູທອງ | ໃກ້ | ມ່ວງໄຂ່ | 946 | 39 |
| 17 | | | ປານກາງ | ຫົວຫາດ | 256 | 10 |
| 18 | | | ໄກ | ຕາກແດດ | 83 | 3 |
| 19 | ຈຳປາສັກ | ໂພນທອງ | ໃກ້ | ວັງເຕົ່າ | 431 | 18 |
| 20 | | | ປານກາງ | ໂນນສະອາດ | 132 | 5 |
| 21 | | | ໄກ | ໂນນສະຫວັນ | 621 | 25 |
| 22 | | ສຸຂຸມມາ | ໃກ້ | ໂພນເຜິ້ງ | 97 | 4 |
| 23 | | | ປານກາງ | ດົງຫົວບ້ານ | 126 | 5 |
| 24 | | | ໄກ | ຫຽງ | 744 | 30 |
| ລວມ | | | | | 9.429 | 384 |

ແຫຼ່ງຂໍ້ມູນ: ທີມຄົ້ນຄວ້າສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ, 2023

ການສຸ່ມຕົວຢ່າງແມ່ນໃຊ້ວິທີສຸ່ມຈາກຈຳນວນຄົວເຮືອນທັງໝົດທີ່ມີຢູ່ໃນບ້ານນັ້ນຕາມຈຳນວນຕົວຢ່າງທີ່ຕ້ອງການສຳຫຼວດ. ອີງຕາມຕາຕະລາງ 04, ຈຳນວນຕົວຢ່າງທີ່ແບ່ງຕາມສັດສ່ວນໃນແຕ່ລະບ້ານຂ້ອນຂ້າງບໍ່ສະເໝີກັນ, ໃນຂະນະທີ່ບາງບ້ານຫຼາຍ ບາງບ້ານໜ້ອຍ, ຈຳນວນຕົວຢ່າງທີ່ໜ້ອຍເກີນໄປ ຂໍ້ມູນທີ່ໄດ້ຈາກການສຳຫຼວດອາດບໍ່ສາມາດສະທ້ອນເຖິງສະພາບລວມຂອງຄົວເຮືອນພາຍໃນບ້ານໄດ້. ດັ່ງນັ້ນ, ໃນການສຳຫຼວດຕົວຈິງ ທີມງານຈຶ່ງໄດ້ໃຊ້ວິທີຄ່າສະເລ່ຍຈຳນວນຕົວຢ່າງ 16-18 ຄົວເຮືອນຕໍ່ບ້ານ ແທນວິທີແບ່ງຕາມສັດສ່ວນ. ດັ່ງນັ້ນ ຜ່ານການລົງສຳພາດຕົວຈິງເຫັນວ່າບາງບ້ານແມ່ນມາຕອບຫຼາຍກວ່າ 16 ຄົວເຮືອນ ຈຶ່ງໄດ້ຕົວຢ່າງທັງໝົດ 416 ຕົວຢ່າງ.

### 3.5. ເຄື່ອງມືທີ່ໃຊ້ເກັບກຳຂໍ້ມູນ

ການເກັບກຳຂໍ້ມູນເພື່ອການສຶກສາໃນຄັ້ງນີ້ ໄດ້ນຳໃຊ້ແບບສອບຖາມ (Questionnaire) ເຊິ່ງອີງໃສ່ການທົບທວນເອກະສານ, ບົດຄົ້ນຄວ້າທັງພາຍໃນ ແລະ ຕ່າງປະເທດ ໂດຍໄດ້ເຮັດການສຶກສາກຸ່ມຕົວຢ່າງຈາກ 24 ບ້ານໃນ 8 ຕົວເມືອງ 4 ແຂວງ ຈຳນວນ 416 ຕົວຢ່າງ, ສຳລັບຄົວເຮືອນໄດ້ໃຊ້ວິທີການຄັດເລືອກແບບສຸ່ມ. ພ້ອມນີ້, ຍັງໄດ້ສຳພາດຕາງໜ້າຂະແໜງການພາກລັດ ແລະ ຜູ້ປະກອບການຕື່ມ. ແບບສອບຖາມໄດ້ແບ່ງຂໍ້ມູນອອກເປັນ 6 ພາກສ່ວນຄື:

1. ບຸກຄົນ ປະກອບມີ: ເພດ, ອາຍຸ, ສະຖານະພາບ, ຮູບແບບອາໄສ, ອາຊີບຕົ້ນຕໍກ່ອນໂຄວິດ ແລະ ປັດຈຸບັນ, ລະດັບການສຶກສາ.
2. ຊັບສິນການຜະລິດ, ທີ່ດິນກະສິກຳ, ສັດລ້ຽງ, ຊັບສິນອື່ນໆ.
3. ລາຍຮັບ 1 ປີຜ່ານມາ.
4. ລາຍຈ່າຍ 1 ປີຜ່ານມາ.
5. ການຍົກຍ້າຍຖິ່ນຖານ ປະກອບມີ: ອາຍຸ, ສາເຫດທີ່ໄປ, ຮູບແບບການໄປ, ມູນຄ່າເງິນສົ່ງກັບຄືນບ້ານ.
6. ການຄ້າຊາຍແດນ ປະກອບມີ: ທຸລະກິດຄົວເຮືອນ, ແຫຼ່ງເງິນທຶນ, ຈຸດປະສົງໃນການຂ້າມໄປໄທ, ມູນຄ່າການຊື້-ຂາຍກັບໄທ 1 ປີຜ່ານມາ, ຮູບແບບການຊຳລະສະສາງ, ຮູບແບບການຂົນສົ່ງ ແລະ ການປະຕິບັດພັນທະຕາມລະບຽບການ.

### 3.6. ເຄື່ອງມືທີ່ໃຊ້ໃນການວິເຄາະທາງເສດຖາມິຕິ

ເຄື່ອງມືທີ່ໃຊ້ໃນການວິເຄາະຂໍ້ມູນຂອງການສຶກສາຄັ້ງນີ້ແມ່ນວິເຄາະຂໍ້ມູນເພື່ອຫາຄວາມສຳພັນລະຫວ່າງຕົວປ່ຽນຕາມ (Dependent Variable) ກັບຕົວປ່ຽນອິດສະຫຼະ (Independent Variables) ຕັ້ງແຕ່ 02 ໂຕຂຶ້ນໄປ. ຕົວປ່ຽນທີ່ໃຊ້ໃນແບບຈຳລອງ OLS Model ອີງໃສ່ທິດສະດີທາງເສດຖະສາດ, ເສດຖາມິຕິ ແລະ ບົດວິທະຍາສາດທີ່ກ່ຽວຂ້ອງ, ເຊິ່ງສາມາດຂຽນເປັນສົມຜົນເສັ້ນຊື່ໄດ້ດັ່ງນີ້:

$$\begin{bmatrix} HH_Income \\ HH_Rice \end{bmatrix} = \begin{bmatrix} \beta_{10} & \beta_{11} & \beta_{12} & \beta_{13} & \beta_{14} & \beta_{15} & \beta_{16} \\ \beta_{20} & \beta_{21} & \beta_{22} & \beta_{23} & \beta_{24} & \beta_{25} & \beta_{26} \end{bmatrix} \begin{bmatrix} 1 \\ Border_Trade \\ Remittance \\ A \\ B \\ C \end{bmatrix} + \begin{bmatrix} \varepsilon_1 \\ \varepsilon_2 \end{bmatrix} \quad (3)$$

## IV. ຜົນຂອງການຄົ້ນຄວ້າ

### 4.1. ຈຸດປະສົງ 1 ແລະ 2: ສຶກສາຄຸນລັກສະນະຄົວເຮືອນ ແລະ ການດຳເນີນທຸລະກິດຂອງຄົວເຮືອນຕົວຢ່າງໃນຂອບເຂດຊາຍແດນ ຂອງແຂວງກຳລະນີສຶກສາ ແລະ ບັນດາສິນຄ້າຜ່ານແດນຕົ້ນຕໍ.

❖ **ສະພາບການຄ້າຂາຍຂອງຄົວເຮືອນ**

ສະພາບລວມດ້ານການຄ້າຂອງກຸ່ມຕົວຢ່າງທີ່ສຸ່ມຈາກເມືອງທີ່ຕິດຊາຍແດນປະເທດໄທ ສະແດງໃຫ້ເຫັນວ່າ ຄົວເຮືອນທີ່ມີການຄ້າຂາຍ ໃນອັດຕາສ່ວນປະມານ 24% ຂອງກຸ່ມຕົວຢ່າງທັງໝົດ, ໃນນັ້ນການຄ້າຍ່ອຍ (ຂາຍເຄື່ອງອຸປະໂພກ-ບໍລິໂພກປະຈຳວັນທົ່ວໄປ) ກວມອັດຕາສ່ວນສູງເຖິງ 49,5%, ລວມມູນຄ່າທຶນໃນການດຳເນີນທຸລະກິດທັງໝົດ 10.100 ລ້ານກີບ ກວມປະມານ 15,8% ຂອງລາຍຮັບທັງໝົດ (ລາຍຮັບຕົວຢ່າງທັງໝົດ 64.200 ລ້ານກີບ). ເຊິ່ງແຫຼ່ງທຶນທີ່ໃຊ້ໃນການຄ້າຂາຍຕົ້ນຕໍມາຈາກເງິນເກັບຂອງຄົວເຮືອນ ກວມອັດຕາສ່ວນສູງເຖິງ 65,95%, ຮອງລົງມາແມ່ນຢືມນຳພີ່ນ້ອງ-ໝູ່ຄູ່ ກວມ 14,89%. ສ່ວນຄົວເຮືອນທີ່ຢືມເງິນຈາກທະນາຄານເພື່ອມາຄ້າຂາຍ ກວມອັດຕາສ່ວນພຽງ 2,13% (ຮູບສະແດງ 05).

ສາເຫດທີ່ເຮັດໃຫ້ການເຂົ້າເຖິງແຫຼ່ງທຶນຈາກທະນາຄານຂອງຄົວເຮືອນກວມອັດຕາສ່ວນໜ້ອຍ ເນື່ອງມາຈາກເງື່ອນໄຂຂອງທະນາຄານທີ່ມີຫຼາຍຂັ້ນຕອນ ລວມທັງອັດຕາດອກເບ້ຍທີ່ຂ້ອນຂ້າງສູງ ເມື່ອທຽບກັບຜົນກຳໄລຂອງຈຸນລະວິສາຫະກິດແລ້ວເຫັນວ່າບໍ່ຄຸ້ມກັບການລົງທຶນ ເຮັດໃຫ້ຄົວເຮືອນສ່ວນໃຫຍ່ເລືອກທີ່ຈະລົງທຶນຄ້າຂາຍຕາມທ່າແຮງຂອງຕົນທີ່ມີ ດ້ວຍຂໍ້ຈຳກັດໃນການເຂົ້າເຖິງແຫຼ່ງທຶນດອກເບ້ຍຜ່ອນຜັນ ເຮັດໃຫ້ບັນດາຄົວເຮືອນທີ່ມີທ່າແຮງດ້ານການຄ້າຂາຍຖືກປິດໂອກາດໃນການຂະຫຍາຍທຸລະກິດ. ພ້ອມດຽວກັນນັ້ນ ເຫັນວ່າ ປະເພດການຄ້າຂາຍແມ່ນບໍ່ຫຼາກຫຼາຍ ແລະ ຂະໜາດຂອງທຸລະກິດແມ່ນບໍ່ໃຫຍ່ ຈຶ່ງເຮັດໃຫ້ຜູ້ຄ້າຂາຍບໍ່ກ້າສ່ຽງໃນການລົງທຶນຫຼາຍ ຈຶ່ງບໍ່ກ້າທີ່ຈະໄປຢືມເງິນນຳທະນາຄານ ແລະ ບໍ່ຢາກເປັນໜີ້ສິນ.

ຮູບສະແດງ 05: ຄົວເຮືອນທີ່ເຮັດການຄ້າ, ປະເພດການຄ້າ ແລະ ແຫຼ່ງທຶນ




ແຫຼ່ງຂໍ້ມູນ: ຈາກການລົງເກັບກຳຂໍ້ມູນຕົວຈິງໃນ 4 ແຂວງກຳລະນີສຶກສາ

❖ **ສະພາບການຂ້າມໄປປະເທດໄທ**

ສະພາບລວມການຂ້າມໄປຝັ່ງໄທຂອງກຸ່ມຕົວຢ່າງສະແດງໃຫ້ເຫັນວ່າ ຄົວເຮືອນທີ່ມີສະມາຊິກເຄີຍຂ້າມໄປຝັ່ງໄທ ແມ່ນກວມອັດຕາສ່ວນ 53,61% ຂອງກຸ່ມຕົວຢ່າງທັງໝົດ, ສ່ວນທີ່ເຫຼືອແມ່ນຄົວເຮືອນທີ່ບໍ່ມີສະມາຊິກເຄີຍຂ້າມໄປຝັ່ງໄທ ກວມອັດຕາສ່ວນ 46,39% ຂອງກຸ່ມຕົວຢ່າງທັງໝົດ. ໃນຈຳນວນຄົວເຮືອນທີ່ມີສະມາຊິກເຄີຍຂ້າມໄປຝັ່ງໄທນັ້ນ, ຄົວເຮືອນທີ່ຂ້າມໄປ ສະເລ່ຍ 1 ຄັ້ງຕໍ່ເດືອນ ກວມສູງເຖິງ 18,65% ແລະ ເປັນຄົວເຮືອນທີ່ເຮັດການຄ້າຂາຍ ກວມອັດຕາ 60,62%. ຈຸດປະສົງໃນການຂ້າມໄປຝັ່ງໄທ ອັນດັບໜຶ່ງແມ່ນ ໄປກວດ ແລະ ປິ່ນປົວສຸຂະພາບ ກວມອັດຕາສ່ວນ 40,41%, ຮອງລົງມາແມ່ນໄປທ່ອງທ່ຽວ ກວມອັດຕາສ່ວນ 31,61%, ແລະ ອັນດັບສາມແມ່ນໄປຊື້ເຄື່ອງ ກວມອັດຕາສ່ວນ 29,02% (ຮູບສະແດງ 06). ເປັນທີ່ນ່າສັງເກດວ່າ ຄົວເຮືອນທີ່ດຳລົງຊີວິດຢູ່ໃກ້ຊາຍແດນເກືອບເຄິ່ງໜຶ່ງ ເລືອກທີ່ຈະໄປຮັບການປິ່ນປົວສຸຂະພາບຢູ່ຝັ່ງໄທ ສາເຫດອາດເນື່ອງມາຈາກບັນຫາດ້ານຄຸນນະພາບການໃຫ້ບໍລິການທາງການແພດຍັງບໍ່ທັນຕອບສະໜອງໄດ້ກັບຄວາມຕ້ອງການເມື່ອທຽບກັບການບໍລິການຢູ່ຝັ່ງໄທ ເຖິງຈະໃຊ້ງົບປະມານທີ່ສູງກວ່າແຕ່ຮັບປະກັນຄຸນນະພາບ ແລະ ມີການບໍລິການທີ່ດີກວ່າ ນອກທັງການເດີນທາງໄປໂຮງໝໍ ຫຼື ສຸກສາລາແມ່ນໄກ ແລະ ໃຊ້ເວລາໃນການເດີນທາງດົນກວ່າຂ້າມໄປທາງຝັ່ງໄທ.

ຮູບສະແດງ 06: ຈຸດປະສົງ ແລະ ສະພາບຂອງຄົວເຮືອນທີ່ຂ້າມໄປປະເທດໄທ



❖ **ສະພາບລາຍຮັບຄົວເຮືອນ**

ຈາກຜົນການສຳຫຼວດເຫັນວ່າສະພາບລາຍຮັບຂອງຄົວເຮືອນທີ່ເຮັດທຸລະກິດອື່ນໆແມ່ນມີລາຍຮັບດີກວ່າ ຄົວເຮືອນທີ່ເຮັດພຽງການຄ້າຂາຍຍົກ-ຂາຍຍ່ອຍ, ໂດຍຄົວເຮືອນທີ່ເຮັດທຸລະກິດອື່ນໆທີ່ຕິດພັນກັບການຄ້າແມ່ນມີລາຍຮັບສະເລ່ຍ 322 ລ້ານກີບຕໍ່ປີ (ມີພຽງແຕ່ 36 ຄົວເຮືອນ) ເຊັ່ນ: ການຂົນສົ່ງ, ການເກັບຊື້ຜົນຜະລິດ ແລະ ການບໍລິການອື່ນໆ, ຄົວເຮືອນທີ່ເຮັດການຄ້າຂາຍຍົກ ຫຼື ຂາຍຍ່ອຍມີລາຍຮັບສະເລ່ຍ 226 ລ້ານກີບຕໍ່ປີ (ມີ 65 ຄົວເຮືອນ) ໂດຍສ່ວນໃຫຍ່ແມ່ນການນຳເຂົ້າສິນຄ້າອຸປະໂພກ-ບໍລິໂພກ ທີ່ຊົມໃຊ້ໃນຊີວິດປະຈຳວັນ ເພື່ອມາຂາຍພາຍໃນຂອບເຂດບ້ານ, ສ່ວນຄົວເຮືອນທີ່ບໍ່ໄດ້ເຮັດການຄ້າຂາຍ ແລະ ທຸລະກິດ ມີລາຍຮັບສະເລ່ຍພຽງ 120 ລ້ານກີບຕໍ່ປີ ແຕ່ມີຄົວເຮືອນເຖິງ 315 ທີ່ກວມອັດຕາສ່ວນສູງໃນຈຳນວນຄົວເຮືອນທີ່ຖືກສຳພາດທັງໝົດ ໂດຍສ່ວນໃຫຍ່ແມ່ນເຮັດນາ-ເຮັດສວນ, ພະນັກງານຮັບຈ້າງ (ຕາຕະລາງ 05).

ເມື່ອສັງເກດເບິ່ງສະພາບລາຍຮັບຂອງຄົວເຮືອນຕໍ່ອຍ່າງຕາມໄລຍະທາງທີ່ຫ່າງຈາກເຂດຊາຍແດນເຫັນວ່າ ຄົວເຮືອນທີ່ຢູ່ບ້ານໃກ້ຂອບເຂດຊາຍແດນແມ່ນມີລາຍຮັບສະເລ່ຍ ດີກວ່າຄົວເຮືອນທີ່ຢູ່ບ້ານຫ່າງໄກຊາຍແດນ ແລະ ບ້ານໄລຍະທາງປານກາງ ເຊິ່ງມີລາຍຮັບສະເລ່ຍ 225 ລ້ານກີບຕໍ່ປີ, ຮອງລົງມາແມ່ນບ້ານທີ່ມີໄລຍະທາງໄກຈາກຊາຍແດນສະເລ່ຍ 120 ລ້ານກີບຕໍ່ປີ ແລະ ບ້ານມີໄລຍະທາງປານກາງສະເລ່ຍ 118 ລ້ານກີບຕໍ່ປີ (ຕາຕະລາງ 06) ສະແດງໃຫ້ເຫັນວ່າ ຄົວເຮືອນທີ່ຢູ່ໃກ້ເຂດຊາຍແດນມີໂອກາດສ້າງລາຍຮັບຈາກການເຮັດທຸລະກິດຕ່າງໆຈາກການຄ້າຊາຍແດນ ຫຼາຍກວ່າບ້ານທີ່ຢູ່ຫ່າງຈາກເຂດຊາຍແດນ ແຕ່ການຄ້າຂາຍສ່ວນໃຫຍ່ຂອງຄົວເຮືອນທີ່ອາໄສລຽບຕາມເຂດຊາຍແດນກໍ່ຍັງແມ່ນການຄ້າຂາຍຍ່ອຍ ທີ່ນຳເຂົ້າຈາກປະເທດໄທເປັນສຳຄັນ. ແຕ່ກົງກັນຂ້າມ, ການສົ່ງອອກຂອງຄົວເຮືອນທີ່ຢູ່ໃກ້ເຂດຊາຍແດນແມ່ນປະເພດເຄື່ອງປ່າຂອງດົງ ແລະ ສິນຄ້າກະສິກຳ. ຂໍ້ມູນທີ່ໄດ້ນີ້ສະແດງໃຫ້ເຫັນວ່າ ກິດຈະກຳທາງເສດຖະກິດຍັງມີໜ້ອຍ, ໂຮງຈັກໂຮງງານກໍ່ບໍ່ມີເພື່ອມາປຸງແຕ່ງ ສ່ວນໃຫຍ່ແມ່ນອາໄສການຄ້າຂາຍຍ່ອຍໃນຂອບເຂດບ້ານເທົ່ານັ້ນ ເປັນການຊື້ມາຂາຍໄປເທົ່ານັ້ນ.

ຕາຕະລາງ 05: ລາຍຮັບສະເລ່ຍແບ່ງຕາມປະເພດທຸລະກິດ (ກີບຕໍ່ປີ)

| ເຮັດຄ້າຂາຍ ແລະ ທຸລະກິດ | ຈຳນວນຄົວເຮືອນ | ລາຍຮັບສະເລ່ຍ |
|---|---|---|
| ຄ້າຍົກ/ຍ່ອຍ | 65 | 226.000.000 |
| ທຸລະກິດອື່ນໆ | 36 | 322.000.000 |
| ບໍ່ໄດ້ເຮັດຄ້າຂາຍ ແລະ ທຸລະກິດ | 315 | 120.000.000 |

ແຫຼ່ງຂໍ້ມູນ: ຈາກການລົງສຳພາດຕົວຈິງໃນແຂວງສີກສາ, ສຄອ

ຕາຕະລາງ 06: ລາຍຮັບສະເລ່ຍແບ່ງຕາມໄລຍະທາງຂອງບ້ານ (ກີບຕໍ່ປີ)

| ໄລຍະທາງຂອງບ້ານ | ຈຳນວນຄົວເຮືອນ | ລາຍຮັບສະເລ່ຍ |
|---|---|---|
| ບ້ານໃກ້ຊາຍແດນ | 139 | 225.000.000 |
| ບ້ານຢູ່ໄລຍະກາງ | 140 | 118.000.000 |
| ບ້ານໄກຊາຍແດນ | 137 | 120.000.000 |

ແຫລ່ງຂໍ້ມູນ: ຈາກການລົງສຳພາດຕົວຈິງໃນແຂວງສີກສາ, ສຄອ

** ໝາຍເຫດ: ການກຳນົດໄລຍະທາງຂອງບ້ານໃກ້, ໄລຍະກາງ ແລະ ໄກຊາຍແດນ ແມ່ນອີງໃສ່ດ່ານປະເພດຕ່າງໆທີ່ຕິດກັບບ້ານທີ່ລົງສຳຫຼວດ ເຊິ່ງຜ່ານການລົງຕິດຕາມຕົວຈິງສາມາດສະເລ່ຍໄດ້ຄື: ບ້ານໃກ້ ແມ່ນຕ່ຳກວ່າ 3 ກິໂລແມັດ, ບ້ານໄລຍະກາງ ສູງກວ່າ 3 ແຕ່ຕ່ຳກວ່າ 18 ກິໂລແມັດ ແລະ ບ້ານໄກຊາຍແດນແມ່ນສູງກວ່າ 18 ແຕ່ຕ່ຳກວ່າ 30 ກິໂລແມັດ.*

### ❖ ສະພາບການຂ້າມໄປຊື້-ຂາຍສິນຄ້າ

ສະພາບລວມການຂ້າມໄປຊື້-ຂາຍສິນຄ້າຢູ່ຝັ່ງໄທຂອງກຸ່ມຕົວຢ່າງ ເຫັນວ່າປະມານ 8% ຂອງກຸ່ມຕົວຢ່າງມີການຂ້າມໄປໄທເພື່ອຊື້-ຂາຍສິນຄ້າ. ໃນນັ້ນ, ຄົວເຮືອນທີ່ຂ້າມໄປຊື້ສິນຄ້າກວມອັດຕາສ່ວນ 88,57%, ສ່ວນຄົວເຮືອນທີ່ໄປຂາຍສິນຄ້າ ກວມອັດຕາສ່ວນພຽງ 8,5%. ເຖິງແມ່ນວ່າ, ໄລຍະຜ່ານມາໄດ້ເກີດມີການແຜ່ລະບາດພະຍາດໂຄວິດ-19 ໄດ້ສົ່ງຜົນກະທົບເຮັດໃຫ້ກິດຈະກາທາງເສດຖະກິດຫຼາຍອັນປ່ຽນແປງໄປແຕ່ສະພາບການແຜ່ລະບາດພະຍາດໂຄວິດ-19 ເກືອບວ່າບໍ່ໄດ້ສົ່ງຜົນກະທົບເຮັດໃຫ້ຈຳນວນຄົວເຮືອນທີ່ຂ້າມໄປຈັບຈ່າຍ-ຊື້ຂາຍສິນຄ້າຢູ່ຝັ່ງໄທຫຼຸດລົງເລີຍ. ໃນໄລຍະ 1 ປີຜ່ານມາ, ຄົວເຮືອນໄດ້ຂ້າມໄປຂາຍສິນຄ້າຢູ່ໄທ ລວມເປັນເງິນທັງໝົດ 38.000 ລ້ານກີບ, ໃນຂະນະທີ່ຂ້າມໄປຊື້ສິນຄ້າ ແລະ ບໍລິການຢູ່ໄທ ລວມເປັນເງິນທັງໝົດ 54.200 ລ້ານກີບ, ຂາດດຸນ 16.200 ລ້ານກີບ. ມູນຄ່າທີ່ຊື້ສິນຄ້າ ແລະ ບໍລິການຢູ່ໄທ ກວມ 84,42% ຂອງລາຍຮັບຄົວເຮືອນທັງໝົດ (ລາຍຮັບຕົວຢ່າງທັງໝົດ 64.200 ລ້ານກີບ). ລາຍການທີ່ນຳໄປຂາຍຕົ້ນຕໍ ໄດ້ແກ່: ເຄື່ອງປ່າຂອງດົງ, ສ່ວນສິນຄ້າທີ່ຊື້ຢູ່ໄທໄດ້ແກ່: ໄປປິ່ນປົວສຸຂະພາບ, ຢາປົວພະຍາດ, ອາຫານ (ຜັກ, ໝາກໄມ້, ຊີ້ນ, ເຄື່ອງດື່ມ, ເຄື່ອງປຸງ,...), ເຄື່ອງໃຊ້ໃນຄົວເຮືອນ, ເສື້ອຜ້າ, ປຸ໋ຍ, ຫົວອາຫານສັດ, ວັດຖຸອຸປະກອນຮັບໃຊ້ການຄ້າຂາຍ ເຊັ່ນ: ອຸປະກອນຮ້ານເສີມຄວາມງາມ. ສ່ວນຮູບແບບການຊຳລະສະສາງແມ່ນການຊຳລະເປັນເງິນສົດທັງໝົດ. ຕໍ່ກັບສະພາບການແລກປ່ຽນເງິນຕາຕ່າງປະເທດຄົວເຮືອນທີ່ນຳໃຊ້ອັດຕາແລກປ່ຽນນອກລະບົບກວມອັດຕາສູງເຖິງ 51,25%, ອີກ 41,25% ແມ່ນຄົວເຮືອນທີ່ບໍ່ຕ້ອງການແລກປ່ຽນເນື່ອງຈາກມີລາຍຮັບເປັນເງິນສະກຸນຕ່າງປະເທດຢູ່ແລ້ວ, ແຕ່ສິ່ງທີ່ໜ້າເປັນຫ່ວງເຫັນວ່າມີພຽງແຕ່ 4,38% ຂອງຄົວເຮືອນທີ່ຂ້າມໄປຊື້-ຂາຍສິນຄ້າຢູ່ຝັ່ງໄທໃຊ້ອັດຕາແລກປ່ຽນຂອງທະນາຄານ. ສາເຫດທີ່ເປັນເຊັ່ນນັ້ນ ສ່ວນໜຶ່ງອາດມາຈາກສ່ວນຕ່າງອັດຕາແລກປ່ຽນໃນ ແລະ ນອກລະບົບທີ່ກວ້າງຫຼາຍ ບວກກັບການຄຸ້ມຄອງຮ້ານອັດຕາແລກປ່ຽນນອກລະບົບບໍ່ທັນເປັນຮູບປະທຳເທົ່າທີ່ຄວນ.

ຮູບສະແດງ 07: : ສະພາບການຂ້າມໄປຊື້-ຂາຍຢູ່ປະເທດໄທ




ແຫຼ່ງຂໍ້ມູນ: ຈາກການລົງສໍາຫຼວດໃນ 4 ແຂວງກໍລະນີສຶກສາ

### ❖ ສະພາບລວມການໂອນເງິນກັບບ້ານ

ສະພາບລວມການໂອນເງິນກັບບ້ານຂອງແຮງງານທີ່ຂ້າມໄປເຮັດວຽກຢູ່ຝັ່ງໄທຂອງກຸ່ມຕົວຢ່າງ ເຫັນວ່າ ຄົວເຮືອນທີ່ມີສະມາຊິກຂ້າມໄປເຮັດວຽກຢູ່ຝັ່ງໄທມີຈໍານວນ 131 ຄົວເຮືອນ ກວມອັດຕາສ່ວນ 31,5% ຂອງກຸ່ມຕົວຢ່າງທັງໝົດ (ໃນນີ້ລວມທັງຄົວເຮືອນທີ່ມີສະມາຊິກເຄີຍໄປ ແລະ ກໍາລັງໄປເຮັດວຽກ). ໃນນັ້ນ, ມີ 100 ຄົວເຮືອນທີ່ມີສະມາຊິກຍັງເຮັດວຽກຢູ່ປະເທດໄທ ກວມອັດຕາ 24% ແລະ 31 ຄົວເຮືອນທີ່ມີສະມາຊິກເຄີຍໄປ (ແຕ່ປັດຈຸບັນແມ່ນບໍ່ໄດ້ໄປ) ກວມອັດຕາ 7,5%, ສ່ວນທີ່ເຫຼືອແມ່ນຄົວເຮືອນທີ່ບໍ່ມີສະມາຊິກເຄີຍຂ້າມໄປຝັ່ງໄທຈໍານວນ 285 ຄົວເຮືອນ ກວມອັດຕາສ່ວນ 68,5% (ຮູບສະແດງ 08 ແລະ ຕາຕະລາງ 09). ພ້ອມກັນນັ້ນ, ມູນຄ່າເງິນໂອນກັບບ້ານຂອງແຮງງານທີ່ກໍາລັງໄປອອກແຮງງານຢູ່ປະເທດໄທມີມູນຄ່າບໍ່ໜ້ອຍ ສະເລ່ຍ 1 ປີ ມີມູນຄ່າທັງໝົດ 2.290 ລ້ານກີບ (ສະເລ່ຍ 22,9 ລ້ານ/ຄົນ/ປີ). ໃນນີ້, ສໍາລັບແຂວງໄຊຍະ: ແຮງງານສົ່ງເງິນກັບບ້ານທັງໝົດ 174 ລ້ານກີບ ສະເລ່ຍ 15,8 ລ້ານ/ຄົນ/ປີ, ແຂວງສະຫວັນນະເຂດ: 722 ລ້ານກີບ ສະເລ່ຍ 20,6 ລ້ານ/ຄົນ/ປີ ແລະ ແຂວງຈໍາປາສັກ: 1.390 ລ້ານກີບ ສະເລ່ຍ 25,7 ລ້ານ/ຄົນ/ປີ. ສໍາລັບຄົວເຮືອນຕົວຢ່າງແຂວງບໍ່ແກ້ວແມ່ນບໍ່ມີແຮງງານທີ່ໄປເຮັດວຽກຢູ່ຕ່າງປະເທດ (ຕາຕະລາງ 8)

ຮູບສະແດງ 08: ອັດຕາສ່ວນຄົວເຮືອນທີ່ໄປເຮັດວຽກຢູ່ໄທ




ຕາຕະລາງ 07: ຈຳນວນ ແລະ ອັດຕາສ່ວນຄົວເຮືອນທີ່ໄປເຮັດວຽກຢູ່ໄທ

| **ສະພາບຄົວເຮືອນໄປເຮັດວຽກຢູ່ໄທ** | **ຈຳນວນ** | **ເປີເຊັນ** |
|---|---|---|
| ຄົວເຮືອນທີ່ກຳລັງໄປ | 100 | 24% |
| ຄົວເຮືອນທີ່ເຄີຍໄປ | 31 | 7,5% |
| ຄົວເຮືອນທີ່ບໍ່ເຄີຍໄປ | 285 | 68,5% |

ຕາຕະລາງ 08: ມູນຄ່າລວມ ແລະ ມູນຄ່າສະເລ່ຍການໂອນເງິນກັບບ້ານຂອງຄົວເຮືອນທີ່ໄປເຮັດວຽກຢູ່ໄທແຍກຕາມແຂວງ

| **ແຂວງ** | **ຈຳນວນ** | **ມູນຄ່າລວມ/ປີ** | **ມູນຄ່າສະເລ່ຍກີບ/ຄົນ/ປີ** |
|---|---|---|---|
| ແຂວງໄຊຍະບູລີ | 11 | 174.000.000 | 15.818.182 |
| ແຂວງສະຫວັນນະເຂດ | 35 | 722.000.000 | 20.628.571 |
| ແຂວງຈຳປາສັກ | 54 | 1.390.000.000 | 25.740.741 |
| ລວມ | 100 | 2.286.000.000 | 22.860.000 |

ແຫຼ່ງຂໍ້ມູນ: ຄິດໄລ່ຈາກຜົນການລົງສຳຫຼວດໃນ 4 ແຂວງກໍລະນີສຶກສາ

## 4.2. ຈຸດປະສົງ 3: ເພື່ອສຶກສາເບິ່ງສິ່ງກີດຂວາງທາງການຄ້າທີ່ບໍ່ແມ່ນພາສີ-ອາກອນ.

ຜູ້ປະກອບການຂອງກຸ່ມຕົວຢ່າງທີ່ສຸ່ມຈາກແຂວງກໍລະນີສຶກສາ ທັງໝົດລວມມີ 20 ບໍລິສັດ; 5 ບໍລິສັດຕໍ່ແຂວງ. ໃນນັ້ນ, ການຄ້າກວມເອົາ 21%, ກະສິກຳ 21%, ຂົນສົ່ງ 29%, ທ່ອງທ່ຽວ 21% ແລະ ອື່ນໆກວມເອົາ 7% (ຮູບສະແດງ 09). ບໍລິສັດທີ່ເຮັດທຸລະກິດຄ້າຂາຍກັບຕ່າງປະເທດກວມເອົາ 50% ໂດຍຄ້າຂາຍກັບປະເທດໄທກວມເອົາ 50%, ສປ ຈີນ 31% ແລະ ສສ ຫວຽດນາມ 19% ເປັນຕົ້ນແມ່ນສິນຄ້າກະສິກຳ, ຮອງລົງມາແມ່ນການບໍລິການຂົນສົ່ງ ແລະ ເຄື່ອງອຸປະໂພກ-ບໍລິໂພກ.

ການດຳເນີນທຸລະກິດກັບຕ່າງປະເທດຍັງມີອຸປະສັກຫຼາຍຢ່າງ ນອກຈາກສິ່ງກີດຂວາງດ້ານພາສີ-ອາກອນແລ້ວຍັງພົບອຸປະສັກໃນຂັ້ນຕອນການປະກອບເອກະສານການຄ້າທີ່ຊັບຊ້ອນ ແລະ ໃຊ້ເວລາດົນ ພ້ອມທັງຄ່າໃຊ້ຈ່າຍໃນການປະກອບເອກະສານກໍ່ສູງ, ຂໍ້ບັງຄັບດ້ານລະບຽບກົດໝາຍ, ການເຂົ້າເຖິງເອກະສານແຈ້ງການ ແລະ ນະໂຍບາຍແຕ່ລະໄລຍະຂອງພາກລັດຍັງຈຳກັດ, ຊັກຊ້າ, ການກຳນົດໂຄຕ້າສົ່ງອອກຈາກປະເທດຄູ່ຄ້າຍັງມີຈຳກັດ ບວກກັບສະພາບການອ່ອນຄ່າຂອງເງິນກີບ ແລະ ເງິນເຟີ້ເຮັດໃຫ້ຄ່າແຮງງານເພີ່ມຂຶ້ນ ສົ່ງຜົນກະທົບຕໍ່ຕົ້ນທຶນການຜະລິດເພີ່ມຂຶ້ນ, ການຄົມມະນາຄົມບໍ່ສະດວກ ເຊັ່ນຖະໜົນຫົນທາງເປ່ເພ ເຮັດໃຫ້ການຂົນສົ່ງເກີດຄວາມຫຼ້າຊ້າບໍ່ທັນຕາມກຳນົດເວລານັດໝາຍ. ສຳລັບການຜະລິດກະສິກຳແມ່ນພົບສິ່ງທ້າທາຍໃນການແຂ່ງຂັນ ໂດຍສະເພາະແມ່ນບໍລິສັດ

ສປ ຈີນ ເຂົ້າມາດຳເນີນການຜະລິດພາຍໃຕ້ຮູບແບບການຂຶ້ນທະບຽນໃສ່ຊື່ຄົນລາວ ເຊິ່ງເປັນການຍາດສ່ວນແບ່ງຕະຫຼາດຈາກຜູ້ຜະລິດພາຍໃນ.

ຈາກອຸປະສັກເຫຼົ່ານີ້ຜູ້ປະກອບການກໍ່ມີການປັບວິທີການດຳເນີນທຸລະກິດ ເພື່ອໃຫ້ການດຳເນີນທຸລະກິດມີຄວາມສະດວກຂຶ້ນ ໂດຍສະເພາະການຫຼຸດຜ່ອນການນຳເຂົ້າວັດຖຸອຸປະກອນການຜະລິດທີ່ບໍ່ຈຳເປັນ, ຫຼຸດຜ່ອນການສະຕັອກສິນຄ້າລົງ, ເພີ່ມຜະລິດຕະພັນໃຫ້ມີຄວາມຫຼາກຫຼາຍ ແລະ ຫັນມາໃຊ້ສື່ອອນລາຍໃນການໂຄສະນາສິນຄ້າ. ສຳລັບການຜະລິດກະສິກຳກໍ່ໄດ້ພະຍາຍາມຫຼີກລ້ຽງການຂາຍໃຫ້ພໍ່ຄ້າຄົນກາງ ແລະ ແປຮູບຜະລິດຕະພັນກະສິກຳເປັນຜະລິດຕະພັນຫຸ້ມຫໍ່.

ຮູບສະແດງ 09: ປະເພດທຸລະກິດຂອງຕົວຢ່າງຜູ້ປະກອບການ




### 4.3. ຈຸດປະສົງ 4 ແລະ 5: ເພື່ອສຶກສາເບິ່ງການພົວພັນລະຫວ່າງການຄ້າຊາຍແດນ ແລະ ການໂອນເງິນກັບບ້ານກັບສະພາບເສດຖະກິດຂອງຄົວເຮືອນ ຢູ່ບັນດາແຂວງເປົ້າໝາຍ.

ແບບຈຳລອງທີ່ນຳໃຊ້ໃນການສຶກສາຄັ້ງນີ້ປະກອບມີ 2 ຮູບແບບຈຳລອງ ຄື: 1) ແບບຈຳລອງ OLS ທີ 1 ສຶກສາບົດບາດການຄ້າຊາຍແດນກັບລາຍຮັບຂອງຄົວເຮືອນ ເຊິ່ງລາຍຮັບແມ່ນຕົວຊີ້ວັດທີ່ສຳຄັນໃນການປັບປຸງລະດັບຊີວິດການເປັນຢູ່ຂອງປະຊາຊົນ ແລະ ແບບຈຳລອງ OLS ທີ 2 ສຶກສາບົດບາດການຄ້າຊາຍແດນມີຜົນຕໍ່ການຜະລິດກະສິກຳຂອງຄົວເຮືອນຫຼາຍປານໃດ ເນື່ອງຈາກວ່າຄົວເຮືອນສ່ວນໃຫຍ່ແມ່ນປະກອບອາຊີບກະສິກຳ ເພື່ອຊຸກຍູ້ການດຳລົງຊີວິດ ເຊິ່ງການສຶກສາໄດ້ເລືອກເອົາຜົນຜະລິດເຂົ້າເປັນຕົວປ່ຽນຕົວແທນຂອງການຜະລິດກະສິກຳ (ຕາຕະລາງທີ 10 ແລະ 11).

#### 4.3.1. ຄ່າສະເລ່ຍ, ຄ່າຜັນປ່ຽນ, ຄ່າຕ່ຳສຸດ ແລະ ຄ່າສູງສຸດຂອງບັນດາຕົວປ່ຽນ

ການສຶກສາໃນຄັ້ງນີ້ໄດ້ກຳນົດເອົາ 10-12 ປັດໄຈ ຫຼື ຕົວປ່ຽນ ເພື່ອຊອກຫາຄ່າສຳປະສິດຕົວປ່ຽນອິດສະຫຼະມາອະທິບາຍຕົວປ່ຽນຕາມ, ໃນນັ້ນ: ຕົວປ່ຽນຕາມ ໄດ້ແກ່: ລາຍຮັບຄົວເຮືອນ ແລະ ຜົນຜະລິດເຂົ້າຂອງຄົນເຮືອນ; ສ່ວນຕົວປ່ຽນອິດສະຫຼະ ປະກອບມີ: ເຮັດການຄ້າຊາຍແດນ / ຂ້າມໄປຊື້-ຂາຍກັບປະເທດໄທ, ລາຍຮັບຈາກການໂອນເງິນກັບບ້ານ, ກອງທຶນບ້ານ, ຈຳນວນໂຮງງານໃກ້ບ້ານ, ບ້ານທີ່ຕັ້ງຢູ່ໃກ້ຊາຍແດນ, ແຂວງ, ລະດັບການສຶກສາຂອງຫົວໜ້າຄົວເຮືອນ, ອາຊີບຫຼັກປັດຈຸບັນຂອງຫົວໜ້າຄົວເຮືອນ, ຄົວເຮືອນທີ່ເຮັດຄ້າຂາຍ, ເນື້ອທີ່ດິນກະສິກຳ, ເຄື່ອງຈັກການຜະລິດ ເຊັ່ນ: ລົດຈີກ, ລົດດູດ, ລົດໄຖ, ຈຳນວນສັດໃຫຍ່ ໄດ້ແກ່: ງົວ, ຄວາຍ, ໝູ, ແບ້, ເຊິ່ງມີຄ່າສະເລ່ຍ, ຄ່າຜັນປ່ຽນ, ຄ່າຕ່ຳສຸດ ແລະ ຄ່າສູງສຸດ ດັ່ງສະແດງໃນຕາຕະລາງ 9 ແລະ 10 ລຸ່ມນີ້:

ຕາຕະລາງ 09: ຄ່າສະຖິຕິພັນລະນາຂອງຕົວປ່ຽນທີ່ນຳໃຊ້ເຂົ້າໃນການສຶກສາ (ແບບຈຳລອງ ທີ 1)

| ຕົວປ່ຽນ | ຫົວໜ່ວຍ | ຈຳນວນ (Obs) | ຄ່າສະເລ່ຍ (Mean) | ຄ່າຜັນປ່ຽນ (Std. Dev) | ຕ່ຳສຸດ (Min) | ສູງສຸດ (Max) |
|---|---|---|---|---|---|---|
| **ຕົວປ່ຽນຕາມ (Dependent Variable)** | | | | | | |
| ລາຍຮັບຄົວເຮືອນ | ຮູບແບບ Ln | 383 | 17,8 | 1,3 | 10,3 | 22,8 |
| **ຕົວປ່ຽນອິດສະຫຼະ (Independent Variable)** | | | | | | |
| ການຄ້າຊາຍແດນ | Dummy | 383 | 0,08 | 0,3 | 0 | 1 |
| ເງິນໂອນ | ຮູບແບບ Ln | 383 | 4,1 | 7,2 | 0 | 18,6 |
| **ຄຸນລັກສະນະຂອງບ້ານ** | | | | | | |
| ກອງທຶນບ້ານ | Dummy | 383 | 0,6 | 0,5 | 0 | 1 |
| ໂຮງງານໃກ້ບ້ານ | ແຫ່ງ | 383 | 0,5 | 0,5 | 0 | 44 |
| ບ້ານໃກ້ຊາຍແດນ | Dummy | 383 | 0,4 | 0,5 | 0 | 1 |
| **ຄຸນລັກສະນະຂອງຄົວເຮືອນ** | | | | | | |
| ການສຶກສາຫົວໜ້າຄົວເຮືອນ | ຊັ້ນຮຽນ | 383 | 2,6 | 0,8 | 1 | 4 |
| ອາຊີບກະສິກຳ | Dummy | 383 | 0 | 0,5 | 0 | 1 |
| ທຸລະກິດຄົວເຮືອນ | Dummy | 383 | 0,2 | 0,4 | 0 | 1 |
| **ປັດໄຈການຜະລິດ** | | | | | | |
| ເຄື່ອງຈັກການຜະລິດ | ອັນ | 383 | 0,9 | 0,9 | 0 | 5 |
| ສັດໃຫຍ່ | ໂຕ | 383 | 2,6 | 0,8 | 0 | 117 |

ແຫຼ່ງຂໍ້ມູນ: ຄິດໄລ່ໂດຍ ສຄອ, ກະຊວງແຜນການ ແລະ ການລົງທຶນ

ຕາຕະລາງ 10: ຄ່າສະຖິຕິພັນລະນາຂອງຕົວປ່ຽນທີ່ນຳໃຊ້ເຂົ້າໃນການສຶກສາ (ແບບຈຳລອງ ທີ 2).

| ຕົວປ່ຽນ | ຫົວໜ່ວຍ | ຈຳນວນ (Obs) | ຄ່າສະເລ່ຍ (Mean) | ຄ່າຜັນປ່ຽນ (Std. Dev) | ຕ່ຳສຸດ (Min) | ສູງສຸດ (Max) |
|---|---|---|---|---|---|---|
| **ຕົວປ່ຽນຕາມ (Dependent Variable)** | | | | | | |
| ຜົນຜະລິດເຂົ້າ | ໂຕນ | 255 | 3,6 | 2.7 | 0,3 | 25 |
| **ຕົວປ່ຽນອິດສະຫຼະ (Independent Variable)** | | | | | | |
| ລາຍຮັບຄົວເຮືອນ | ຮູບແບບ Ln | 239 | 17.6 | 1,2 | 13,5 | 20,9 |
| ການຄ້າຊາຍແດນ | Dummy | 255 | 0,05 | 0,2 | 0 | 1 |
| ເງິນໂອນ | ຮູບແບບ Ln | 255 | 4,7 | 7,5 | 0 | 18,6 |
| **ຄຸນລັກສະນະຂອງບ້ານ** | | | | | | |
| ກອງທຶນບ້ານ | Dummy | 255 | 0,7 | 0,5 | 0 | 1 |
| ບ້ານໃກ້ຊາຍແດນ | Dummy | 255 | 0,4 | 0,4 | 0 | 1 |
| **ຄຸນລັກສະນະຂອງຄົວເຮືອນ** | | | | | | |
| ການສຶກສາຫົວໜ້າຄົວເຮືອນ | ຊັ້ນຮຽນ | 255 | 2,6 | 0,8 | 1 | 4 |
| **ປັດໄຈການຜະລິດ** | | | | | | |
| ເນື້ອທີ່ດິນກະສິກຳ | ເຮັກຕາ | 254 | 3,4 | 4,9 | 0 | 44 |
| ເຄື່ອງຈັກການຜະລິດ | ອັນ | 255 | 1,1 | 0,9 | 0 | 5 |
| ສັດໃຫຍ່ | ໂຕ | 255 | 9,1 | 13,4 | 0 | 100 |

ແຫຼ່ງຂໍ້ມູນ: ຄິດໄລ່ໂດຍ ສຄອ, ກະຊວງແຜນການ ແລະ ການລົງທຶນ

### 4.3.2. ຜົນການຄາດປະມານຈາກແບບຈຳລອງ (OLS regression)

ຕາຕະລາງ 11: ຜົນຂອງການຄາດປະມານຈາກແບບຈຳລອງ 1

| **ລາຍຮັບຄົວເຮືອນ** | Coef. | St.Err. | t-value | p-value | [95% Conf | Interval] | Sig |
|---|---|---|---|---|---|---|---|
| ການຄ້າຊາຍແດນ | -0.00474 | 0.286764 | -0.02 | 0.987 | -0.56865 | 0.559161 | |
| ເງິນໂອນ | -0.00333 | 0.010659 | -0.31 | 0.755 | -0.02429 | 0.01763 | |
| ກອງທຶນບ້ານ | -0.35226 | 0.15361 | -2.29 | 0.022 | -0.65432 | -0.05019 | ** |
| ໂຮງງານໃກ້ບ້ານ | 0.270148 | 0.157499 | 1.72 | 0.087 | -0.03957 | 0.579863 | * |
| ບ້ານໃກ້ຊາຍແດນ | 0.009035 | 0.144495 | 0.06 | 0.95 | -0.27511 | 0.293177 | |
| ອາຊີບກະສິກຳ | -0.42993 | 0.139963 | -3.07 | 0.002 | -0.70516 | -0.1547 | *** |
| ທຸລະກິດຄົວເຮືອນ | 0.215822 | 0.185966 | 1.16 | 0.247 | -0.14987 | 0.581515 | |
| ພາຫະນະການຜະລິດ | 0.116189 | 0.070939 | 1.64 | 0.102 | -0.02331 | 0.255688 | |
| ສັດໃຫຍ່ | 0.014974 | 0.004817 | 3.11 | 0.002 | 0.005501 | 0.024446 | *** |
| **ບໍ່ໄດ້ຮຽນ** | | | | | | | |
| ຊັ້ນປະຖົມ | 0.295263 | 0.230328 | 1.28 | 0.201 | -0.15766 | 0.74819 | |
| ມັດທະຍົມຕົ້ນ-ປາຍ | 0.131596 | 0.222992 | 0.59 | 0.555 | -0.30691 | 0.570098 | |
| ສູງກວ່າມັດທະຍົມປາຍ | 0.349138 | 0.278967 | 1.25 | 0.212 | -0.19944 | 0.897712 | |
| **ບໍ່ແກ້ວ** | | | | | | | |
| ໄຊຍະບູລີ | -0.00755 | 0.214141 | -0.04 | 0.972 | -0.42865 | 0.413543 | |
| ສະຫວັນນະເຂດ | -0.01384 | 0.220449 | -0.06 | 0.95 | -0.44734 | 0.419665 | |
| ຈຳປາສັກ | -0.12006 | 0.208614 | -0.58 | 0.565 | -0.53029 | 0.290166 | |
| ຄ່າຄົງທີ່ | 17.69649 | 0.289819 | 61.06 | 0 | 17.12657 | 18.2664 | *** |

| | | | |
|---|---|---|---|
| Mean dependent var | 17.801 | SD dependent var | 1.315 |
| R-squared | 0.115 | Number of obs | 383 |
| F-test | 3.166 | Prob > F | 0.000 |
| Akaike crit. (AIC) | 1281.032 | Bayesian crit. (BIC) | 1344.201 |

ໝາຍເຫດ: *(*): ໝາຍເຖິງລະດັບຄວາມເຊື່ອໝັ້ນ 90%,*

*(**): ໝາຍເຖິງລະດັບຄວາມເຊື່ອໝັ້ນ 95%,*

*(***): ໝາຍເຖິງລະດັບຄວາມເຊື່ອໝັ້ນ 99%,*

ແຫຼ່ງຂໍ້ມູນ: ຄິດໄລ່ໂດຍ ສຄອ, ກະຊວງແຜນການ ແລະ ການລົງທຶນ

❖ **ຜົນການສຶກສາ ແບບຈຳລອງທີ (1) ສຶກສາບົດບາດການຄ້າຊາຍແດນກັບລາຍຮັບຂອງຄົວເຮືອນ:**

ຈາກຜົນການຄິດໄລ່ແແບບຈຳລອງທີ 1 ໃນຕາຕະລາງທີ 11 ຊີ້ໃຫ້ເຫັນວ່າມີ 4 ປັດໄຈທີ່ມີສາຍພົວພັນໃນລະດັບຄວາມສຳຄັນດ້ານສະຖິຕິກັບລາຍຮັບຂອງຄົວເຮືອນ ເຊິ່ງລາຍລະອຽດສາມາດອະທິບາຍໄດ້ດັ່ງນີ້:

1) ການຄ້າຊາຍແດນບໍ່ມີຄວາມສຳຄັນດ້ານສະຖິຕິກັບລາຍຮັບຂອງຄົວເຮືອນ. ນີ້ໝາຍຄວາມວ່າຄົວເຮືອນໃດທີ່ປະກອບອາຊີບດ້ານຄ້າຂາຍທີ່ຕິດພັນກັບການຄ້າຊາຍແດນເຫັນວ່າບໍ່ແມ່ນປັດໄຈທີ່ພາໃຫ້ລະດັບລາຍຮັບຂອງຄົວເຮືອນເພີ່ມຂຶ້ນ. ເນື່ອງຈາກວ່າຄົວເຮືອນໃນກຸ່ມດັ່ງກ່າວແມ່ນການຄ້າຂອງແບບຍ່ອຍ ແລະ ຂະໜາດນ້ອຍ ເຊິ່ງສ່ວນໃຫຍ່ກໍ່ແມ່ນການຊື້ສິນຄ້າຜ່ານແດນເພື່ອມາຂາຍໃນຊຸມຊົນ. ພ້ອມນັ້ນ, ຄົວເຮືອນຕົວແທນຈຳນວນໜຶ່ງທີ່ນຳສິນຄ້າໄປຂາຍກໍ່ແມ່ນການຄ້າຂາຍວັດຖຸດິບ, ເຄື່ອງປ່າຂອງດົງທີ່ມີມູນຄ່າຕໍ່າ. ສະນັ້ນຈຶ່ງເວົ້າໄດ້ວ່າບົດບາດດຳເນີນກິດຈະກຳການຄ້າຂາຍທີ່ຕິດພັນກັບການຄ້າຊາຍແດນ ບໍ່ສາມາດປະກອບສ່ວນໃຫ້ການເພີ່ມລາຍຮັບ ແລະ ການປັບປຸງການດຳລົງຊີວິດຄົວເຮືອນ;
2) ຕົວປ່ຽນກ່ຽວກັບການເຂົ້າເຖິງກອງທຶນຂັ້ນບ້ານມີຄວາມສຳຄັນດ້ານສະຖິຕິດ້ານລົບກັບລາຍຮັບຂອງຄົວເຮືອນ. ຖ້າຄົວເຮືອນໄດ້ເຂົ້າເຖິງກອງທຶນບ້ານຈະເຮັດໃຫ້ລາຍຮັບຄົວເຮືອນຫຼຸດລົງ 0,3% ສົມທຽບກັບຄົວເຮືອນທີ່ບໍ່ໄດ້ເຂົ້າເຖິງກອງທຶນບ້ານ. ສິ່ງດັ່ງກ່າວນີ້ຊີ້ໃຫ້ເຫັນວ່າກອງທຶນບ້ານແມ່ນມີວົງເງິນຈຳກັດ ແລະ ມີເປົ້າໝາຍສຳລັບຄົວເຮືອນສະເພາະ ເພື່ອລົງທຶນເຂົ້າໃສ່ກິດຈະກຳລົງທຶນຂະໜາດນ້ອຍ ໂດຍບໍ່ໄດ້ສົ່ງຜົນໃຫ້ມີລາຍຮັບທີ່ດີຂຶ້ນ ໂດຍສະເພາະແແມ່ນຄົວເຮືອນທີ່ດຳເນີນທຸລະກິດ ຫຼື ມີການດຳເນີນທຸລະກິດຂະໜາດໃຫຍ່ ອາດຈະເຂົ້າເຖິງແຫຼ່ງທຶນຂະໜາດໃຫຍ່ເຊັ່ນ: ທະນາຄານ ແລະ ກອງທຶນຂະໜາດໃຫຍ່ອື່ນໆ;
3) ຄົວເຮືອນທີ່ຢູ່ໃກ້ກັບເຂດທີ່ມີໂຮງງານມີສາຍພົວພັນດ້ານສະຖິຕິດ້ານບວກກັບລາຍຮັບຂອງຄົວເຮືອນ. ຖ້າຄົວເຮືອນດັ່ງກ່າວຢູ່ໃນເຂດທີ່ໃກ້ໂຮງງານຈະເຮັດໃຫ້ລາຍຮັບເພີ່ມຂຶ້ນປະມານ 27% ສົມທຽບກັບຄົວເຮືອນທີ່ບໍ່ຢູ່ໃນເຂດໂຮງງານ. ຜົນດັ່ງກ່າວມີຄວາມໝາຍວ່າໂອກາດການສ້າງວຽກເຮັດງານທຳທີ່ບໍ່ແມ່ນຂະແໜງກະສິກຳຈະສ້າງເງື່ອນໄຂໃຫ້ຄົວເຮືອນມີລາຍຮັບດີຂຶ້ນ ເນື່ອງຈາກໂອກາດການຈ້າງງານທີ່ດີກວ່າ;
4) ຕົວປ່ຽນກ່ຽວກັບອາຊີບຄົວເຮືອນທີ່ແມ່ນກະສິກຳມີສາຍພົວພັນດ້ານລົບໃນລະດັບທີ່ສຳຄັນດ້ານສະຖິຕິກັບລາຍຮັບຄົວເຮືອນ. ຖ້າຄົວເຮືອນມີອາຊີບຫຼັກໃນຂະແໜງກະສິກຳຈະເຮັດໃຫ້ລາຍຮັບຄົວເຮືອນຫຼຸດລົງ 40% ເມື່ອທຽບກັບຄົວເຮືອນທີ່ມີອາຊີບອື່ນທີ່ບໍ່ແມ່ນກະສິກຳ. ສິ່ງດັ່ງກ່າວໝາຍຄວາມວ່າການເຮັດວຽກທີ່ບໍ່ແມ່ນກະສິກຳມີຜົນຕອບແທນສູງກວ່າຄົວເຮືອນທີ່ເຮັດອາຊີບກະສິກຳ ເຊິ່ງສ່ວນໃຫຍ່ການປະກອບອາຊີບກະສິກຳມີລັກສະນະຜະລິດ ເພື່ອກຸ້ມຕົນເອງ ແລະ ມີການຂາຍຜົນຜະລິດຈຳນວນໜ້ອຍ;
5) ແບບຈຳລອງໄດ້ກຳນົດຊັບສິນຄົວເຮືອນຄື ສັດລ້ຽງ ເຊິ່ງມີສາຍພົວພັນດ້ານບວກໃນລະດັບຄວາມສຳຄັນທາງສະຖິຕິກັບລາຍຮັບຂອງຄົວເຮືອນ. ຖ້າມີຈຳນວນສັດໃຫຍ່ເພີ່ມຂຶ້ນ 1 ໂຕ ຈະເຮັດໃຫ້ລາຍຮັບເພີ່ມຂຶ້ນ 1,4%. ນີ້ໝາຍຄວາມວ່າການລ້ຽງສັດໃຫຍ່ແມ່ນແຫຼ່ງການສ້າງລາຍຮັບອັນໜຶ່ງທີ່ສຳຄັນຂອງຄົວເຮືອນ ແລະ ເປັນແຫຼ່ງສະສົມຊັບສິນຂອງຄົວເຮືອນ ເພື່ອຄ້ຳປະກັນຄວາມສ່ຽງຕ່າງໆ

ໃນເວລາດຽວກັນ, ຕົວປ່ຽນການໂອນເງິນກັບບ້ານ, ຄົວເຮືອນທີ່ຢູ່ໃກ້ຊາຍແດນ, ຄົວເຮືອນທີ່ປະກອບອາຊີບຄ້າຂາຍຍ່ອຍ, ຊັບສິນທີ່ເປັນພາຫະນະການຜະລິດ ແລະ ການສຶກສາຂອງຫົວໜ້າຄົວເຮືອນ ແມ່ນບໍ່ມີສາຍພົວພັນດ້ານສະຖິຕິຕໍ່ກັບລາຍຮັບຂອງຄົວເຮືອນ.

❖ ຜົນການສຶກສາແບບຈຳລອງ (2) ສຶກສາບົດບາດການຄ້າຊາຍແດນມີຜົນຕໍ່ການຜະລິດເຂົ້າຂອງຄົວເຮືອນ:

ຕາຕະລາງ 12: ຜົນຂອງການຄາດປະມານຈາກແບບຈຳລອງ 2

| **ຜົນຜະລິດເຂົ້າ** | Coef. | St.Err. | t-value | p-value | [95% Conf | Interval] | Sig |
|---|---|---|---|---|---|---|---|
| ລາຍຮັບຄົວເຮືອນ | .434 | .142 | 3.06 | .002 | .155 | .714 | *** |
| ການຄ້າຊາຍແດນ | -.174 | .748 | -0.23 | .816 | -1.648 | 1.299 | |
| ເງິນໂອນ | .014 | .025 | 0.57 | .568 | -.035 | .064 | |
| ກອງທຶນບ້ານ | -.382 | .4 | -0.96 | .34 | -1.17 | .406 | |
| ບ້ານໃກ້ຊາຍແດນ | .417 | .353 | 1.18 | .239 | -.279 | 1.113 | |
| ເນື້ອທີ່ດິນກະສິກຳ | .058 | .036 | 1.64 | .102 | -.012 | .128 | |
| ເຄື່ອງຈັກການຜະລິດ | .383 | .178 | 2.15 | .033 | .032 | .733 | ** |
| ສັດໃຫຍ່ | .057 | .013 | 4.37 | .000 | .031 | .082 | *** |
| **ບໍ່ໄດ້ຮຽນ** | 0 | . | . | . | . | . | |
| ຊັ້ນປະຖົມ | .739 | .598 | 1.23 | .218 | -.44 | 1.917 | |
| ມັດທະຍົມຕົ້ນ-ປາຍ | .337 | .581 | 0.58 | .562 | -.807 | 1.482 | |
| ສູງກວ່າມັດທະຍົມປາຍ | 1.468 | .703 | 2.09 | .038 | .083 | 2.852 | ** |
| **ບໍ່ແກ້ວ** | 0 | . | . | . | . | . | |
| ໄຊຍະບູລີ | -.92 | .508 | -1.81 | .071 | -1.921 | .081 | * |
| ສະຫວັນນະເຂດ | -.385 | .554 | -0.70 | .487 | -1.476 | .706 | |
| ຈຳປາສັກ | .251 | .523 | 0.48 | .632 | -.78 | 1.281 | |
| ຄ່າຄົງທີ່ | -5.442 | 2.573 | -2.12 | .036 | -10.513 | -.372 | ** |

| | | | |
|---|---|---|---|
| Mean dependent var | 3.657 | SD dependent var | 2.771 |
| R-squared | 0.250 | Number of obs | 238 |
| F-test | 5.322 | Prob > F | 0.000 |
| Akaike crit. (AIC) | 1120.999 | Bayesian crit. (BIC) | 1173.083 |

❖ ໝາຍເຫດ: *(*): ໝາຍເຖິງລະດັບຄວາມເຊື່ອໝັ້ນ 90%,*

❖ *(**): ໝາຍເຖິງລະດັບຄວາມເຊື່ອໝັ້ນ 95%,*

❖ *(***): ໝາຍເຖິງລະດັບຄວາມເຊື່ອໝັ້ນ 99%*

ຈາກຜົນການຄິດໄລ່ແບບຈໍາລອງທີ 2 ໃນຕາຕະລາງທີ 12 ຊີ້ໃຫ້ເຫັນວ່າມີ 3 ປັດໄຈທີ່ມີສາຍພົວພັນໃນລະດັບຄວາມສໍາຄັນດ້ານສະຖິຕິກັບລາຍຮັບຂອງຄົວເຮືອນ ເຊິ່ງລາຍລະອຽດສາມາດອະທິບາຍໄດ້ດັ່ງນີ້:

1) ຄົວເຮືອນທີ່ເຮັດຄ້າຂາຍທີ່ຕິດພັນກັບການຄ້າຊາຍແດນເຫັນວ່າບໍ່ແມ່ນປັດໄຈທີ່ພາໃຫ້ຜົນຜະລິດເຂົ້າຂອງຄົວເຮືອນເພີ່ມຂຶ້ນ. ເນື່ອງຈາກວ່າຄົວເຮືອນເຮັດການຄ້າຍ່ອຍເປັນອາຊີບຫຼັກ ພ້ອມດຽວກັນນັ້ນການຜະລິດກະສິກໍາໃນຄົວເຮືອນຕົວຢ່າງແມ່ນການຜະລິດເພື່ອການຊົມໃຊ້ຄົວເຮືອນ ແລະ ບໍ່ໄດ້ມີການສົ່ງອອກຂາຍຜ່ານແດນ;
2) ລາຍຮັບຄົວເຮືອນມີສາຍພົວພັນທາງບວກໃນລະດັບຄວາມສໍາຄັນດ້ານສະຖິຕິຕໍ່ຜົນຜະລິດເຂົ້າ. ຖ້າລາຍຮັບເພີ່ອຂຶ້ນ 1% ເຮັດໃຫ້ຜົນຜະລິດເຂົ້າເພີ່ມຂຶ້ນ 0,004 ໂຕນ ຫຼື 4 ກິໂລກຣາມ;
3) ຊັບສິນທີ່ເປັນພາຫະນະການຜະລິດ ສາຍພົວພັນທາງບວກໃນລະດັບຄວາມສໍາຄັນດ້ານສະຖິຕິຕໍ່ຜົນຜະລິດເຂົ້າ. ຖ້າພາຫະນະການຜະລິດເພີ່ອຂຶ້ນ 1 ອັນ ເຮັດໃຫ້ຜົນຜະລິດເຂົ້າເພີ່ມຂຶ້ນ 0,4 ໂຕນ;
4) ສັດລ້ຽງທີ່ເປັນສັດໃຫຍ່ມີສາຍພົວພັນດ້ານບວກໃນລະດັບຄວາມສໍາຄັນທາງສະຖິຕິກັບຜົນຜະລິດເຂົ້າຂອງຄົວເຮືອນ. ຖ້າມີຈໍານວນສັດໃຫຍ່ເພີ່ມຂຶ້ນ 1 ໂຕ ຈະເຮັດໃຫ້ຜົນຜະລິດເຂົ້າເພີ່ມຂຶ້ນ 0,05 ໂຕນ.

ສ່ວນປັດໄຈຕົວປ່ຽນຄົວເຮືອນທີ່ປະກອບອາຊີບຄ້າຂາຍຍ່ອຍ, ການໂອນເງິນກັບບ້ານຂອງຄົວເຮືອນ, ຄົວເຮືອນທີ່ເຂົ້າເຖິງກອງທຶນບ້ານ, ຄົວເຮືອນທີ່ຢູ່ໃກ້ຊາຍແດນ, ເນື້ອທີ່ຜະລິດກະສິກໍາ ແລະ ການສຶກສາຂອງຫົວໜ້າຄົວເຮືອນ ແມ່ນບໍ່ມີສາຍພົວພັນດ້ານສະຖິຕິຕໍ່ກັບລາຍຮັບຂອງຄົວເຮືອນ.

❖ **ສະຫຼຸບຜົນການຄົ້ນຄວ້າທັງ 2 ແບບຈໍາລອງ:**

ອີງໃສ່ຜົນການຄົ້ນຄວ້າທັງສອງແບບຈໍາລອງສາມາດສະຫຼຸບໄດ້ວ່າບົດບາດການຄ້າຊາຍແດນບໍ່ມີຜົນກະທົບຊຸກຍູ້ການສ້າງລາຍຮັບ ແລະ ຍົກລະດັບການດໍາລົງຊີວິດຂອງປະຊາຊົນຂອບເຂດຊາຍແດນ ເນື່ອງຈາກວ່າບັນດາກິດຈະກໍາການຄ້າຊາຍແດນຍັງມີລັກສະນະຂະໜາດນ້ອຍ, ການຜະລິດກະສິກໍາແມ່ນມີລັກສະນະກະແຈກກະຈາຍຜະລິດແບບຄົວເຮືອນ ເຊິ່ງບໍ່ໄດ້ສ້າງເງື່ອນໄຂໃຫ້ຊຸມຊົນໃນຂອບເຂດຊາຍແດນ ສາມາດຂາຍສິນຄ້າທີ່ມີມູນຄ່າສູງ, ສ່ວນໃຫຍ່ແມ່ນການຂາຍເຄື່ອງປ່າຂອງດົງ, ສິນຄ້າກະສິກໍາຈໍານວນໜ້ອຍ ທີ່ບໍ່ໄດ້ເປັນປັດໄຈເຮັດໃຫ້ລາຍຮັບຄົວເຮືອນເພີ່ມຂຶ້ນ. ພ້ອມດຽວກັນນັ້ນ, ອາຊີບທີ່ບໍ່ແມ່ນກະສິກໍາມີບົດບາດຕໍ່ກັບລາຍຮັບຂອງຄົວເຮືອນສູງກວ່າ, ໂດຍສະເພາະຄົວເຮືອນທີ່ມີຊັບສິນ, ທຶນຮອນ ແລະ ຄວາມອາດສາມາດຈະມີໂອກາດທາງດ້ານເສດຖະກິດຫຼາຍກວ່າ.

ສໍາລັບຄົວເຮືອນທີ່ປະກອບອາຊີບການຜະລິດກະສິກໍາ ການຄ້າຊາຍແດນຍັງບໍ່ມີບົດບາດສໍາຄັນຊຸກຍູ້ການຂະຫຍາຍຕົວການຜະລິດຂອງຊຸມຊົນ ເປັນຕົ້ນການຜະລິດເຂົ້າ ເນື່ອງຈາກວ່າການຜະລິດກະສິກໍາຂອງຄົວເຮືອນຍັງມີລັກສະນະຜະລິດເພື່ອຊົມໃຊ້ຄອບຄົວ, ຈໍານວນຂະໜາດນ້ອຍ, ຂາດການເຂົ້າເຖິງຕະຫຼາດ, ແຫຼ່ງທຶນຮອນ ແລະ ອື່ນໆ. ສະນັ້ນ, ນະໂຍບາຍໃນຕໍ່ໜ້າຕ້ອງໄດ້ສ້າງຄວາມອາດສາມາດໃຫ້ຄົວເຮືອນຂະຫຍາຍການຜະລິດ, ມີທັກສະໃນການດໍາເນີນອາຊີບອື່ນໆ ທີ່ບໍ່ແມ່ນກະສິກໍາໃຫ້ຫຼາຍຂຶ້ນ ເພື່ອໃຫ້ແຫຼ່ງລາຍຮັບມີຄວາມຫຼາກຫຼາຍ ແລະ ໝັ້ນຄົງຫຼາຍຂຶ້ນ.

ໃນການຄົ້ນຄວ້າຄັ້ງນີ້ຍັງມີຫຼາຍຂໍ້ຈໍາກັດທີ່ທາງທີມງານຄົ້ນຄວ້າຕ້ອງໄດ້ປັບປຸງເຕີ່ມ ເຊິ່ງຂໍ້ມູນທີ່ໄດ້ຮັບສ່ວນໃຫຍ່ຍັງບໍ່ແມ່ນກຸ່ມປະຊາກອນທີ່ເຮັດການຄ້າຊາຍແດນເປັນຫຼັກ, ສ່ວນໃຫຍ່ແມ່ນເຮັດອາຊີບທີ່ຫຼາກຫຼາຍເຊັ່ນ: ເຮັດກະສິກໍາ ແລະ ເຮັດການຄ້າໄປພ້ອມກັນ ຈຶ່ງສົ່ງຜົນໃຫ້ການນໍາໃຊ້ແບບຈໍາລອງອອກມາບໍ່ສາມາດສະແດງສາຍພົວພັນທາງກົງລະຫວ່າງລາຍຮັບຂອງຄົວເຮືອນ ແລະ ການຄ້າຊາຍແດນເທົ່າທີ່ຄວນ; ການລົງສໍາພາດໃນພື້ນທີ່ກໍ່ພົບກັບອຸປະສັກໃນການພົບກຸ່ມຄົວເຮືອນຕົວຢ່າງທີ່ຖືກເລືອກ ເນື່ອງຈາກເປັນໄລຍະການລົງເຮັດນາ, ເຮັດສວນ ແລະ ໄປເຮັດວຽກຂ້າລາດຊະການ ຈຶ່ງສົ່ງຜົນໃຫ້ມີການປ່ຽນຄົວເຮືອນສ່ວນໃດໜຶ່ງ ແຕ່ກໍ່ສາມາດດໍາເນີນການສໍາຫລວດ

ໄດ້ ແລະ ຕ້ອງໄດ້ລໍຖ້າຄົວເຮືອນກັບມາແຕ່ການເຮັດວຽກ ເຊິ່ງໄດ້ສຳພາດອາດຕອນເຊົ້າໆ ຫລື ຕອນດຶກ ທີ່ເຫັນເຖິງການຕອບບາງຄຳຖາມຍັງບໍ່ຊັດເຈນ ແລະ ຈະແຈ້ງ; ການເຂົ້າເຖິງຂໍ້ມູນທາງດ້ານການເສຍພາສີ-ອາກອນຍັງຈຳກັດ.

## 4.4. ຈຸດປະສົງ 6: ສະເໜີແນະນະໂຍບາຍເພື່ອອຳນວຍຄວາມສະດວກທາງການຄ້າຊາຍແດນ ແລະ ຫັນການຄ້າຊາຍແດນເຂົ້າສູ່ລະບົບ.

ຜ່ານການວິເຄາະທັງທາງດ້ານຂໍ້ມູນການສຳພາດຄົວເຮືອນ, ການນຳໃຊ້ແບບຈຳລອງ ແລະ ການສຳພາດຜູ້ປະກອບການ ເຫັນວ່າການຄ້າຊາຍແດນແມ່ນມີຜົນປະໂຫຍດຕໍ່ກັບການດຳລົງຊີວິດຂອງປະຊາຊົນ ແລະ ເປັນໂອກາດທີ່ດີໃນການສ້າງລາຍຮັບໃຫ້ແກ່ປະຊາຊົນລາວທີ່ອາໄສຢູ່ຂອບເຂດຊາຍແດນ ບໍ່ວ່າປະໂຫຍດຈະໄດ້ທາງກົງທີ່ເປັນລາຍຮັບເຂົ້າຄອບຄົວ ຫຼື ທາງອ້ອມທີ່ເປັນການໄປຮັບບໍລິການທາງດ້ານສຸຂະພາບທີ່ປະເທດໄທ ລ້ວນແຕ່ແມ່ນປະໂຫຍດຕໍ່ຄອບຄົວທີ່ຢູ່ໃກ້ຊາຍແດນ; ແຕ່ເມື່ອສຶກສາເບິ່ງການດຳລົງຊີວິດຕົວຈິງ ແລະ ຈາກຂໍ້ມູນທີ່ໄດ້ ປະຊາຊົນສ່ວນໃຫຍ່ຍັງບໍ່ໄດ້ຮັບປະໂຫຍດຫຼາຍ ເນື່ອງຈາກຫຼາຍປັດໄຈທີ່ຍັງບໍ່ໄດ້ຮັບການສົ່ງເສີມເທົ່າທີ່ຄວນຈາກພາກລັດ ເຊິ່ງຕ້ອງໄດ້ເອົາໃຈໃສ່ ສົ່ງເສີມຕື່ມອີກໃນບາງນະໂຍບາຍທີ່ຈະຊຸກຍູ້ໃຫ້ປະຊາຊົນເຮັດການຜະລິດໃຫ້ເປັນຂະໜາດໃຫຍ່ ແລະ ກາຍເປັນສິນຄ້າ ເພື່ອສ້າງມູນຄ່າເພີ່ມໃຫ້ສູງຂຶ້ນ, ສາມາດຍາດແຍ່ງໄດ້ຜົນປະໂຫຍດຈາກການຄ້າຊາຍແດນຫຼາຍຂຶ້ນກວ່າເກົ່າ ໂດຍໃຫ້ເອົາໃຈໃສ່ໃນບາງນະໂຍບາຍດັ່ງນີ້:

+ **ນະໂຍບາຍສ້າງທັກສະສີມື ແລະ ຄວາມອາດສາມາດ ເພື່ອປະກອບອາຊີບທີ່ບໍ່ແມ່ນກະສິກຳ:**
    - ພັດທະນາທັກສະດ້ານຄວາມຮູ້, ການຕະຫຼາດ, ການດຳເນີນທຸລະກິດ, ພັດທະນາສີມືແຮງງານເພື່ອໃຫ້ສາມາດປະກອບອາຊີບທີ່ຫຼາກຫຼາຍທີ່ບໍ່ແມ່ນກະສິກຳ ໂດຍສະເພາະແມ່ນກຸ່ມແມ່ຍິງ;
    - ປັບປຸງຄຸນະພາບການຮຽນ-ການສອນຂອງໄວໜຸ່ມຢູ່ໃນເຂດຊາຍແດນ ແລະ ສະໜອງທຶນການສຶກສາໃຫ້ເຂົ້າຮຽນໃນລະດັບວິຊາຊີບ ແລະ ໂຄງການຝຶກອົບຮົມໃຫ້ຫຼາຍຂຶ້ນ;
+ **ນະໂຍບາຍດ້ານແຫຼ່ງທຶນ**:
    - ຂະຫຍາຍໂອກາດໃຫ້ຜູ້ຜະລິດ ແລະ ຜູ້ປະກອບການຄ້າຂາຍສາມາດເຂົ້າເຖິງແຫຼ່ງທຶນດອກເບ້ຍຕ່ຳ ແລະ ຫຼຸດຜ່ອນເງື່ອນໄຂທີ່ຫຍຸ້ງຍາກຕ່າງໆຕໍ່ການເຂົ້າເຖິງແຫຼ່ງທຶນ ໂດຍສະເພາະທະນາຄານສົ່ງເສີມກະສິກຳ ແລະ ທະນະຄານນະໂຍບາຍ;
    - ຂະຫຍາຍຕາໜ່າງການປ່ອຍບໍລິການຂອງທະນາຄານໃນຂອບເຂດຊາຍແດນ ເປັນຕົ້ນ ແມ່ນການຂະຫຍາຍສາຂາໜ່ວຍບໍລິການທະນາຄານເພື່ອອຳນວຍຄວາມສະດວກໃນການເຮັດທຸລະກຳທາງການເງິນ ເປັນຕົ້ນການແລກປ່ຽນເງິນຕາ, ການໂອນເງິນກັບບ້ານຂອງແຮງງານ ແລະ ອື່ນໆ;
    - ກຳນົດນະໂຍບາຍສິນເຊື່ອໃຫ້ປະຊາຊົນ ແລະ ຫົວໜ່ວຍການຄ້າຊາຍແດນຕາມລະດູການ ເພາະຈາກຂໍ້ມູນເຫັນວ່າສ່ວນໃຫຍ່ປະຊາຊົນນຳໃຊ້ເງິນທຶນສ່ວນຕົວມາລົງທຶນ ເພາະດອກເບ້ຍເງິນກູ້ທີ່ສູງ ແລະ ເງື່ອນໄຂກູ້ຢືມແມ່ນມີຫຼາຍຂັ້ນຕອນ ແລະ ເອກະສານ;
+ **ນະໂຍບາຍການສົ່ງເສີມການຜະລິດ:**
    - ວຽກງານສົ່ງເສີມວິຊາການໃຫ້ກຸ່ມປະຊາຊົນທີ່ມີທ່າແຮງແລ້ວ ສາມາດຍົກລະດັບຂະໜາດຂອງການຜະລິດໃຫ້ສູງຂຶ້ນ, ສ່ວນກຸ່ມປະຊາຊົນທີ່ຍັງບໍ່ທັນເຂັ້ມແຂງກໍ່ຕ້ອງໄດ້ຮັບການຍົກລະດັບຄວາມຮູ້ທັງດ້ານຂະບວນການປຸງແຕ່ງໃຫ້ສິນຄ້າມີມູນຄ່າສູງຂຶ້ນ.
    - ສົ່ງເສີມການຫັນການຄ້າຊາຍແດນແບບກະແຈກກະຈາຍສະເພາະບຸກຄົນ ເປັນການສ້າງຕັ້ງກຸ່ມການຜະລິດເປັນສິນຄ້າ ແລະ ກຸ່ມການຄ້າຊາຍແດນສະເພາະ ໂດຍມີການຈັດຝຶກອົບຮົມ ພ້ອມທັງສ້າງໂຕແບບກຸ່ມການຜະລິດ ແລະ ການຄ້າ;
    - ສ້າງແຜນງານຄ້ຳປະກັນທາງດ້ານລາຄາ ແລະ ປະລິມານການຜະລິດສິນຄ້າ ເຊິ່ງໃນບາງໄລຍະລາຄາສິນຄ້າອາດເໜັງຕີງແຮງ ຜ່ານການເຈລະຈາກັບຜູ້ຮັບຊື້ (ຕະຫຼາດ) ກັບປະເທດເພື່ອນບ້ານ ໂດຍສະເພາະການເຈ

ລະຈາ ແລະ ຮ່ວມມືດ້ານການຄ້າຊາຍແດນສະເພາະລະຫວ່າງແຂວງຕໍ່ແຂວງ ຂອງສອງປະເທດທີ່ໃກ້ຄຽງ ຫຼື ມີການເປີດຕະຫຼາດແລກປ່ຽນ, ຄ້າຂາຍສິນຄ້າເປັນປະຈໍາ ເພື່ອສ້າງໂອກາດໃຫ້ປະຊາຊົນມີບ່ອນຂາຍສິນຄ້າ ແລະ ພົບປະຜູ້ປະກອບການສອງຝ່າຍ;

- ສຸມໃສ່ການປະສານງານເຈລະຈາແກ້ໄຂບັນຫາ, ຂໍ້ຫຍຸ້ງຍາກ ແລະ ສິ່ງກີດຂວາງຕໍ່ການຄ້າຊາຍແດນຮ່ວມກັບປະເທດເພື່ອນບ້ານ ໂດຍສະເພາະຕິດພັນກັບດ້ານນະໂຍບາຍກີດກັ້ນທີ່ບໍ່ແມ່ນພາສີ;
- ສົ່ງເສີມການພັດທະນາກະສິກໍາຕາມສັນຍາ-ໂຄຕ້າໃຫ້ຜູ້ປະກອບການຂະໜາດນ້ອຍ ແລະ ກາງ ທັງໃນຂອບເຂດຊາຍແດນ, ເຂດທີ່ມີທ່າແຮງ ເພື່ອນໍາໃຊ້ເມັດພັນພືດ ແລະ ແລກປ່ຽນການນໍາໃຊ້ເຕັກນິກການປູກພືດ, ລ້ຽງສັດ ແລະ ປະມົງເຂົ້າໃນການຜະລິດໃຫ້ໄດ້ຮັບຜົນຜະລິດຫຼາຍຂຶ້ນຢ່າງມີປະສິດທິພາບຕາມມາດຕະການສຸຂະອານາໄມພືດ-ສັດ (SPS);

+ ພັດທະນາລະບົບແລກປ່ຽນຂໍ້ມູນຂ່າວສານການຄ້າທີ່ສາມາດເຂົ້າເຖິງໄດ້ງ່າຍ ເພື່ອອໍານວຍຄວາມສະດວກໃຫ້ແກ່ພາກເອກະຊົນໃຫ້ສາມາດຕິດຕາມຂໍ້ມູນນະໂຍບາຍການຜະລິດ ແລະ ການຄ້າທີ່ພາກລັດວາງອອກ ໂດຍແນໃສ່ການສ້າງຖານຂໍ້ມູນໃຫ້ທັນສະໄໝ (Electronic Platform) ເພື່ອຮັບໃຊ້ວຽກການຄ້າ;
+ ເລັ່ງປັບປຸງພື້ນຖານໂຄງລ່າງ: ຖະໜົນຫົນທາງ, ໄຟຟ້າ, ນໍ້າປະປາ, ປັບປຸງລະບົບປະຕູດຽວໃຫ້ມີຄວາມສະດວກຂຶ້ນກວ່າເກົ່າ ແລະ ຫຼຸດຜ່ອນຂັ້ນຕອນການປະກອບເອກະສານທີ່ບໍ່ຈໍາເປັນລົງ ກໍ່ເພື່ອຫຼຸດຜ່ອນຕົ້ນທຶນການຜະລິດ.

## V. ສະຫຼຸບ

ການຄ້າຊາຍແດນລາວ-ໄທ ແມ່ນມີຄວາມສຳຄັນຫຼາຍຕໍ່ກັບການດຳລົງຊີວິດປະຈຳວັນຂອງປະຊາຊົນທີ່ອາໄສຢູ່ລຽບຕາມຂອບເຂດຊາຍແດນລາວ-ໄທ ເຊິ່ງສາມາດຊ່ວຍອຳນວຍຄວາມສະດວກໃນການດຳລົງຊີວິດໃຫ້ແກ່ປະຊາຊົນທ້ອງຖິ່ນ ໂດຍສະເພາະສາມາດຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງປະຊາຊົນຂັ້ນທ້ອງຖິ່ນທີ່ຂາດແຄນສິນຄ້າ ແລະ ການບໍລິການທີ່ຈຳເປັນ ເປັນຕົ້ນແມ່ນການເຂົ້າເຖິງການບໍລິການສຸຂະພາບ, ສິນຄ້າ, ການປັບປຸງພື້ນຖານໂຄງລ່າງ ແລະ ອື່ນໆ. ແຕ່ເຖິງຢ່າງໃດກໍ່ຕາມ, ຈາກຜົນການຄົ້ນຄວ້າດັ່ງກ່າວນີ້ຊີ້ໃຫ້ເຫັນວ່າ ບົດບາດການຄ້າຊາຍແດນໃນປັດຈຸບັນບໍ່ທັນໄດ້ປະກອບສ່ວນຕໍ່ກັບລາຍຮັບຂອງຄົວເຮືອນກໍ່ຄືການຍົກລະດັບການດຳລົງຊີວິດຂອງຄົວເຮືອນ ເຊິ່ງສະແດງອອກສາຍພົວພັນຂອງການຄ້າຊາຍແດນໃນ 2 ແບບຈຳລອງບໍ່ມີສາຍພົວພັນທາງດ້ານສະຖິຕິກັບລາຍຮັບ ແລະ ຜົນຜະລິດຂອງຄົວເຮືອນ. ນອກຈາກນັ້ນ, ຍັງເຫັນວ່າການສ້າງອາຊີບທີ່ຫຼາກຫຼາຍ, ອາຊີບທີ່ບໍ່ແມ່ນກະສິກຳມີສາຍພົວພັນທີ່ສຳຄັນທາງສະຖິຕິຕໍ່ການດຳລົງຊີວິດຂອງປະຊາຊົນ. ເນື່ອງຈາກວ່າຄົວເຮືອນທີ່ມີເງື່ອນໄຂດ້ານຊັບສິນທຶນຮອນ ແລະ ທັກສະຄວາມຮູ້ຄວາມສາມາດທີ່ສູງຈະມີໂອກາດປະກອບອາຊີບທີ່ມີຄວາມໝັ້ນຄົງ ແລະ ມີຜົນຕອບແທນສູງ ໂດຍສະເພາະຄອບຄົວທີ່ດຳເນີນທຸລະກິດ. ຄົວເຮືອນສ່ວນໃຫຍ່ຍັງຂາດທັກສະ, ຄວາມຮູ້ ແລະ ເງື່ອນໄຂຕ່າງໆ ຈຶ່ງເຮັດໃຫ້ຄົວເຮືອນກຸ່ມດັ່ງກ່າວຍັງສືບຕໍ່ກິດຈະກຳການຜະລິດກະສິກຳແບບດັ້ງເດີມ ແລະ ບໍ່ສາມາດເຂົ້າຮ່ວມກິດຈະກຳທີ່ມີຜົນຕອບແທນສູງ ທີ່ຕິດພັນກັບການຄ້າຊາຍແດນ.

ສະນັ້ນ, ລັດຖະບານຂັ້ນສູນກາງ ແລະ ທ້ອງຖິ່ນຄວນພິຈາລະນາສຸມໃສ່ການວາງມາດຕະການສົ່ງເສີມການຜະລິດເປັນສິນຄ້າສົ່ງອອກໃນຂອບເຂດຊາຍແດນໃຫ້ຫຼາຍຂຶ້ນ, ສົ່ງເສີມການສ້າງຕັ້ງກອງທຶນ ແລະ ສິນເຊື່ອໃຫ້ແກ່ຜູ້ຜະລິດເປັນສິນຄ້າສົ່ງອອກ, ເຂັ້ມງວດການກວດກາສິນຄ້ານຳເຂົ້າທີ່ພາຍໃນສາມາດຜະລິດໄດ້ ແລະ ຍົກລະດັບພື້ນຖານໂຄງລ່າງທີ່ຈຳເປັນຕໍ່ການດຳລົງຊີວິດຂອງປະຊາຊົນຂັ້ນທ້ອງຖິ່ນທັງໃນໄລຍະສັ້ນ ແລະ ໄລຍະຍາວ ເປັນຕົ້ນແມ່ນປັບປຸງລະບົບການບໍລິການສາທາລະນະສຸກພາຍໃນໃຫ້ດີຂຶ້ນ ແລະ ສົ່ງເສີມການອຳນວຍຄວາມສະດວກໂດຍການຫຼຸດຜ່ອນຂອດຂັ້ນການປະກອບເອກະສານທີ່ບໍ່ຈຳເປັນ ພ້ອມທັງຫັນໄປສູ່ການເກັບຄ່າທຳນຽມຕ່າງໆຜ່ານລະບົບເອເລັກໂທນິກ ເພື່ອຄວາມໂປ່ງໃສ ແລະ ມີອັດຕາດຽວທີ່ເປັນທຳໃຫ້ແກ່ພາກທຸລະກິດພາຍໃນ. ນອກຈາກນັ້ນ, ຍັງຈຳເປັນຕ້ອງໄດ້ສ້າງທັກສະ, ຄວາມຮູ້-ຄວາມສາມາດໃຫ້ປະຊາຊົນສາມາດປະກອບອາຊີບທີ່ຫຼາກຫຼາຍນອກເໜືອຈາກການດຳເນີນກະຜະລິດກະສິກຳແບບດັ້ງເດີມ, ໂດຍສະເພາະການຈ້າງງານ, ການຄ້າ-ຂາຍ ແລະ ການບໍລິການທີ່ຕິດພັນກັບກິດຈະກຳການຄ້າຊາຍແດນ.

## ເອກະສານອ້າງອີງ


Aung, W, S, (2009), *The Role of Informal Cross-border Trade in Myanmar,* https://www,isdp,eu

Bouët, A,, Pace, K,, Glauber, J, W,, Bouët, A,, Pace, K,, & Glauber, J, W, (2018), Informal *cross-border trade in Africa: How much? Why? And what impact?* https://econpapers,repec,org/RePEc:fpr:ifprid:1783

DFT, (2020), Lao-Thai Cross Border Trade Situation, *Ministry of Commerce,* https://www,itd,or,th/wp-content/uploads/2020/10/itdevent30102020-02,pdf

Jarreau, J,, Mitaritonna, C,, & Bensasi, S, (2016), Determinants of Cross-Border Informal Trade: The case of Benin, *International Food Policy Research Institute (IFPRI),* 1–13, https://thedocs,worldbank,org/en/doc/643351466184172074005002 2016/original/Jarreau,pdf

Medina, L,, Jonelis, A, W,, & Cangul, M, (2017), The Informal Economy in Sub-Saharan Africa: Size and Determinants, In International Monetary Fund, https://www,imf,org/en/Publications/WP/Issues/2017/07/10/The-Informal-Economy-in-Sub-Saharan-Africa-Size-and-Determinants-45017

Morrissey, O,, Lόpez, R, A,, & Sharma, K, (2015), *Handbook on Trade and Development,*

NESDC, (2016), Definition of Cross Border Trade, *Office of National Economic-Socio Development Council of Thailand,* https://www,nesdc,go,th/ewt_w3c/ewt_dl_link,php?nid=6211

Ngwitulsatit, K,, Didyasarin, V,, & Chraoensrowattanakul, J, (2017), The situation of border trade and Invesment in Lao PDR: Opportunities and Threats, *Faculty of Economics Ramkhamhaeng University,* 12–26, http://www,eco,ru,ac,th/images/PDF/researchECON/researchECON2,pdf

Wilson, J, S,, & Mann, C, L, (2003), *Trade Facilitation and Economic Development: Measuring the Impact,* https://doi,org/10,3386/W8079

Wilson, J, S,, Mann, C, L,, & Otsuki, T, (2005), Assessing the Benefits of Trade Facilitation: A Global Perspective, *World Economy,* 28(6), 841–871, https://doi,org/10,1111/J,1467-9701,2005,00709,X

## ເອກະສານຊ້ອນທ້າຍ

ເອກະສານຊ້ອນທ້າຍ 01: ປະເພດທຸລະກິດຂອງຄົວເຮືອນ

| ທຸລະກິດຄົວເຮືອນ | ຈຳນວນ | ເປີເຊັນ |
|---|---|---|
| **ຄ້າຍ່ອຍ ແລະ ຄ້າຍົກ** | **65** | **15,6** |
| **ທຸລະກິດອື່ນໆ** | **36** | **8,7** |
| **ບໍ່ໄດ້ເຮັດທຸລະກິດ ແລະ ຄ້າຂາຍ** | **315** | **75,7** |
| ກະສິກຳ | 219 | 52,6 |
| ພະນັກງານ | 25 | 6,0 |
| ຮັບຈ້າງ | 22 | 5,3 |
| ອາຊີບອື່ນໆ | 49 | 11,8 |
| ລວມທັງໝົດ | 416 | 100 |

ເອກະສານຊ້ອນທ້າຍ 02: ລະດັບການສຶກສາຂອງຫົວໜ້າຄົວເຮືອນ ແລະ ລາຍຮັບສະເລ່ຍຕາມການສຶກສາ

| ລະດັບການສຶກສາ | ຈຳນວນຫົວໜ້າຄອບຄົວ | ເປີເຊັນ | ລາຍຮັບສະເລ່ຍ |
|---|---|---|---|
| ບໍ່ໄດ້ຮັບການສຶກສາ | 44 | 10,6 | 93,900,000 |
| ຊັ້ນປະຖົມ | 143 | 34,4 | 158,000,000 |
| ມັດທະຍົມຕົ້ນ | 124 | 29,8 | 109,000,000 |
| ມັດທະຍົມປາຍ | 53 | 12,7 | 127,000,000 |
| ວິຊາຊີບ | 33 | 7,9 | 319,000,000 |
| ປະລິນຍາຕີ | 18 | 4,3 | 354,000,000 |
| ສູງກວ່າປະລິນຍາຕີ | 1 | 0,2 | 349,000,000 |
| ລວມ | 416 | 100 | |

ເອກະສານຊ້ອນທ້າຍ 03: ຈຳນວນ ແລະ ອັດຕາສ່ວນຊົນເຜົ່າ

| ຊົນເຜົ່າ | ຈຳນວນຄົວເຮືອນ | ເປີເຊັນ |
|---|---|---|
| ລາວລຸ່ມ | 369 | 88,7 |
| ມົ້ງ | 2 | 0,5 |
| ກຶມມຸ | 44 | 10,6 |
| ອື່ນໆ | 1 | 0,2 |
| ລວມ | 416 | 100 |

ເອກະສານຊ້ອນທ້າຍ 04: ລາຍຮັບສະເລ່ຍແບ່ງຕາມແຂວງເປົ້າໝາຍ

| ແຂວງ | ຈຳນວນຄົວເຮືອນ | ລາຍຮັບສະເລ່ຍ |
|---|---|---|
| ບໍ່ແກ້ວ | 103 | 113.000.000 |
| ໄຊຍະບູລີ | 104 | 184.000.000 |
| ສະຫວັນນະເຂດ | 103 | 198.000.000 |
| ຈຳປາສັກ | 106 | 124.000.000 |

ເອກະສານຊ້ອນທ້າຍ 05: ລາຍຮັບສະເລ່ຍແບ່ງຕາມປະເພດທຸລະກິດ ແລະ ແຂວງ

| ແຂວງ | ບໍ່ແກ້ວ | | ໄຊຍະບູລີ | | ສະຫວັນນະເຂດ | | ຈຳປາສັກ | |
|---|---|---|---|---|---|---|---|---|
| | ຈຳນວນ ຄົວເຮືອນ | ລາຍຮັບ ສະເລ່ຍ (ລ້ານກີບ) | ຈຳນວນ ຄົວ ເຮືອນ | ລາຍຮັບ ສະເລ່ຍ (ລ້ານກີບ) | ຈຳນວນ ຄົວ ເຮືອນ | ລາຍຮັບ ສະເລ່ຍ (ລ້ານກີບ) | ຈຳນວນ ຄົວ ເຮືອນ | ລາຍຮັບ ສະເລ່ຍ (ລ້ານກີບ) |
| ຄ້າຍົກ/ຄ້າຍ່ອຍ | 27 | 133 | 14 | 210 | 6 | 191 | 18 | 389 |
| ທຸລະກິດອື່ນໆ | 5 | 54,9 | 26 | 98 | 3 | 2.880 | 2 | 72,5 |
| ບໍ່ໄດ້ເຮັດຄ້າ ຂາຍ/ທຸລະກິດ | 71 | 109 | 64 | 212 | 94 | 112 | 86 | 70,2 |

ເອກກະສານຊ້ອນທ້າຍ 06 ມູນຄ່າການສົ່ງອອກສິນຄ້າໄປປະເທດໄທ ແບ່ງຕາມ 10 ລາຍການຫຼັກ 2019 ຫາ 11 ເດືອນ 2023 (ລ້ານໂດລາສະຫາລັດ).

| ລ/ດ | ໝວດສິນຄ້າ | ປີ 2019 | ປີ 2020 | ປີ 2021 | ປີ 2022 | ປີ 2023 | Δ % | ລວມ |
|---|---|---|---|---|---|---|---|---|
| | | | | | (2022/ມັງກອນ-ພະຈິກ 2023) | | | |
| 1 | ໄຟຟ້າ | 1,249,369,187 | 1,684,939,058 | 1,943,757,877 | 2,020,211,531 | 849,028,449 | -0.58 | 7,747,306,102 |
| 2 | ມັນຕົ້ນ | 69,509,847 | 173,170,845 | 219,454,775 | 284,190,479 | 256,858,349 | -0.10 | 1,003,184,295 |
| 3 | ໂຖງຮ່າງ, ຊິ້ນສ່ວນກ້ອງບັນທຶກພາບ, | 227,687,548 | 164,790,206 | 122,372,272 | 99,697,367 | 79,905,821 | -0.20 | 694,453,213 |
| 4 | ເຄື່ອງໃຊ້ໄຟຟ້າ ແລະ ອຸປະກອນເຄື່ອງໃຊ້ໄຟຟ້າ | 144,232,773 | 78,418,773 | 105,102,807 | 114,469,062 | 72,497,701 | -0.37 | 514,721,116 |
| 5 | ຊີມັງ | 61,313,214 | 68,066,062 | 91,060,413 | 127,356,193 | 68,069,257 | -0.47 | 415,865,140 |
| 6 | ທອງແດງ ແລະ ເຄື່ອງທີ່ເຮັດດ້ວຍທອງແດງ | 400,439,785 | 151,608,882 | 53,435,361 | 61,791,478 | 52,311,596 | -0.15 | 719,587,101 |
| 7 | ກາເຟ (ບໍ່ທັນໄດ້ປຸງແຕ່ງ) | 10,023,990 | 6,860,126 | 14,819,012 | 21,406,587 | 25,727,882 | 0.20 | 78,837,597 |
| 8 | ເກືອກາລີ | 0 | 0 | 0 | 6,010,000 | 21,729,520 | 2.62 | 27,739,520 |
| 9 | ເຄື່ອງທີ່ເຮັດດ້ວຍເຫຼັກ, ເຫຼັກກ້າ | 1,143,324 | 4,066,022 | 11,059,873 | 6,552,162 | 21,167,004 | 2.23 | 43,988,386 |
| 10 | ຄຳປະສົມ, ຄຳແທ່ງ | 14,184,502 | 149,739,946 | 14,652,606 | 9,644,400 | 19,364,307 | 1.01 | 207,585,760 |
| | **ລວມ 10 ລາຍການ** | **2,177,904,169** | **2,481,659,920** | **2,575,714,998** | **2,751,329,258** | **1,466,659,885** | **-0.47** | **11,453,268,229** |
| | **ອື່ນໆ** | **229,117,420** | **263,397,187** | **208,010,226** | **189,132,046** | **132,299,151** | **-0.30** | **1,021,956,029** |
| | **ລວມທັງໝົດ** | **2,407,021,589** | **2,745,057,107** | **2,783,725,223** | **2,940,461,304** | **1,598,959,035** | **-0.46** | **12,475,224,258** |

ແຫຼ່ງຂໍ້ມູນ: ກະຊວງອຸດສາຫະກຳ ແລະ ການຄ້າ

ເອກະສານຊ້ອນທ້າຍ 07: ມູນຄ່າການນຳເຂົ້າຈາກປະເທດໄທ ແບ່ງຕາມ 10 ລາຍການຫຼັກ 2019 ຫາ 11 ເດືອນ 2023 (ລ້ານໂດລາສະຫາລັດ).

| ລ/ດ | ໝວດສິນຄ້າ | ປີ 2019 | ປີ 2020 | ປີ 2021 | ປີ 2022 | ປີ 2023 | Δ% | ລວມ |
|---|---|---|---|---|---|---|---|---|
| | | | | | (2022/ມັງກອນ-ພະຈິກ 2023) | | | |
| 1 | ນ້ຳມັນກາຊວນ | 495,328,255 | 338,103,533 | 417,710,813 | 874,634,330 | 798,068,180 | -0.09 | 2,923,845,111 |
| 2 | ນ້ຳມັນແອັດຊັງ, ແອັດຊັງພິເສດ | 115,256,824 | 97,905,435 | 128,278,919 | 233,618,084 | 221,622,619 | -0.05 | 796,681,881 |
| 3 | ເຄື່ອງດື່ມ (ນ້ຳ, ນ້ຳອັດລົມ, ຊູກຳລັງ...) | 207,631,683 | 220,572,001 | 214,933,110 | 245,692,116 | 196,191,140 | -0.20 | 1,085,020,050 |
| 4 | ນ້ຳຕານ | 88,373,633 | 41,342,172 | 58,849,947 | 224,417,291 | 175,325,252 | -0.22 | 588,308,295 |
| 5 | ພາຫະນະທາງບົກ (ນອກຈາກລົດຈັກ,ລົດໄຖ) | 199,640,036 | 134,656,778 | 197,434,092 | 166,614,514 | 134,438,091 | -0.19 | 832,783,511 |
| 6 | ອຸປະກອນກົນຈັກ (ນອກຈາກເຄື່ອງກົນຈັກພາຫະນະ) | 127,485,739 | 155,811,551 | 124,844,912 | 94,685,289 | 111,710,278 | 0.18 | 614,537,770 |
| 7 | ເຄື່ອງໃຊ້ທີ່ເຮັດດ້ວຍພລາສະຕິກ | 83,134,429 | 89,817,546 | 88,190,429 | 97,446,586 | 87,429,742 | -0.10 | 446,018,733 |
| 8 | ສາຍໄຟຟ້າ, ເຄເບີ້ລ | 134,519,905 | 81,737,617 | 97,414,783 | 100,369,440 | 76,763,681 | -0.24 | 490,805,426 |
| 9 | ອຸປະກອນຖ່າຍພາບ | 209,353,816 | 138,484,834 | 107,795,807 | 87,359,360 | 76,083,321 | -0.13 | 619,077,138 |
| 10 | ເຄື່ອງໄຟຟ້າ ແລະ ອຸປະກອນໄຟຟ້າ | 84,206,996 | 91,187,056 | 34,450,483 | 20,936,996 | 75,441,957 | 2.60 | 306,223,488 |
| | **ລວມ 10 ລາຍການ** | **1,744,931,316** | **1,389,618,523** | **1,469,903,295** | **2,145,774,007** | **1,953,074,261** | **-0.09** | **8,703,301,403** |
| | **ອື່ນໆ** | **1,363,933,537** | **1,428,327,500** | **1,526,387,422** | **1,230,777,073** | **1,057,621,080** | **-0.14** | **6,607,046,612** |
| | **ລວມທັງໝົດ** | **3,108,864,853** | **2,817,946,023** | **2,996,290,718** | **3,376,551,080** | **3,010,695,341** | | **15,310,348,014** |

ແຫຼ່ງຂໍ້ມູນ: ກະຊວງອຸດສາຫະກຳ ແລະ ການຄ້າ

ຄຳແນະນຳກ່ຽວກັບການສຳຫຼວດຄົວເຮືອນ

ສະບາຍດີ, ຂ້າພະເຈົ້າຊື່ ………………………………………….. ພະນັກງານຈາກ ສະຖາບັນຄົ້ນຄວ້າ ວິໄຈການພັດທະນາ ແລະ ສູນຝຶກອົບຮົມ, ກະຊວງແຜນການ ແລະ ການລົງທຶນ;

ຂ້າພະເຈົ້າໄດ້ລົງເກັບກຳຂໍ້ມູນພາຍໃນຊຸມຊົນພວກເຮົາ ເຊິ່ງການເກັບກຳຂໍ້ມູນດັ່ງກ່າວແມ່ນນຳໄປໃຊ້ໃນບົດຄົ້ນຄວ້າ ຂອງສະຖາບັນຄົ້ນຄວ້າວິໄຈການພັດທະນາ ແລະ ສູນຝຶກອົບຮົມ, ໄດ້ຮັບທຶນຈາກອົງການສະຫະປະຊາຊາດເພື່ອ ການພັດທະນາ UNDP.

ໃນການສຳຫຼວດຄັ້ງນີ້, ຂ້າພະເຈົ້າຈະໄດ້ຖາມຂໍ້ມູນກ່ຽວກັບທ່ານ ແລະ ສະມາຊິກພາຍໃນຄອບຄົວຂອງທ່ານ ເຊິ່ງທຸກໆຂໍ້ມູນຂອງທ່ານຈະຖືກເກັບເປັນຄວາມລັບ ແລະ ນຳໃຊ້ເພື່ອການຄົ້ນຄວ້າເທົ່ານັ້ນ.

<u>ຫົວຂໍ້ຄົ້ນຄວ້າ:</u> ສຶກສາການຄ້າໃນ ສປປ ລາວ: ກໍລະນີສຶກສາ ແຂວງບໍ່ແກ້ວ, ໄຊຍະບູລີ, ສະຫວັນນະເຂດ ແລະ ຈຳປາສັກ

**<u>ຈຸດປະສົງ:</u>**

- **ເພື່ອສຶກສາເບິ່ງສະພາບການຄ້າໃນລະບົບ ແລະ ນອກລະບົບພາຍໃນແຂວງກໍລະນີສຶກສາ;**
- **ເພື່ອສຶກສາເບິ່ງລາຍການສິນຄ້າຕົ້ນຕໍທີ່ຄ້າຂາຍບໍລິເວນຊາຍແດນ;**
- **ເພື່ອສຶກສາເບິ່ງບັນດາສິ່ງກີດຂວາງການຄ້າທີ່ບໍ່ແມ່ນພາສີ-ອາກອນ ເຊິ່ງອາດເປັນສາເຫດທີ່ພາໃຫ້ເກີດການ ຄ້ານອກລະບົບ;**
- **ເພື່ອສຶກສາເບິ່ງຜົນກະທົບຂອງການຄ້າຕໍ່ກັບສະພາບການດຳລົງຊີວິດຂອງຄົວເຮືອນບໍລິເວນຊາຍແດນ;**
- **ເພື່ອສຶກສາເບິ່ງຜົນກະທົບຂອງການໂອນເງິນກັບບ້ານຕໍ່ກັບການດຳລົງຊີວິດຂອງຄົວເຮືອນ;**
- **ເພື່ອມີຂໍ້ສະເໜີແນະທາງດ້ານນະໂຍບາຍຕໍ່ກັບການຄ້າ.**

<u>ເປົ້າໝາຍ</u>: ແຂວງທີ່ມີຊາຍແດນ

1. ແຂວງບໍ່ແກ້ວ; 2. ແຂວງໄຊຍະບູລີ; 3. ສະຫວັນນະເຂດ; 4. ຈຳປາສັກ

<u>ຂອບເຂດການສຶກສາ:</u>

ມີຈຳນວນ: 24 ບ້ານ, 8 ເມືອງ ພາຍໃນ 4 ແຂວງ;

ແບບສອບຖາມສໍາລັບຄົວເຮືອນ

ລະຫັດຜູ້ຕອບ: ………………………………

ເຮືອນເລກທີ: ………………………………

ຈໍານວນສະມາຊິກໃນຄອບຄົວ: ………………………………

ຊື່ບ້ານ: …………………………………………………………………………..……

ຊື່ເມືອງ: …………..……...…………………….....……………………...…..………...….

ວັນ ແລະ ເວລາສໍາພາດ: …………… / …………… / 2023;

ສະຖານະຜູ້ຕອບ:

1= ຫົວໜ້າຄອບຄົວ
2= ເມຍ
3= ລູກ
4= ອື່ນໆ

ພາສາຫຼັກ:

1= ລາວ
2= ຜູ້ໄທ
3= ມົ້ງ
4= ກຶມຸ
5 = ອື່ນໆ

ສາດສະໜາ:

1= ພຸດ
2= ຄຣິສ
3= ຜີ
4= ອື່ນໆ

ສັນຊາດ:

1= ລາວ
2= ຫວຽດນາມ
3= ຈີນ
4= ອື່ນໆ

ຊົນເຜົ່າ:

1= ລາວລຸ່ມ
2= ຂະມຸ
3=ມົ້ງ
4= ອື່ນໆ

ຊື່ຜູ້ສໍາພາດ: …………..……...…………………….....……………………...…..ຜູ້ຄີແບສອບຖາມ……..............................................................................…

ຜູ້ກວດແບບສອບຖາມ: …………..……...…………………….....……………………...…..………...….

## <u>ພາກທີ 1: ບັນຊີຄົວເຮືອນ</u>

ກະລຸນາໃຫ້ຂໍ້ມູນສະມາຊິກພາຍໃນຄົວເຮືອນຜູ້ທີ່ມີລາຍຊື່ໃນປື້ມສຳມະໂນຄົວ.

| ລະຫັດ | ສະຖານະໃນຄອບຄົວ | ເພດ | ອາຍຸ | ສະຖານະ ພາບ | ຮູບແບບອາໄສ | ອາຊີບຕົ້ນຕໍ | | | | | | ລະດັບການສຶກສາ |
|---|---|---|---|---|---|---|---|---|---|---|---|---|
| | | 1=ຊາຍ<br>2=ຍິງ<br>3=ບໍລະບຸ ເພດ | | 1=ໂສດ<br>2=ແຕ່ງງານ<br>3=ຢ່າຮ້າງ<br>4=ໝ້າຍ | 1=ຖາວອນ<br>2=ຊົ່ວຄາວ<br>3=ຜູ້ຢ້ຽມຢາມ | 3 ອາຊີບຕົ້ນຕໍໃນໄລຍະ 12 ເດືອນຜ່ານມາ | | | | | | 1=ອະນຸບານ/ ປະຖົມ<br>2=ມ ຕົ້ນ<br>3=ມ ປາຍ<br>4=ວິຊາຊີບ<br>5=ປ ຕີ<br>6=ສາກວ່າ ປ ຕີ<br>7=ບໍ່ໄດ້ຮຽນ |
| | | | | | | ກ່ອນໂຄວິດ | | | ປັດຈຸບັນ | | | |
| | | | | | | 1 | 2 | 3 | 1 | 2 | 3 | |
| 1 | | | | | | | | | | | | |
| 2 | | | | | | | | | | | | |
| 3 | | | | | | | | | | | | |
| 4 | | | | | | | | | | | | |
| 5 | | | | | | | | | | | | |
| 6 | | | | | | | | | | | | |
| 7 | | | | | | | | | | | | |
| 8 | | | | | | | | | | | | |

ພາກທີ 2: ຊັບສິນການຜະລິດ, ທີ່ດິນກະສິກຳ, ສັດລ້ຽງ, ຊັບສິນອື່ນໆ.

ກະລຸນາໃຫ້ຂໍ້ມູນກ່ຽວກັບຊັບສິນການຜະລິດ  ແລະ ທີ່ດິນກະສິກຳ, ສັດລ້ຽງ, ແລະ ຊັບສິນອື່ນໆ.

| | | | | | |
|---|---|---|---|---|---|
| 1 | ດິນປຸກສ້າງ | $m^2$ | | | |
| | | | 1 | = | ດິນປຸກເຮືອນຢູ່ອາໄສ + ດິນເຮືອນເຊົ່າ |
| 2 | ເນື້ອທີ່ດິນກະສິກຳ | $m^2$ | | | |
| | | | 1 | = | ດິນຕົນເອງຊື້ |
| | | | 2 | = | ດິນມູນ |
| | | | 3 | = | ດິນເຊົ່າ |
| | | | 4 | = | ດິນປ່ອຍເຊົ່າ |
| | | | 5 | = | ດິນສວນ |
| | | | 6 | = | ດິນອື່ນໆ |
| 3 | ຊັບສິນການຜະລິດ | ຈຳນວນ | | | |
| | | | 1 | = | ລົດດູດໃຫຍ່ (ຂອງຕົນເອງ) |
| | | | 2 | = | ລົດບັນທຸກ (ເຊັ່ນ: ລົດຮຸນໄດ) |
| | | | 3 | = | ລົດໄຖນາ |
| | | | 4 | = | ລົດກ່ຽວເຂົ້າ / ເຄື່ອງປັ່ນເຂົ້າ |
| | | | 5 | = | ໂຮງສີເຂົ້າ |
| | | | 6 | = | ເຮືອ |
| | | | 7 | = | ອື່ນໆ (ຈັກບິດສາລີ, ……….) |

| | | | | |
|---|---|---|---|---|
| 4 ຈຳນວນສັດລ້ຽງ | ຈຳນວນ | | | |
| | | 1 | = | ຄວາຍ |
| | | 2 | = | ງົວ |
| | | 3 | = | ໝູ |
| | | 4 | = | ແບ້ |
| | | 5 | = | ສັດປີກ |
| | | 6 | = | ອື່ນໆ |
| 5 ພາຫະນະ | ຈຳນວນ | | | |
| | | 1 | = | ລົດຖີບ |
| | | 2 | = | ລົດຈັກ |
| | | 3 | = | ລົດໃຫຍ່ (ກະບະ, ເກັ໋ງ) |
| | | 4 | = | ອື່ນໆ |
| 6 ຊັບສິນອື່ນໆ | ຈຳນວນ | | | |
| | | 1 | = | ທໍລະທັດ |
| | | 2 | = | ຕູ້ເຢັນ |
| | | 3 | = | ຈັກຊັກຜ້າ |
| | | 4 | = | ຕູ້ແຊ່ |
| | | 5 | = | ເຕົາແກັດ |
| | | 6 | = | ອື່ນໆ |

ພາກທີ 3: ລາຍຮັບ

ກະລຸນາຊ່ວຍໃຫ້ຂໍ້ມູນລາຍຮັບພາຍໃນຄົວເຮືອນໃນໄລຍະ 1 ປີ

| ແຫຼ່ງລາຍຮັບ | | | ການຜະລິດໄລຍະ 1 ປີ | | ຂາຍ | | ມູນຄ່າຂາຍ | | ມູນຄ່າຂາຍທັງຫມົດ | | ຕົ້ນທຶນອື່ນໆ (ເຊັ່ນ: ຄ່າແຮງງານ ແລະ ຄ່າປຸຍ......) | |
|---|---|---|---|---|---|---|---|---|---|---|---|---|
| 1 | ເຂົ້ານາປີ | ກ່ອນໂຄວິດ | | kg | | kg | | kip/kg | | kip | | kip |
| | | ປັດຈຸບັນ | | | | | | | | | | |
| | ເຂົ້ານາແຊງ | ກ່ອນໂຄວິດ | | kg | | kg | | kip/kg | | kip | | kip |
| | | ປັດຈຸບັນ | | | | | | | | | | |

| ແຫຼ່ງລາຍຮັບ | | | ມູນຄ່າຂາຍພາຍໃນ 1 ປີ | | ຕົ້ນທຶນອື່ນໆ (ເຊັ່ນ: ຄ່າແຮງງານ ແລະ ຄ່າປຸຍ......) | |
|---|---|---|---|---|---|---|
| 2 | ຜັກ | ກ່ອນໂຄວິດ | | kip | | kip |
| | | ປັດຈຸບັນ | | | | |
| 3 | ໝາກໄມ້ | ກ່ອນໂຄວິດ | | kip | | kip |
| | | ປັດຈຸບັນ | | | | |
| 4 | ສັດ | ກ່ອນໂຄວິດ | | kip | | kip |
| | | ປັດຈຸບັນ | | | | |
| 5 | ເຄື່ອງຫັດຖະກຳ | ກ່ອນໂຄວິດ | | kip | | kip |
| | | ປັດຈຸບັນ | | | | |
| | | ກ່ອນໂຄວິດ | | | | |

| | | | | | | |
|---|---|---|---|---|---|---|
| 6 | ຢາງພາລາ | ປັດຈຸບັນ | | kip | | kip |
| 7 | ອ້ອຍ | ກ່ອນໂຄວິດ | | kip | | kip |
| | | ປັດຈຸບັນ | | | | |
| 8 | ໄມ້ເສດຖະກິດ | ກ່ອນໂຄວິດ | | kip | | kip |
| | | ປັດຈຸບັນ | | | | |
| 9 | ມັນຕົ້ນ | ກ່ອນໂຄວິດ | | kip | | kip |
| | | ປັດຈຸບັນ | | | | |
| 10 | ສາລີແຂງ / ສາລີຫວານ | ກ່ອນໂຄວິດ | | kip | | kip |
| | | ປັດຈຸບັນ | | | | |
| ແຫຼ່ງລາຍຮັບ | | | ມູນຄ່າຂາຍພາຍໃນ 1 ປີ | | ຕົ້ນທຶນອື່ນໆ (ເຊັ່ນ: ຄ່າແຮງງານ ແລະ ຄ່າປຸຍ......) | |
| 11 | ການປະມົງ (ປູ, ປາ, ກຸ້ງ) | ກ່ອນໂຄວິດ | | kip | | kip |
| | | ປັດຈຸບັນ | | | | |
| 12 | ເຄື່ອງປ່າຂອງດົງ (ລະບຸ.........) | ກ່ອນໂຄວິດ | | kip | | kip |
| | | ປັດຈຸບັນ | | | | |
| 13 | ຖ່ານ | ກ່ອນໂຄວິດ | | kip | | kip |
| | | ປັດຈຸບັນ | | | | |
| 14 | ຄ່າແຮງງານ | ກ່ອນໂຄວິດ | | kip | | |
| | | ປັດຈຸບັນ | | | | |
| | | ກ່ອນໂຄວິດ | | | | |

| | | | | |
|---|---|---|---|---|
| 15 | ເງິນເດືອນ | ປັດຈຸບັນ | | kip |
| 16 | ດອກເບ້ຍເງິນຝາກ | ກ່ອນໂຄວິດ | | kip |
| | | ປັດຈຸບັນ | | |
| 17 | ຜົນກຳໄລທຸລະກິດ | ກ່ອນໂຄວິດ | | kip |
| | | ປັດຈຸບັນ | | |
| 18 | ເງິນໂອນຈາກຕ່າງປະເທດ (remittance) | ກ່ອນໂຄວິດ | | kip |
| | | ປັດຈຸບັນ | | |
| 19 | ຄ່າເຊົ່າ | ກ່ອນໂຄວິດ | | kip |
| | | ປັດຈຸບັນ | | |
| 20 | ເງິນບຳນານ | ກ່ອນໂຄວິດ | | kip |
| | | ປັດຈຸບັນ | | |
| 21 | ອື່ນໆ................................. | ກ່ອນໂຄວິດ | | kip |
| | | ປັດຈຸບັນ | | |

ພາກທີ 4: ລາຍຈ່າຍ

ລາຍຈ່າຍພາຍໃນຄົວເຮືອນຕໍ່ເດືອນຕໍ່ປີຈຳນວນເທົ່າໃດ? ໝາຍເຫດ: ສາມາດຕອບເປັນລາຍເດືອນ ແລະ ປີ.

| ແຫຼ່ງລາຍຈ່າຍ | | ກ່ອນໂຄວິດ | | ປັດຈຸບັນ | |
|---|---|---|---|---|---|
| | | ຈຳນວນ (kip) | | ຈຳນວນ (kip) | |
| | | ໄລຍະ 1 ເດືອນ | ລວມ 1 ປີ | 1 ເດືອນ | 1 ປີ |
| 1 | ຄ່າປິ່ນປົວສຸຂະພາບປະຈຳປີ | | | | |
| 2 | ຄ່າການສຶກສາ | | | | |
| 3 | ຄ່າໄຟຟ້າ | | | | |
| 4 | ຄ່ານໍ້າ | | | | |
| 5 | ຄ່າອາຫານ | | | | |
| 6 | ຄ່າເຊົ່າ + ຄ່າຜ່ອນເຄື່ອງຂອງຕ່າງໆ | | | | |
| 7 | ຄ່າການລົງທຶນ /ການຜະລິດ ເຊັ່ນ: ປູກຝັງ-ລ້ຽງສັດ | | | | |
| 8 | ຄ່າອື່ນໆ (ລວມຄ່າໃຊ້ຈ່າຍປິ່ນອ້ອມໃນ 1 ປີ) | | | | |

ພາກທີ 5: ການຍ້າຍຖິ່ນຖານ (Migration)

❖ ເຄີຍໄປ: ກະລຸນາຕື່ມຂໍ້ມູນຂອງສະມາຊິກແຕ່ລະຄົນ ທີ່ເຄີຍໄປອອກແຮງງານຢູ່ໄທ ໃສ່ຕາຕະລາງຂ້າງລຸ່ມນີ້:

| ລຳດັບ | ເພດ 1=ຊາຍ 2=ຍິງ | ອາຍຸ | ສາເຫດທີ່ໄປ | ຮູບແບບການໄປ | | ສາເຫດທີ່ບໍ່ກັບໄປອີກ | ໄປຢູ່ດົນປານໃດ | ມູນຄ່າເງິນສິ່ງກັບບ້ານ ສະເລ່ຍໃນ 01 ປີ | ຮູບແບບການຮັບເງິນ |
|---|---|---|---|---|---|---|---|---|---|
| | | | | ໄປຜ່ານການຈັດຕັ້ງ | ໄປເອງ / ໄປກັບພີ່ນ້ອງ | | | | |
| 1 | | | | | | | | | |
| 2 | | | | | | | | | |
| 3 | | | | | | | | | |

❖ ກຳລັງໄປ: ກະລຸນາຕື່ມຂໍ້ມູນຂອງສະມາຊິກແຕ່ລະຄົນ ທີ່ກຳລັງໄປອອກແຮງງານຢູ່ໄທ ໃສ່ຕາຕະລາງຂ້າງລຸ່ມນີ້:

| ລຳດັບ | ເພດ 1=ຊາຍ 2=ຍິງ | ອາຍຸ | ສາເຫດທີ່ໄປ | ຮູບແບບການໄປ | | ໄປອອກແຮງງານແບບ | | ໄປປີໃດ | ມູນຄ່າເງິນສິ່ງກັບບ້ານ ສະເລ່ຍໃນ 01 ປີ | ຮູບແບບການຮັບເງິນ |
|---|---|---|---|---|---|---|---|---|---|---|
| | | | | ໄປຜ່ານການຈັດຕັ້ງ | ໄປເອງ / ໄປກັບພີ່ນ້ອງ | ຍາວນານ | ຕາມລະດູການ | | | |
| 1 | | | | | | | | | | |
| 2 | | | | | | | | | | |
| 3 | | | | | | | | | | |

พาກທີ 6: ການຄ້າຂ້າມແດນ

1. ປະເພດທຸລະກິດຂອງຄົວເຮືອນ: 01) ຄ້າຍ່ອຍ 02) ຄ້າຍົກ 03) ຄ້າຍ່ອຍ/ຄ້າຍົກ 04) ອື່ນໆ………..........………

2. ທ່ານໄດ້ຂໍເອກະສານອະນຸຍາດດຳເນີນທຸລະກິດຄັກແນ່ບໍ (ເຊັ່ນ: ໃບທະບຽນວິສາຫະກິດ) ? 1) ມີ 2) ບໍ່ມີ

3. ທ່ານຂ້າມໄປໄທເປັນປົກກະຕິບໍ່? 01) ທຸກມື້ 02) 2-3ຄັ້ງ/ອາທິດ 03) 1 ຄັ້ງ/ອາທິດ 04) 1 ຄັ້ງ/ເດືອນ 05) ອື່ນໆ………..........………

4. ທ່ານຂ້າມໄປໄທ ຍ້ອນຫຍັງ? 01) ທ່ຽວ 02) ຊື້-ຂາຍສິນຄ້າ 03) ໄປເຮັດວຽກ 04) ກວດສຸຂະພາບ 05) ອື່ນໆ……........……

5. ຖ້າມີການຊື້-ຂາຍກັບໄທ, ມູນຄ່າການຊື້-ຂາຍປະມານເທົ່າໃດ?

| ມູນຄ່າຊື້ | ມູນຄ່າຂາຍ |
|---|---|
| ໃນ 1 ເດືອນ:………………………… | ໃນ 1 ເດືອນ:………………………… |
| ໃນ 6 ເດືອນ:………………………… | ໃນ 6 ເດືອນ:………………………… |
| ໃນ 1 ປີ:……………..……………… | ໃນ 1 ປີ:……………..……………… |

6. ວິທີການຊຳລະການຊື້-ຂາຍສິນຄ້າ ກັບໄທ ຕົ້ນຕໍ: 01) ເງິນສົດ 02) ຜ່ານທະນາຄານພາຍໃນລາວ 03) ຜ່ານທະນາຄານຢູ່ໄທ 04) ອື່ນໆ…………..

7. ມີການນຳໃຊ້ອັດຕາແລກປ່ຽນແບບໃດ? 01) ອັດຕາທະນາຄານ 02) ອັດຕານອກລະບົບ 03) ບໍ່ໄດ້ແລກເພາະລາຍຮັບເປັນເງິນບາດ 04) ອື່ນໆ……...........……..

8. ຮູບແບບການຂົນສົ່ງສິນຄ້າຜ່ານແດນ: 01) ດ້ວຍຕົນເອງ 02) ຈ້າງລົດຂົນສົ່ງ 03) ລົດເມ 04) ເຮືອ 05) ອື່ນໆ…………..

9. ໄລຍະທາງຈາກເຮືອນ / ຮ້ານ ຫາດ່ານສາກົນ ຫຼື ດ່ານທ້ອງຖິ່ນ ຫຼື ດ່ານປະເພນີ: ………………………………………..…………

10. ລະບຸ 5 ລາຍການສິນຄ້າຕົ້ນຕໍທີ່ທ່ານຊື້-ຂາຍ ກັບປະເທດໄທ ໃນໄລຍະ 1 ປີ:

| ລ/ດ | | ສິນຄ້າ ສົ່ງອອກໄປໄທ | ລາຄາ/ຫົວໜ່ວຍ (kip) | ມູນຄ່າຂາຍທັງໝົດ (kip) | ໄດ້ເສຍພາສີຢູ່ດ່ານບໍ່? ຫຼື ເສຍພາສີໃຫ້ບ້ານ ຫຼື ໜ່ວຍງານໃດບໍ? | ຍ້ອນຫຍັງຈຶ່ງບໍ່ໄດ້ເສຍພາສີຕາມລະບຽບການ | ສິນຄ້າ ນຳເຂົ້າຈາກໄທ | ລາຄາ/ຫົວໜ່ວຍ (kip) | ມູນຄ່າຊື້ທັງໝົດ (kip) | ໄດ້ເສຍພາສີຢູ່ດ່ານບໍ່? ຫຼື ເສຍພາສີໃຫ້ບ້ານ ຫຼື ໜ່ວຍງານໃດບໍ? | ຍ້ອນຫຍັງຈຶ່ງບໍ່ໄດ້ເສຍພາສີຕາມລະບຽບການ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|
| ກ່ອນໂຄວິດ | 1 | | | | | | | | | | | |
| | 2 | | | | | | | | | | | |
| | 3 | | | | | | | | | | | |
| ລ/ດ | | ສິນຄ້າ ສົ່ງອອກໄປໄທ | ລາຄາ/ຫົວໜ່ວຍ (kip) | ມູນຄ່າຂາຍທັງໝົດ (kip) | ໄດ້ເສຍພາສີຢູ່ດ່ານບໍ່? ຫຼື ເສຍພາສີໃຫ້ບ້ານ ຫຼື ໜ່ວຍງານໃດບໍ? | ຍ້ອນຫຍັງຈຶ່ງບໍ່ໄດ້ເສຍພາສີຕາມລະບຽບການ | ສິນຄ້າ ນຳເຂົ້າຈາກໄທ | ລາຄາ/ຫົວໜ່ວຍ (kip) | ມູນຄ່າຊື້ທັງໝົດ (kip) | ໄດ້ເສຍພາສີຢູ່ດ່ານບໍ່? ຫຼື ເສຍພາສີໃຫ້ບ້ານ ຫຼື ໜ່ວຍງານໃດບໍ? | ຍ້ອນຫຍັງຈຶ່ງບໍ່ໄດ້ເສຍພາສີຕາມລະບຽບການ | ໝາຍເຫດ |
| ປະຈຸບັນ | 1 | | | | | | | | | | | |
| | 2 | | | | | | | | | | | |
| | 3 | | | | | | | | | | | |

11. ມູນຄ່າເງິນລົງທຶນສໍາລັບການຄ້າຂາຍທັງໝົດ: ……………………………………….ໃນນັ້ນ: ເປັນເງິນກູ້ຢືມຈໍານວນເທົ່າໃດ? …………………..……………………..

12. ແຫຼ່ງທຶນເລີ່ມຕົ້ນໃນການຄ້າຂາຍຂອງທ່ານມາຈາກໃສ (ເລືອກໄດ້ຫຼາຍຄໍາຕອບ) ?

01) ທະນາຄານ 02) ເງິນເກັບ 03) ກູ້ຢືມຈາກການເງິນຈຸລະພາກ 04) ພີ່ນ້ອງ/ໝູ່ 05) ກອງທຶນບ້ານ

06) ກູ້ຢືມຈາກແມ່ຄ້າເງິນກູ້ (ນອກລະບົບ) 07) ການເປຍຫວຍ 08) ອື່ນໆ.............................................................

13 ທ່ານໄດ້ຈ່າຍດອກເບ້ຍເງິນທີ່ຢືມມານັ້ນເທົ່າໃດ ໃນອັດຕາເທົ່າໃດ?……………………………..…%

14 ທ່ານໄດ້ເຮັດການຄ້າຂາຍຂ້າມແດນດົນປານໃດແລ້ວ?………………………........................……..……………….

15 ສິ່ງຈູງໃຈຫຍັງທີ່ເຮັດໃຫ້ທ່ານເຮັດກິດຈະກາຊື້-ຂາຍກັບປະເທດໄທ (ຂ້າມແດນ)?

01) ສ້າງລາຍຮັບ 02) ວ່າງງານ (ບໍ່ມີວຽກເຮັດຢ່າງອື່ນ) 03) ອື່ນໆ……...................................................................................................

16 ການຄ້າຂາຍຂ້າມແດນແມ່ນແຫຼ່ງລາຍຮັບຕົ້ນຕໍຂອງຄົວເຮືອນທ່ານບໍ່? 01) ແມ່ນ 02) ບໍ່ແມ່ນ

17. ທ່ານຄິດວ່າ ການທີ່ຄົວເຮືອນຂອງທ່ານໄດ້ເຮັດການຄ້າ-ຂາຍກັບໄທນັ້ນ ໄດ້ສິ່ງຜົນດີຕໍ່ກັບການດໍາລົງຊີວິດຂອງຄົວເຮືອນທ່ານໃນລະດັບໃດ:

| ສິ່ງຜົນດີແຕ່ລະດ້ານໃນລະດັບໃດ? | ລະດັບ | | | | |
|---|---|---|---|---|---|
| | ໜ້ອຍທີ່ສຸດ 0% | ໜ້ອຍ 25% | ປານກາງ 50% | ຫຼາຍ 75% | ຫຼາຍທີ່ສຸດ 100% |
| 1. ລາຍຮັບຂອງຄົວເຮືອນ | | | | | |
| 2. ການເຂົ້າເຖິງການສຶກສາຂອງສະມາຊິກໃນຄົວເຮືອນຫຼາຍຂຶ້ນ | | | | | |

| | | | | | |
|---|---|---|---|---|---|
| 3. ການເຂົ້າເຖິງສາທາລະນະສຸກຫຼາຍຂຶ້ນ (ເນື່ອງຈາກມີລາຍຮັບຫຼາຍຂຶ້ນ) | | | | | |
| 4. ມີໂອກາດຊື້ / ຄອບຄອງຊັບສິນຫຼາຍຢ່າງ (ເຊັ່ນ: ຊື້ລົດ, ຊື້ເຮືອນ, .........) | | | | | |
| 5. ມີໂອກາດໃນການດຳເນີນ ຫຼື ຂະຫຍາຍທຸລະກິດໃຫ້ໃຫຍ່ຂຶ້ນ (ເນື່ອງຈາກມີທຶນ ແລະ ແນມເຫັນຊ່ອງທາງຈາກການເຮັດການຄ້າ-ຂາຍ) | | | | | |
| 6. ມີຄວາມສາມາດປະກອບສ່ວນພັນທະສ່ວນລວມໃນຊຸມຊົນຫຼາຍຂຶ້ນ | | | | | |

18. ໂດຍລວມແລ້ວ, ທ່ານຄິດວ່າ ການຄ້າ-ຂາຍຂ້າມແດນ ສາມາດຕອບໂຈດການດຳລົງຊີວິດຂອງຄົວເຮືອນທ່ານໄດ້ແທ້ບໍ່?

…………………….. …………………….. …………………….. …………………….. …………………….. …………………….. ……………………..

…………………….. …………………….. …………………….. …………………….. …………………….. …………………….. ……………………..

19. ທ່ານຄິດວ່າ ຄົວເຮືອນຂອງທ່ານພົບບັນຫາ ແລະ ຂໍ້ຫຍຸ້ງຍາກຫຍັງແດ່ ໃນການຄ້າ-ຂາຍຂ້າມແດນ?

01) ການເຂົ້າເຖິງແຫຼ່ງທຶນ 02) ພື້ນຖານໂຄງລ່າງຊາຍແດນຍັງບໍ່ດີເທົ່າທີ່ຄວນ 03) ຄ່າໃຊ້ຈ່າຍໃນການຂົນສົ່ງສູງ 04) ການເຂົ້າເຖິງອັດຕາແລກປ່ຽນທີ່ເປັນທຳ

05) ອື່ນໆ……..........................................................................................................................................................................……..

20. ທ່ານມີຂໍ້ສະເໜີຫຍັງແດ່ ທີ່ຢາກໃຫ້ພາກສ່ວນກ່ຽວຂ້ອງຊ່ວຍເຫຼືອເພື່ອແກ້ໄຂສິ່ງທ້າທາຍເຫຼົ່ານີ້?

…………………….. …………………….. …………………….. …………………….. …………………….. …………………….. ……………………..

…………………….. …………………….. …………………….. …………………….. …………………….. …………………….. ……………………..

(ຂໍຂອບໃຈ)

ແບບສອບຖາມ (ຜູ້ປະກອບການ)

1. ແຂວງ: ………………………………………………………..

2. ຊື່ :………………………………………………………………..

3. ເພດ: 1) ຍິງ 2) ຊາຍ

4. ອາຍຸ: …………………..

5. ຕຳແໜ່ງ:…………………………………………………………

6. ເບີໂທ:…………………………………………………………….

7. ຊື່ອົງກອນ/ບໍລິສັດ:……………………………………………...

8. ທ່ານໄດ້ດຳເນີນກິດຈະການແຕ່ປີໃດ? ……………………………………

9. ບໍລິສັດຂອງທ່ານດຳເນີນທຸລະກິດ ກ່ຽວກັບຫຍັງ?

(1) ການຄ້າ;

(2) ດ້ານກະສິກຳ;

(3) ທຸລະກິດຂົນສົ່ງ;

(4) ການທ່ອງທ່ຽວ;

(5) ອື່ນໆ.......................................................................................

10. ຈຳນວນພະນັກງານທັງໝົດ: ………………………ຍິງ …………………

ບໍລິສັດຂອງທ່ານ ໄດ້ເຮັດການຄ້າ-ຂາຍ ກັບຕ່າງປະເທດບໍ່? 1) ແມ່ນ 2) ບໍ່ແມ່ນ

11. ປະເທດໃດທີ່ບໍລິສັດຂອງທ່ານໄດ້ດຳເນີນການຄ້າຂາຍສ່ອນໃຫຍ່ນຳ (3 ປະເທດ)? ………………………

12. ສິນຄ້າທີ່ບໍລິສັດຂອງທ່ານໄດ້ເຮັດການຄ້າ-ຂາຍຂ້າມແດນ ມີຫຍັງແດ່ (3 ອັນດັບ)?

……………………………………………………………………………………………

……………………………………………………………………………………………

13. ຕາມທັດສະນະຂອງທ່ານ ປັດໄຈທີ່ສົ່ງຜົນຕໍ່ກັບການຄ້າຂ້າມແດນ ແມ່ນຫຍັງ?

(1) ກົດລະບຽບ, ຂໍ້ບັງຄັບ, ກົດໝາຍ;

(2) ຂັ້ນຕອນການແລ່ນເອກະສານທີ່ຊັບຊ້ອນ ແລະ ໃຊ້ເວລາ;

(3) ເຕັກໂນໂລຊີນຳໃຊ້ເຂົ້າໃນການຜະລິດ;

(4) ການກວດກາສິນຄ້າ (QC);

(5) ການຈັດໝວດສິນຄ້າທີ່ແຕກຕ່າງກັນ;

(6) ຕົ້ນທຶນການຜະລິດ;

(7) ໄລຍະເວລາການຂົນສົ່ງ;

(8) ພື້ນຖານໂຄງລ່າງບໍ່ພຽງພໍ;

(9) ການຊຳລະສະສາງ;

(10) ການສະໜອງວັດຖຸດິບ;

(11) ແຫຼ່ງທຶນ;

(12) ການສະໜັບສະໜູນຈາກພາກລັດ; (13) ອື່ນໆ......................................

14. ທ່ານຄິດວ່າບັນຫາລາຄາສິນຄ້າແພງ ທີ່ ສປປ ລາວ ກຳລັງປະເຊີນຢູ່ໃນປະຈຸບັນໄດ້ສົ່ງຜົນກະທົບ ຕໍ່ການດຳເນີນທຸລະກິດຂອງທ່ານ ນລະດັບໃດ?

☐ ບໍ່ກະທົບ ☐ ກະທົບໜ້ອຍ ☐ ປານກາງ ☐ ກະທົບສົມຄວນ ☐ ກະທົບຫຼາຍ

15. ທ່ານພໍຮູ້ຈັກກ່ຽວກັບ ອຸປະສັກທາງການຄ້າທີ່ບໍ່ແມ່ນພາສີ-ອາກອນ (NTBs) ບໍ່?

☐ ບໍ່ຮູ້ ☐ ພໍຮູ້ຢູ່ ☐ ຮູ້ຫຼາຍ

16. ໃນທັດສະນະຂອງທ່ານ, ອຸປະສັກ/ຂໍ້ກີດກັ້ນທາງການຄ້າທີ່ບໍ່ແມ່ນພາສີ-ອາກອນອັນໃດແດ່ທີ່ ສົ່ງຜົນກະທົບດ້ານລົບ (-) ຕໍ່ອົງກອນ / ທຸລະກິດຂອງທ່ານ ໃນປະຈຸບັນ?

………………………………………………………………………………………………

………………………………………………………………………………………………

………………………………………………………………………………………..........

17. ອຸປະສັກທາງການຄ້າທີ່ບໍ່ແມ່ນພາສີ-ອາກອນ ທີ່ທ່ານລະບຸໃນ ຂໍ້ 17 ໄດ້ສົ່ງຜົນກະທົບຄືແນວໃດຕໍ່ການດຳເນີນທຸລະກິດຂອງທ່ານ ໂດຍສະເພາະຕິດພັນກັບຕົ້ນທຶນການຜະລິດ, ອຳນາດການແຂ່ງຂັນ, ການເຂົ້າເຖິງຕະຫຼາດ?

………………………………………………………………………………………………

………………………………………………………………………………………………

...…………………………………………………………………………………………

18. ໃນໄລຍະຜ່ານມາ, ທ່ານ ຫຼື ອົງກອນຂອງທ່ານ ໄດ້ມີມາດຕະການຮັບມືຄືແນວໃດ ເພື່ອຫຼຸດຜ່ອນຜົນກະທົບຈາກອຸປະສັກທາງການຄ້າທີ່ບໍ່ແມ່ນພາສີ-ອາກອນ ດັ່ງທີ່ໄດ້ລະບຸໄວ້ໃນ ຂໍ້ 17 ເພື່ອໃຫ້ກິດຈະກຳທາງເສດຖະກິດ ສາມາດດຳເນີນຕໍ່ໄປໄດ້?

………………………………………………………………………………………………

………………………………………………………………………………………………

………………………………………………………………………………………………

19. ທ່ານຢາກສະເໜີຫຍັງຕໍ່ກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຊ່ວຍແກ້ໄຂບັນຫາອຸປະສັກທາງການຄ້າທີ່ບໍ່ແມ່ນພາສີ-ອາກອນ ຢ່າງມີປະສິດທິຜົນ?

………………………………………………………………………………………………

………………………………………………………………………………………………

20. ຂໍ້ສະເໜີອື່ນໆ (ຖ້າມີ)?

………………………………………………………………………………………………

………………………………………………………………………………………………

(ຂໍຂອບໃຈ ສຳລັບການຮ່ວມມື)

# <u>ແບບສອບຖາມຂໍ້ມູນຂັ້ນບ້ານ</u>

ວັນທີສຳພາດ ____________________________

ຊື່ ຜູ້ຕອບ______________________________ 1. ນາຍບ້ານ 2. ຮອງນາຍບ້ານ 3. ອື່ ນໆ

ເບີໂທຜູ້ຕອບ___________________________________

ຊື່ ຜູ້ສຳພາດ __________________________________

ເມືອງ ____________________________________

ບ້ານ ___________________________________

ຈຳນວນຄົວເຮືອນທັງໝົດພາຍໃນບ້ານ ............................ຄົວເຮືອນ

ຈຳນວນກຳລັງແຮງງານ ອາຍຸ 15-64 ປີ ພາຍໃນບ້ານ ………………………… ຄົນ / ຍິງ……… ຄົນ

ຈຳນວນຄົວເຮືອນທຸກຍາກທັງໝົດພາຍໃນບ້ານ ..........................ຄົວເຮື ອນ

ຈຳນວນຄົວເຮືອນທີ່ເຮັດວຽກກັບລັດ (ລວມທັງທະຫານ / ຕຳຫຼວດ) … .....................ຄົວເຮືອນ

ຈຳນວນຄົວເຮືອນທີ່ມີສະມາຊິກໄປເຮັດວຽກຢູ່ຕ່າງປະເທດ … .....................ຄົວເຮືອນ

ຈຳນວນຄົນທີ່ອອກໄປເຮັດວຽກຢູ່ຕ່າງປະເທດ … ............ຄົນ / ຍິງ……ຄົນ

ເຜົ່າຊົນຕົ້ນຕໍຂອງຄົວເຮືອນພາຍໃນບ້ານ 1………… 2……… 3……………

ອາຊີບຕົ້ນຕໍຂອງຄົວເຮືອນພາຍໃນບ້ານ 1…………… 2………… 3………………

ແຫຼ່ງລາຍຮັບຕົ້ນຕໍຂອງຄົວເຮືອນພາຍໃນບ້ານນ (3 ແຫຼ່ງ) 1………… 2………… 3……………

<u>I. ສະພາບທົ່ວໄປດ້ານເສດຖະກິດ</u>

1.1. ໂຄງການເພື່ອການພັດທະນາພາຍໃນບ້ານ

| | ຈຳນວນໂຄງການ | | | |
|---|---|---|---|---|
| 1= ໂຄງການສົ່ງເສີມກະສິກຳ | 0 | 1 | 2 | 3 |
| 2= ໂຄງການຊົນລະປະທານ | 0 | 1 | 2 | 3 |
| 3= ໂຄງການສົ່ງເສີມຫັດຖະກຳ (ODOP) | 0 | 1 | 2 | 3 |
| 4= ໂຄງການຖົງຢາປະຈຳບ້ານ | 0 | 1 | 2 | 3 |
| 5= ໂຄງການປໍ້ານໍ້າ (ນໍ້າລິນ) / ນໍ້າສະອາດ | 0 | 1 | 2 | 3 |
| 6=ໂຄງການສົ່ງເສີມວິຊາຊີບ / ພັດທະນາສີມືແຮງງານ | 0 | 1 | 2 | 3 |
| 7=ໂຄງການພັດທະນາຊຸມຊົນ (ລະບຸລະອຽດວ່າພັດທະນາດ້ານໃດ?) | 0 | 1 | 2 | 3 |
| 8=ອື່ນໆ……………………………… | 0 | 1 | 2 | 3 |

## II. ພື້ນຖານໂຄງລ່າງ

| 1. ໄລຍະຫ່າງລະຫວ່າງບ້ານຫາທາງປູຢາງ | ລົດໃຫຍ່ສາມາດເຂົ້າເຖິງບ້ານໄດ້ຈັກ ລະດູ? | | ໄລຍະລະຫວ່າງບ້ານ ລະຫວ່າງບ້ານ-ຫ້ອງການປົກຄອງເມືອງ | ໄລຍະລະຫວ່າງບ້ານ ລະຫວ່າງບ້ານ-ຫ້ອງການປົກຄອງແຂວງ |
|---|---|---|---|---|
| ___________km | 1 ລະດູ | 2 ລະດູ | …...............km | .....................km |

2. ຈາກບ້ານຫາດ່ານຕ່າງໆ: ດ່ານສາກົນ ……...…Km, ດ່ານປະເພນີ…............…..Km, ດ່ານອື່ນໆ.................Km

| ມີໄຟຟ້າບໍ່? | ມີນ້ຳປະປາດື່ມບໍ່? | ແຫຼ່ງນ້ຳໃຊ້ຕົ້ນຕໍ | ມີຕະຫຼາດຈັກແຫ່ງພາຍໃນບ້ານ? ເປີດທຸກມື້ | ເປີດຕາມລະດູການ |
|---|---|---|---|---|
| 1= ມີ<br>0= ບໍ່ມີ | 1= ມີ<br>0= ບໍ່ມີ | 1 = ນ້ຳກອັກ (ນ້ຳ ປະປາ)<br>2 = ນ້ຳບາດານ ຫຼື ນ້ຳລິນ<br>3 = ນ້ຳສ້າງ<br>4 = ອື່ນໆ | 1= ມີ.......ແຫ່ງ<br>0 = ບໍ່ມີ | 1= ມີ<br>0= ບໍ່ມີ |

3. ມີສາຂາທະນາຄານ ແລະ ສະຖາບັນການເງິນພາຍໃນບ້ານບໍ?

1. ມີ……….ຈຳນວນ ……….ແຫ່ ງ 2. ບໍ່ມີ

4. ມີກອງທຶນພັດທະນາບ້ານບໍ? 1. ມີ 2. ບໍ່ມີ

5. ມີແຫຼ່ງເງິນກູ້ອື່ນໆບໍ່? 1. ມີ 2. ບໍ່ມີ *ຖ້າມີ (ລະບຸ): ............................*

6. ພາຍໃນຂອບເຂດບ້ານທີ່ລັດສະໝີ 10 ກມ, ມີໂຮງຈັກໂຮງງານທີ່ມີການຈ້າງງານແຕ່ 10 ຄົນຂຶ້ນໄປບໍ່?

1. ............ ມີ; ຈຳນວນ…………ແຫ່ງ 2. ບໍ່ມີ

- ມີຈຳນວນ...........ແຫ່ງ;

ໃຫ້ລະບຸປະເພດໂຮງງານດັ່ງກ່າວດ້ວຍ: 1.) .........................................; 2.)...............................;

3.)............................................; 4.) ......................................

7. ບ້ານໄດ້ມີນະໂຍບາຍສົ່ງເສີມຫຍັງແດ່ຕໍ່ກັບ ຜູ້ປະກອບການຄ້າຂາຍຂ້າມແດນ ໃນໄລຍະຜ່ານມາ?

……………………………………………………………………………………………………
……………………………………………………………………………………………………
……………………………………………………………………………………………………
……………………………………………………………………………………………………

8. ຕາມທັດສະນະຂອງອຳນາດການປົກຄອງບ້ານ ເຫັນວ່າ: ສະພາບການຄ້າຂາຍຊາຍແດນ ໂດຍສະເພາະການຄ້າຊາຍແດນນອກລະບົບເປັນຄືແນວໃດ? ແລະ ໄດ້ສິ່ງຜົນຄືແນວໃດຕໍ່ສະພາບການພັດທະນາເສດຖະກິດ-ສັງຄົມ ໂດຍລວມຂອງບ້ານ? ທັງທາງດ້ານລາຍຮັບຂອງປະຊາຊົນ (ປະເມີນສັດສ່ວນຄົວເຮືອນທີ່ຄ້າຂາຍຊາຍແດນ ຈັກ%? ປະເພດສິນຄ້າທີ່ປະຊາຊົນຄ້າຂາຍສ່ວນໃຫຍ່ ມີຫຍັງແດ່ ? ປະລິມານການຄ້າ ຂາຍຊາຍແດນໃນລະດັບໃດ?)

……………………………………………………………………………………………………

……………………………………………………………………………………………………

……………………………………………………………………………………………………

ສະຖາບັນຄົ້ນຄວ້າວິໄຈການພັດທະນາ
DRI
Development Research Institute

+856 21254826

https://dri.gov.la/

5th Floor MPI Building